ຄະນະໂຄສະນາອົບຮົມສູນກາງພັກ

# ເອກະສານ

## ເຊື່ອມຊຶມ ແລະ ຜັນຂະຫຍາຍ ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ

( ສໍາລັບພະນັກງານຫຼັກແຫຼ່ງ )

2026

ຄະນະໂຄສະນາອົບຮົມສູນກາງພັກ

# ເອກະສານ

## ເຊື່ອມຊຶມ ແລະ ຜັນຂະຫຍາຍ
## ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ

( ສໍາລັບພະນັກງານຫຼັກແຫຼ່ງ )

2026

**ສາລະບານ**

- ຄຳສັ່ງຂອງຄະນະເລຂາທິການສູນກາງພັກ ..........
- ຄຳແນະນຳຂອງຄະນະໂຄສະນາອົບຮົມສູນກາງພັກ ..........
- ອະທິບາຍຄຳຂວັນກອງປະຊຸມໃຫຍ່ ..........
I. ຄວາມໝາຍສຳຄັນ ຂອງກອງປະຊຸມໃຫຍ່ .......... 3
II. ຕີລາຄາໂດຍສັງເຂບ ໝາກຜົນ ຂອງການຈັດຕັ້ງປະຕິບັດ
ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ .......... 4
1. ດ້ານດີ .......... 4
2. ສາເຫດດ້ານດີ .......... 5
3. ບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງຕົ້ນຕໍ .......... 6
4. ສາເຫດທີ່ພາໃຫ້ມີຈຸດອ່ອນ ແລະ ຂໍ້ຄົງຄ້າງ .......... 9
5. ບົດຮຽນຕົ້ນຕໍ ໃນໄລຍະຈັດຕັ້ງປະຕິບັດ
ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ .......... 10
III. ເນື້ອໃນຕົ້ນຕໍໃນຕໍ່ໜ້າມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ .......... 11
1. ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາໂຄງການການເມືອງ ຂອງພັກ ສະບັບທີ 3 .......... 11
2. ເພື່ອເຮັດໃຫ້ໂຄງການການເມືອງ ຂອງພັກ
ໄດ້ຮັບການຈັດຕັ້ງຜັນຂະຫຍາຍສູ່ລວງເລິກນັ້ນ .......... 13
3. 10 ທິດທາງວຽກງານຈຸດສຸມ ແຕ່ລະຂົງເຂດ .......... 15
4. ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມ
ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໂດຍກຳນົດ 6 ເປົ້າໝາຍໃຫຍ່ .......... 27
IV. ກອງປະຊຸມໃຫຍ່ ໄດ້ເປັນເອກະພາບໃນລະດັບສູງ
ຮັບຮອງເອົາກົດລະບຽບຂອງພັກ ສະບັບປັບປຸງ .......... 29
V. ກອງປະຊຸມໃຫຍ່ ໄດ້ເລືອກຕັ້ງເອົາ
ຄະນະບໍລິຫານງານສູນກາງພັກ ຊຸດໃໝ່ (ສະໄໝທີ XII) .......... 30
VI. ບາງມາດຕະການຍູ້ແຮງການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ .......... 30
1. ປະຕິຮູບລະບອບ-ລະບຽບການຕ່າງໆ ໃຫ້ໂປ່ງໃສ, ຫຼຸດຜ່ອນຂອດຂັ້ນ .......... 30
2. ປຸກລະດົມ ແລະ ຍູ້ແຮງ ຂະບວນການພັດທະນາປະເທດຊາດ ໃຫ້ຂຶ້ນສູ່ລະດັບສູງ .......... 31
3. ປ່ຽນແປງໃໝ່ຢ່າງຮອບດ້ານ ວຽກງານຄຸ້ມຄອງ..........31

ພັກປະຊາຊົນປະຕິວັດລາວ

ຄະນະເລຂາທິການສູນກາງພັກ

ເລກທີ 02 /ຄລສພ

ນະຄອນຫຼວງວຽງຈັນ, ວັນທີ 30 ມັງກອນ 2026

# ຄຳສັ່ງ

## ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ

ເຖິງ: ຄະນະພັກ ບັນດາກະຊວງ, ອົງການ, ຄະນະພັກນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ແມ່ນເຫດການການເມືອງສຳຄັນປະຫວັດສາດຂອງພັກ, ຂອງຊາດ ເປັນກອງປະຊຸມແຫ່ງການສືບຕໍ່ຍຶດໝັ້ນ ແລະ ເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກເຮົາ ໃຫ້ເຂົ້າສູ່ລວງເລິກ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນກ້າວຂຶ້ນສັງຄົມນິຍົມ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ໄດ້ເສີມຂະຫຍາຍທາດແທ້ມູນເຊື້ອອັນດີງາມ ແລະ ຜົນງານອັນລ້ຳເລີດຂອງພັກ, ກອງປະຊຸມໃຫຍ່ຂອງພັກເຮົາ ໄດ້ພິຈາລະນາ, ຮັບຮອງເອົາໂຄງການການເມືອງ ສະບັບທີ 3 ຂອງພັກ, ສັງລວມຄືນການປະຕິບັດພາລະກຳປະຫວັດສາດ ແລະ ຖອດຖອນບົດຮຽນດ້ານທິດສະດີ, ພຶດຕິກຳ ຕະຫຼອດໄລຍະ 70 ປີ ແຫ່ງການນຳພາ ພາລະກິດຕໍ່ສູ້ກູ້ຊາດ ແລະ ບູລະນະ ລະບອບປະຊາທິປະໄຕປະຊາຊົນ; ການປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ ໃນ 40 ປີຜ່ານມາ ເຊິ່ງໄດ້ນຳເອົາຄວາມມີຊີວິດຊີວາ ມາໃຫ້ສັງຄົມລາວ; ກຳລັງແຮງບົ່ມຊ້ອນຂອງທົ່ວທັງຊາດ ໄດ້ຮັບການຂຸດຄົ້ນ ແລະ ເສີມຂະຫຍາຍຢ່າງແຂງແຮງ; ໂສມໜ້າຂອງປະເທດເຮົາ ມີການຫັນປ່ຽນໄປໃນທາງທີ່ຕັ້ງໜ້າ, ເສດຖະກິດແຫ່ງຊາດໄດ້ຫັນປ່ຽນຢ່າງຈະແຈ້ງ ຈາກພື້ນຖານເສດຖະກິດທຳມະຊາດ ແລະ ເຄິ່ງທຳມະຊາດ ໄປສູ່ພື້ນຖານເສດຖະກິດຕະຫຼາດ ທີ່ມີການນຳພາຂອງພັກ, ການຄຸ້ມຄອງ-ດັດສົມຂອງລັດ ແລະ ການພົວພັນກັບຕ່າງປະເທດໄດ້ຮັບການເປີດກວ້າງ, ເຊື່ອມໂຍງເຂົ້າກັບ ພາກພື້ນ ແລະ ສາກົນ ເປັນກ້າວໆ.

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ແມ່ນຂີດໝາຍແຫ່ງການເຕີບໃຫຍ່ ຂະຫຍາຍຕົວຂອງພັກເຮົາ, ແມ່ນບັ້ນດຳເນີນຊີວິດການເມືອງພາຍໃນພັກ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ ແລະ ເປັນລະບົບ ໂດຍເລີ່ມຈາກການຫັນປ່ຽນດ້ານແນວຄິດ-ຈິນຕະນາການ ສູ່ການກະທຳຕົວຈິງ ເພື່ອແກ້ໄຂຈຸດອ່ອນ ແລະ ຂໍ້ຄົງຄ້າງ ໃຫ້ເກີດການຫັນປ່ຽນໃໝ່ ທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ແນໃສ່ຍົກສູງບົດບາດ, ຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ, ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ ຂອງປະຊາຊົນໃນຊາດ, ເດັດດ່ຽວປົກປັກຮັກສາ ແລະ ພັດທະນາປະເທດຊາດ ກ້າວຂຶ້ນສູ່ສັງຄົມນິຍົມ.

ຜົນສຳເລັດ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແມ່ນສັດຈະ

ທຳ ແຫ່ງການນຳພາຂອງພັກ. ພັກເຮົາ ມີຄວາມຕັດສິນໃຈສູງ, ມີຄວາມກ້າຫານປະເຊີນໜ້າກັບບັນຫາຕົວຈິງ, ກ້າຮັບເອົາຄວາມເປັນຈິງ, ມີຄວາມຮັບຮູ້ຕໍ່ຂໍ້ບົກພ່ອງ ແລະ ສິ່ງທ້າທາຍໃນອາດີດ, ປັດຈຸບັນ ແລະ ມີຄວາມມຸ່ງໝັ້ນຫັນປ່ຽນໄປສູ່ອານາຄົດທີ່ດີງາມ. ໜ້າທີ່ໃໝ່ຂອງການປະຕິວັດແມ່ນເລັ່ງທວງໃຫ້ພັກເຮົາ ຕ້ອງເພີ່ມຄວາມຮັບຜິດຊອບໃຫ້ສູງຂຶ້ນກວ່າເກົ່າ ໃນການສ້າງການຫັນປ່ຽນຢ່າງແຂງແຮງ ເລິກເຊິ່ງ ຮອບດ້ານ ໃນການນຳພາ ແລະ ກຳອຳນາດຂອງຕົນ.

ຍ້ອນແນວນັ້ນ ຄະນະເລຂາທິການສູນກາງພັກ ອອກຄຳສັ່ງ ດັ່ງນີ້:

**I. ທິດນຳ ແລະ ຈຸດປະສົງ, ລະດັບຄາດໝາຍ ໃນການຈັດຕັ້ງເຊື່ອມຊຶມ ແລະ ພັນລະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.**

**1. ທິດນຳ:**

① ເພີ່ມທະວີການກຳແໜ້ນເນື້ອໃນຈຸດໝາຍ, ທິດທາງ, ແຜນນະໂຍບາຍ ສືບຕໍ່ການ “ປົກປັກຮັກສາ ແລະ ສ້າງສາ ລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ” ໃນໂຄງການການເມືອງ ສະບັບທີ 3 ແລະ ພັນລະຫຍາຍຢ່າງແຮງແຂງ ໃຫ້ເປັນຮູບປະທຳ ແລະ ໜັກແໜ້ນ. ເດັດດ່ຽວຕັດສິນໃຈສູ້ຊົນສ້າງປະເທດເຮົາ ເປັນປະເທດກຳລັງພັດທະນາ ທີ່ມີລາຍຮັບປານກາງສູງ ຫຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດທີ່ທັນສະໄໝ, ກຳລັງການຜະລິດ ໄດ້ຮັບການພັດທະນາຮອບດ້ານ ໂດຍມີການພົວພັນການຜະລິດທີ່ສອດຄ່ອງ ແລະ ກ້າວໜ້າ, ຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໄດ້ມີພື້ນຖານອັນໜັກແໜ້ນ ກ້າວສູ່ຄວາມອີ່ມໜຳສຳລານ.

② ຮັບປະກັນຍົກສູງຄວາມສາມາດນຳພາ ທີ່ເຂັ້ມແຂງຂອງພັກ, ສ້າງການຫັນປ່ຽນໃໝ່ໃນການເຜີຍແຜ່, ເຊື່ອມຊຶມ, ສ້າງຄວາມຮັບຮູ້-ເຂົ້າໃຈ, ກຳແໜ້ນ ແລະ ພັນລະຫຍາຍເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເຂົ້າສູ່ວຽກງານຕົວຈິງ ຂອງຂະແໜງການສູນກາງ ແລະ ທ້ອງຖິ່ນ-ຮາກຖານ, ເຫັນບັນຫາ ແລະ ຄວາມຮັບຜິດຊອບຂອງຕົນ ເພື່ອແກ້ໄຂບັນຫາທີ່ເກີດຂຶ້ນໃຫ້ໄດ້.

③ ຕ້ອງຫັນປ່ຽນໃໝ່, ວິທີການ, ຮູບການ ການເຜີຍແຜ່, ເຊື່ອມຊຶມ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ເລິກເຊິ່ງ, ທົ່ວເຖິງ, ແທດເຖິງ, ກວ້າງຂວາງ ດ້ວຍຫຼາຍຮູບຫຼາຍສີ, ຫຼາຍເຄື່ອງມືທີ່ສ້າງຄວາມຮັບຮູ້-ເຂົ້າໃຈ ແລະ ໃຫ້ກາຍເປັນການກະທຳຕົວຈິງ.

④ ການເຜີຍແຜ່, ເຊື່ອມຊຶມ ແລະ ພັນລະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງສະຫາຍ ເລຂາຄະນະພັກ ກໍຄື ຂອງຄະນະພັກ ທຸກຂັ້ນ.

⑤ ຕ້ອງສົມທົບແໜ້ນ ແລະ ມີຄວາມກົມກຽວ ລະຫວ່າງ ການເຊື່ອມຊຶມເອກະສານຂອງພັກ ກັບເອກະສານຂອງຂະແໜງການ ແລະ ທ້ອງຖິ່ນ; ເອົາການເຊື່ອມຊຶມ ແລະ ພັນລະຫຍາຍໄປພ້ອມໆກັນ. ການພັນລະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕ້ອງຕິດພັນກັບ ການສ້າງພື້ນຖານອັນໜັກແໜ້ນ ໃຫ້ແກ່ການປະຕິບັດຄາດໝາຍສູ້ຊົນທີ່ວາງອອກ ບັນລຸຜົນສຳເລັດ ແລະ ທັງເປັນການແກ້ໄຂບັນຫາຄົງຄ້າງ, ຂໍ້ບົກພ່ອງທີ່ເກີດຂຶ້ນ ໃຫ້ທັນການ ແລະ ມີປະສິດທິຜົນ.

**2. ຈຸດປະສົງ, ລະດັບຄາດໝາຍ:**

① ສືບຕໍ່ປັບປຸງ ຍົກສູງຫຼັກໝັ້ນການເມືອງ, ຍົກສູງນ້ຳໃຈເສຍສະຫຼະ ແລະ ຍຶດໝັ້ນອຸດົມ

ການປະຕິວັດຂອງຄະນະພັກ, ສະມາຊິກພັກ, ພະນັກງານຢ່າງເດັດດ່ຽວໜຽວແໜ້ນ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆ; ຕ້ານ ແລະ ແກ້ໄຂທັດສະນະຜິດເຂວຕ່າງໆ, ຕີຖອຍລັດທິຄຳພີຕາຍໂຕ, ອາດຍາສິດ, ເອກະຊົນ; ເດັດດ່ຽວແກ້ໄຂການເສື່ອມຖອຍດ້ານແນວຄິດ, ຄຸນທາດການເມືອງ, ຄຸນສົມບັດສົມທຳປະຕິວັດ ແລະ ແບບແຜນດຳລົງຊີວິດ ຂອງສະມາຊິກພັກ, ພະນັກງານ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກ ແລະ ພາຍໃນສັງຄົມ ໃຫ້ໜັກແໜ້ນຍິ່ງໆຂຶ້ນ.

② ເພື່ອສ້າງຄວາມເປັນເອກະພາບ ແລະ ຄວາມຕັດສິນໃຈສູງແຕ່ຫົວທີ ໃນການເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງ, ສ້າງຄວາມເຂົ້າໃຈ, ຮັບຮູ້ກ່ຽວກັບການສ້າງການຫັນປ່ຽນໃໝ່ ຂອງບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ໃນການຈັດຕັ້ງເຊື່ອມຊຶມ, ພັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ເພື່ອໃຫ້ເກີດການຫັນປ່ຽນດ້ານແນວຄິດຊີ້ນຳ, ການຈັດຕັ້ງ ແລະ ການເຄື່ອນໄຫວຕົວຈິງ ໃຫ້ວ່ອງໄວ, ແທດຕົວຈິງ ແລະ ມີປະສິດທິຜົນ, ນຳເອົາຜົນປະໂຫຍດຕົວຈິງ ມາໃຫ້ປະເທດຊາດ ແລະ ປະຊາຊົນ.

③ ເພື່ອເປັນບ່ອນອີງໃຫ້ແກ່ ຄະນະພັກ ບັນດາກະຊວງ, ອົງການ, ຄະນະພັກ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນທົ່ວປະເທດ ໃນການພັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ໃຫ້ເປັນແຜນງານ, ໂຄງການລະອຽດ ຕິດພັນກັບການພັນຂະຫຍາຍມະຕິກອງປະຊຸມໃຫຍ່ ແລະ ແຜນພັດທະນາຂະແໜງການ ແລະ ທ້ອງຖິ່ນຕົນ. ບົນຈິດໃຈດັ່ງກ່າວ, ຍູ້ແຮງການຈັດຕັ້ງພັນຂະຫຍາຍເຂົ້າສູ່ຊີວິດຕົວຈິງ ກາຍເປັນຂະບວນການອັນຟົດຟື້ນ, ກວ້າງຂວາງ ແລະ ແຂງແຮງ.

④ ແນໃສ່ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນທຸກຂົງເຂດວຽກງານ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ກໍຄື ໃນທົ່ວພັກ, ທົ່ວລັດ ແລະ ໃນທົ່ວສັງຄົມ ເປັນຕົ້ນແມ່ນສ້າງການຫັນປ່ຽນທາງດ້ານຄວາມຮັບຮູ້, ທັດສະນະ, ແນວຄິດ ແລະ ການກະທຳ ແນໃສ່ສົ່ງເສີມດ້ານດີ, ແກ້ໄຂຄວາມບົກພ່ອງ, ຂໍ້ຄົງຄ້າງ ແລະ ສິ່ງທ້າທາຍຕ່າງໆ ໃນໄລຍະຜ່ານມາ, ສ້າງໄດ້ຄວາມເຊື່ອໝັ້ນ ຂອງພະນັກງານ ແລະ ປະຊາຊົນ ຕໍ່ການນຳພາຂອງພັກ, ການບໍລິຫານຄຸ້ມຄອງຂອງລັດ; ສືບຕໍ່ນຳພາ-ຊີ້ນຳ ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ມີຄວາມຈະເລີນວັດທະນາ.

## II. ບັນດາເນື້ອໃນຕົ້ນຕໍ.

ເນື້ອໃນການເຊື່ອມຊຶມຄັ້ງນີ້, ນອກຈາກ ຄຳສັ່ງ ສະບັບນີ້ແລ້ວ, ຍັງປະກອບດ້ວຍ ① ໂຄງການການເມືອງ ສະບັບທີ 3; ② ລາຍງານການເມືອງ; ③ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X (2026-2030); ④ ກົດລະບຽບຂອງພັກ ສະໄໝທີ XII.

## III. ວິທີການຈັດຕັ້ງປະຕິບັດ.

ບົນຈິດໃຈບັນດາເອກະສານເຊື່ອມຊຶມ ກໍຄື ໂຄງການການເມືອງ ສະບັບທີ 3, ເນື້ອໃນລາຍງານການເມືອງຕໍ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ຄັ້ງທີ X, ກົດລະບຽບຂອງພັກ ສະໄໝທີ XII ນັ້ນ, ຄະນະພັກແຕ່ລະ

ຂັ້ນ ຕ້ອງໄດ້ຄົ້ນຄວ້າ; ເຊື່ອມຊຶມ, ກຳແໜ້ນ ແລະ ພັດທະນາຢ່າງເປັນອົງການຂະບວນເຂົ້າສູ່ວຽກງານຕົວຈິງ.

ໃນການເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ບາງບັນຫາ ດັ່ງນີ້:

1. ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕ້ອງຮັບປະກັນໃຫ້ທຸກເປົ້າໝາຍ ໄດ້ເຂົ້າຮ່ວມຢ່າງທົ່ວເຖິງ, ທັງຮັບປະກັນການອະທິບາຍເນື້ອໃນຢ່າງຮັດກຸມ, ມີຈຸດສຸມ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ພາຍໃຕ້ການນຳພາໂດຍກົງ ຂອງສະຫາຍ ກຳມະການສູນກາງພັກ ແລະ ເລຂາຄະນະພັກ ຢູ່ແຕ່ລະຂັ້ນ.

2. ໃຫ້ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ, ແຂວງ ຈັດຕັ້ງການເຊື່ອມຊຶມເອກະສານໃຫ້ສະມາຊິກ, ພະນັກງານຫຼັກແຫຼ່ງ ໃນທົ່ວອົງຄະນະພັກຂອງຕົນ ນັບແຕ່ມື້ອອກຄຳສັ່ງສະບັບນີ້ ເປັນຕົ້ນໄປ ແລະ ໃຫ້ສຳເລັດ ພາຍໃນເດືອນ ມີນາ 2026.

- ສຳລັບ ກະຊວງ, ອົງການໃດ ມີຈຳນວນພົນຫຼາຍ ກໍອາດຈະເຮັດເປັນ 2-3 ຊຸດ, ມອບໃຫ້ສະຫາຍ ເລຂາຄະນະພັກ ເປັນຜູ້ຮັບຜິດຊອບ; ຈາກນັ້ນ ມອບໃຫ້ແຕ່ລະຮາກຖານພັກ ສືບຕໍ່ນຳໄປເຊື່ອມຊຶມ ແລະ ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສ່ວນຢູ່ຂັ້ນທ້ອງຖິ່ນ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ພະນັກງານຫຼັກແຫຼ່ງຂັ້ນນະຄອນຫຼວງວຽງຈັນ-ແຂວງ, ເລຂາພັກນະຄອນ-ເມືອງ, ຄະນະປະຈຳພັກນະຄອນ-ເມືອງ ໂດຍແມ່ນ ສະຫາຍເລຂາຄະນະພັກນະຄອນຫຼວງວຽງຈັນ-ແຂວງ ເປັນຜູ້ຮັບຜິດຊອບ. ຈາກນັ້ນ, ມອບໃຫ້ສະຫາຍເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ ຂອງຂະແໜງການອ້ອມຂ້າງ ນະຄອນຫຼວງ-ແຂວງ ສືບຕໍ່ນຳໄປເຊື່ອມຊຶມ ແລະ ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

ສຳລັບຢູ່ຂັ້ນເມືອງ ແມ່ນມອບໃຫ້ ສະຫາຍ ເລຂາຄະນະພັກນະຄອນ-ເມືອງ ນຳໄປຈັດຕັ້ງເຊື່ອມຊຶມ ຢູ່ຂັ້ນຂອງຕົນ ໂດຍເຕົ້າໂຮມພະນັກງານຫຼັກແຫຼ່ງຂັ້ນເມືອງ, ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກຮາກຖານ ຂອງນະຄອນ-ເມືອງ ແລະ ຕາແສງ ເຂົ້າຮ່ວມ ແລະ ສືບຕໍ່ຄົ້ນຄວ້າ, ຜັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

ສຳລັບການເຜີຍແຜ່, ເຊື່ອມຊຶມ ໃຫ້ແກ່ປະຊາຊົນຢູ່ຂັ້ນບ້ານ ແມ່ນມອບໃຫ້ ສະຫາຍເລຂາຄະນະພັກຮາກຖານຕາແສງ ເປັນຜູ້ນຳພາຊີ້ນຳການຈັດຕັ້ງປະຕິບັດໃຫ້ແທດເໝາະກັບສະພາບຈຸດພິເສດ ແລະ ເງື່ອນໄຂຕົວຈິງຂອງແຕ່ລະບ່ອນ ພາຍໃຕ້ການຊີ້ນຳ ຂອງຄະນະປະຈຳພັກນະຄອນ-ເມືອງ.

3. ບັນດາສະຫາຍ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກແບ່ງກັນລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດຕົວຈິງ (ລະອຽດຈະມີແຜນ ແລະ ແຈ້ງໃຫ້ຊາບຕາມພາຍຫຼັງ).

4. ໃຫ້ຄະນະພັກແຕ່ລະຂັ້ນ ນຳໃຊ້ສື່ມວນຊົນປະເພດຕ່າງໆ ເຜີຍແຜ່ບັນດາເນື້ອໃນຕົ້ນຕໍຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ກໍຄື ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ. ພ້ອມກັນນັ້ນ ກໍເຜີຍແຜ່ຜົນສຳເລັດ ຂອງການຈັດຕັ້ງຜັນຂະຫຍາຍໃນແຕ່ລະໄລຍະ ຕິດພັນກັບນຳສະເໜີຜົນງານ, ຕົວແບບ ກໍຄື ບຸກຄົນດີເດັ່ນ ທີ່ເກີດຂຶ້ນໃນຂະບວນການຕົວຈິງ ໃນແຕ່ລະຂົງເຂດວຽກງານຢ່າງຕໍ່ເນື່ອງ ເພື່ອປຸກລະດົມຂະບວນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII

ຂອງພັກ ໃຫ້ຟົດຟື້ນ, ແຂງແຮງ ແລະ ໄດ້ຮັບຜົນສຳເລັດ ຕາມຄາດໝາຍທີ່ວາງອອກ.

5. ມອບໃຫ້ ຄະນະໂຄສະນາອົບຮົມສູນກາງພັກ ຄົ້ນຄວ້າອອກບົດແນະນຳລະອຽດ, ຄັດຈ້ອນ, ອະທິບາຍເນື້ອໃນສຳຄັນຕົ້ນຕໍ ຂອງມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ເພື່ອເຜີຍແຜ່, ໂຄສະນາໃຫ້ເປົ້າໝາຍຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນຮາກຖານ. ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ດຳເນີນເປັນໂຄງການຄົ້ນຄວ້າ, ສ້າງເປັນຫຼັກສູດ ແລະ ນຳເຂົ້າສິດສອນຢູ່ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ບັນດາໂຮງຮຽນການເມືອງ ແລະ ການປົກຄອງແຂວງ ໃນຂອບເຂດທົ່ວປະເທດ.

6. ມອບໃຫ້ຄະນະຈັດຕັ້ງສູນກາງພັກ ແລະ ຄະນະກວດກາສູນກາງພັກ ຮີບຮ້ອນອອກບົດແນະນຳ ການປະຕິບັດກົດລະບຽບຂອງພັກ ສະໄໝທີ XII ພ້ອມທັງໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກໄປພ້ອມກັບ ການເຊື່ອມຊຶມເນື້ອໃນສຳຄັນຕ່າງໆ ຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ. ພ້ອມນັ້ນ ກໍຄົ້ນຄວ້າອອກນິຕິກຳຕ່າງໆ ເພື່ອຜັນຂະຫຍາຍຂໍ້ກຳນົດໃນກົດລະບຽບຂອງພັກ ສະໄໝທີ XII ໃຫ້ເປັນອັນລະອຽດ ເພື່ອນຳສະເໜີຄະນະບໍລິຫານງານສູນກາງພັກ, ກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຕົກລົງ.

7. ມອບໃຫ້ກະຊວງການເງິນ ອອກຄຳແນະນຳ, ອະທິບາຍເນື້ອໃນສຳຄັນ ແລະ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ X ພ້ອມທັງຈັດພິມເປັນປຶ້ມ.

8. ມອບໃຫ້ຫ້ອງວ່າການສູນກາງພັກ ສົມທົບກັບພາກສ່ວນກ່ຽວຂ້ອງ ຊ່ວຍກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ຢ່າງເປັນປົກກະຕິ.

9. ພາຍຫຼັງໄດ້ຮັບຄຳສັ່ງສະບັບນີ້, ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ, ແຂວງ ຈົ່ງຮີບຮ້ອນປຶກສາຫາລື, ແບ່ງວຽກ, ແບ່ງຄວາມຮັບຜິດຊອບໃຫ້ກັນ ຢ່າງລະອຽດ, ຈະແຈ້ງ ແລະ ວາງແຜນຈັດຕັ້ງເຊື່ອມຊຶມ, ຜັນຂະຫຍາຍ ຢ່າງເປັນລະບົບ ແລະ ໃຫ້ທັນເວລາ ທັງໄດ້ຮັບຜົນດີ.

ຜ່ານການຈັດຕັ້ງປະຕິບັດ, ຖ້າມີບັນຫາຫຍຸ້ງຍາກ ໃຫ້ລາຍງານ ຄະນະເລຂາທິການສູນກາງພັກ ໂດຍຜ່ານ ຄະນະໂຄສະນາອົບຮົມສູນກາງພັກ, ຫ້ອງວ່າການສູນກາງພັກ, ຄະນະຈັດຕັ້ງສູນກາງພັກ, ຄະນະກວດກາສູນກາງພັກ ເພື່ອຮັບປະກັນໃຫ້ການຄົ້ນຄວ້າ, ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງນີ້ ໃຫ້ທັນເວລາ ແລະ ມີປະສິດທິຜົນ.

ຄະນະເລຂາທິການສູນກາງພັກ
ຜູ້ປະຈຳການ

ວິໄລ ຫຼວງຄຳຟອງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ

ເລກທີ 38/ຄອສພ

ນະຄອນຫຼວງວຽງຈັນ, ວັນທີ 3 ກຸມພາ 2026

# ຄຳແນະນຳ
# ກ່ຽວກັບການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ
# ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປະຊາຊົນປະຕິວັດລາວ

ເຖິງ: ຄະນະພັກ ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 02/ຄລສພ, ລົງວັນທີ 30 ມັງກອນ 2026 ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.
- ອີງຕາມພາລະບົດບາດ ຂອງຄະນະໂຄສະນາອົບຮົມສູນກາງພັກ ສະບັບເລກທີ 20/ກມສພ, ລົງວັນທີ 13 ຕຸລາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະໂຄສະນາອົບຮົມສູນກາງພັກ.

ຄະນະໂຄສະນາອົບຮົມສູນກາງພັກ ອອກຄຳແນະນຳກ່ຽວກັບ ຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ດັ່ງນີ້:

## I. ຈຸດປະສົງ, ລະດັບຄາດໝາຍ.

- ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດເນື້ອໃນຄຳສັ່ງ ຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ຖືກຕ້ອງ ສອດຄ່ອງ ແລະ ມີປະສິດທິຜົນ.
- ເພື່ອເຮັດໃຫ້ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ເປົ້າໝາຍຕ່າງໆ ມີຄວາມເຂົ້າໃຈເປັນເອກະພາບ ແລະ ຜັນຂະຫຍາຍໃຫ້ແທດເໝາະກັບສະພາບຕົວຈິງ.
- ເພື່ອສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃຫ້ແກ່ພະນັກງານ ໃນແຕ່ລະຂົງເຂດ ທັງຢູ່ສູນກາງ ແລະ ທ້ອງຖິ່ນ ຍົກສູງຄວາມຮັບຜິດຊອບຂອງຕົນໃນການຫັນແນວທາງ, ແຜນນະໂຍບາຍ, ເປົ້າໝາຍສູ້ຊົນ ໄປຜັນຂະຫຍາຍ ໃຫ້ເປັນຮູບປະທຳ ໄດ້ຮັບຜົນດີ.

II. ບັນດາເນື້ອໃນຕົ້ນຕໍ ການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ.

1. ຄໍາຂວັນ ຫຼື ຫົວຂໍ້ຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ: **"ຍົກສູງບົດບາດການນໍາພາ ທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ"**. ໃນນີ້ ການຍົກສູງບົດບາດການນໍາພາ ທີ່ເຂັ້ມແຂງຂອງພັກ ຍັງເປັນບັນຫາເລັ່ງທວງ ເພື່ອປະຕິບັດບົດບາດນໍາພາເປັນແກ່ນກາງໃນທົ່ວລະບົບການເມືອງ ທີ່ຮັບປະກັນຄຸນນະພາບ; ການຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ແມ່ນເນື້ອໃນສໍາຄັນ ໃນການບູລະນະລະບອບປະຊາທິປະໄຕປະຊາຊົນ, ສ້າງຄວາມສະຫງົບໝັ້ນຄົງ ໃຫ້ແກ່ປະຊາຊົນ ແລະ ປະເທດຊາດ; ການບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ ກໍເພື່ອເຮັດໃຫ້ເນື້ອໃນ ຂອງລະບອບປະຊາທິປະໄຕປະຊາຊົນ ໄດ້ຮັບການປັບປຸງເຂັ້ມແຂງໃນທຸກດ້ານ.

2. ສໍາລັບການຕີລາຄາໝາກຜົນ ການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ຜົນສໍາເລັດ ໃນວຽກງານທີ່ສໍາຄັນແຕ່ລະດ້ານ.

ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄັດຈ້ອນເປັນເນື້ອໃນເອກະສານເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິ XII, ໃນນັ້ນ ການຕີລາຄາໝາກຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໄດ້ຍົກໃຫ້ເຫັນ 7 ຜົນສໍາເລັດໃຫຍ່ທີ່ພົ້ນເດັ່ນ, ພ້ອມນັ້ນ ກໍຍົກໃຫ້ເຫັນ 7 ຈຸດອ່ອນ-ຂໍ້ຄົງຄ້າງ, 4 ສາເຫດຕົ້ນຕໍທີ່ພາໃຫ້ມີຂໍ້ຄົງຄ້າງ ແລະ 6 ບົດຮຽນທີ່ຖອດຖອນໄດ້. ເຊິ່ງແມ່ນການຕີລາຄາລວມຈາກສະພາບຕົວຈິງຂອງປະເທດເຮົາ, ຕໍ່ບັນຫາດັ່ງກ່າວ ກະຊວງ, ອົງການ ແລະ ທ້ອງຖິ່ນຕ່າງໆ ຕ້ອງເປັນເຈົ້າການ ໃນການເສີມຂະຫຍາຍຜົນສໍາເລັດດ້ານດີທີ່ຍາດມາໄດ້ ແລະ ຄົ້ນຄວ້າວາງມາດຕະການ ໃນການແກ້ໄຂຈຸດອ່ອນ-ຂໍ້ຄົງຄ້າງດັ່ງກ່າວ ເພື່ອເຮັດແນວໃດ ຢູ່ຂະແໜງການ ແລະ ທ້ອງຖິ່ນຕົນ ໃຫ້ມີການຫັນປ່ຽນທີ່ຕັ້ງໜ້າຢ່າງແທ້ຈິງ.

ວຽກງານຄົ້ນຄວ້າທິດສະດີ, ສະຫຼຸບພຶດຕິກໍາຂອງພັກ ໄດ້ປະເມີນຄືນ 9 ປະຖົມປັດໄຈ ກ້າວຂຶ້ນສູ່ສັງຄົມນິຍົມ; ໄດ້ສະຫຼຸບ 40 ປີ ການປະຕິບັດແນວທາງປ່ຽນໃໝ່ຮອບດ້ານ ມີຫຼັກການຂອງພັກ; ພິເສດໄດ້ຄົ້ນຄວ້າສ້າງໂຄງການການເມືອງ ສະບັບທີ 3 ຂອງພັກ ປະຊາຊົນປະຕິວັດລາວ ເພື່ອກາຍເປັນແນວທາງການເມືອງ ແລະ ຍຸດທະສາດຂອງພັກ ໃນການສືບຕໍ່ນໍາພາປະເທດຊາດ ກ້າວຂຶ້ນສູ່ສັງຄົມນິຍົມ.

3. ທິດທາງ ແລະ ຄາດໝາຍຕົ້ນຕໍ ໃນການສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ ເພື່ອກ້າວເດີນສູ່ຈຸດໝາຍສັງຄົມນິຍົມ.

- ຕ້ອງກໍາແໜ້ນຈຸດໝາຍ, ທິດທາງ ແລະ ຄາດໝາຍ ເພື່ອຜັນຂະຫຍາຍເນື້ອໃນ ການບູລະນະລະບອບປະຊາທິປະໄຕປະຊາຊົນ ທີ່ກໍານົດອອກ ໃນໂຄງການການເມືອງ ຂອງພັກ ສະບັບທີ 3 ໃຫ້ເປັນລະບົບ, ຕໍ່ເນື່ອງ ແລະ ໜັກແໜ້ນ.

- ບົນພື້ນຖານແຕ່ນີ້ ຮອດປີ 2030 ພວກເຮົາຕ້ອງເດັດດ່ຽວຍຶດໝັ້ນ ແລະ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ ດ້ວຍການສືບຕໍ່ບຸກທະລຸທັງ 4 ດ້ານ ໃຫ້ແຂງແຮງ, ເລິກເຊິ່ງ ແລະ ເປັນຮູບປະທໍາ ໂດຍສືບຕໍ່ເຊື່ອມສານ ແລະ ຜັນຂະຫຍາຍ-ຕໍ່ຍອດ ວຽກງານຈຸດສຸມໃນຊຸມປີຕໍ່ໜ້າ ທີ່ໄດ້ຍົກຂຶ້ນມີ 3 ມາດຕະການຕົ້ນຕໍ, ຊຶ່ງ 3 ມາດຕະການດັ່ງກ່າວ ມັນແມ່ນຄວາມຮຽກຮ້ອງຕ້ອງການອັນຈໍາເປັນ ທີ່ບັນ

ດາຂະແໜງການ ແລະ ທ້ອງຖິ່ນຕ່າງໆ ຕ້ອງສ້າງເປັນແຜນງານ ແລະ ໂຄງການລະອຽດ ແລະ ມີມາດຕະການຈັດຕັ້ງປະຕິບັດໃນ 5 ປີ ຕໍ່ໜ້ານີ້ ໃຫ້ປະກົດຜົນເປັນຈິງ.

- ໃນ 5 ປີຕໍ່ໜ້າ ສືບຕໍ່ຮັບປະກັນສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ມີຄວາມສາມັກຄີເປັນປຶກແຜ່ນ ໃນທົ່ວປວງຊົນ, ເອກະລາດ, ອຳນາດອະທິປະໄຕແຫ່ງຊາດ ໄດ້ຮັບການປົກປັກຮັກສາໄວ້ໄດ້ຢ່າງໝັ້ນຄົງ, ປະເທດຊາດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ; ລະບົບການເມືອງໄດ້ຮັບການປັບປຸງໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ; ສ້າງເສດຖະກິດເອກະລາດ, ເປັນເຈົ້າຕົນເອງ ໃຫ້ເຂັ້ມແຂງ ນັບມື້ພົ້ນເດັ່ນ ໂດຍສຸມໃສ່ " 7 ຂະແໜງເສດຖະກິດປາຍແຫຼມ ".

4. ເນື້ອໃນວຽກງານຈຸດສຸມ ໃນແຕ່ລະຂົງເຂດທີ່ກະຊວງ, ອົງການ ແລະ ທ້ອງຖິ່ນ ຕ້ອງຫັນເປັນແຜນການ, ໂຄງການລະອຽດຂອງຕົນ.

- ໃນລາຍງານການເມືອງໄດ້ຍົກໃຫ້ເຫັນວຽກງານຈຸດສຸມ ເຊິ່ງກວມເອົາ 7 ຂົງເຂດ ຄື: ① ຂົງເຂດປກຊ-ປກສ; ② ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ໃຫ້ເຂັ້ມແຂງ; ③ ຂົງເຂດວັດທະນະທຳ-ສັງຄົມ; ④ ຂົງເຂດອຳນາດລັດ; ⑤ ຂົງເຂດແນວໂຮມ ແລະ ວຽກງານມະຫາຊົນຂອງພັກ; ⑥ ຂົງເຂດການຕ່າງປະເທດ ແລະ ⑦ ຂົງເຂດພັກ-ພະນັກງານ.

- ບັນດາເນື້ອໃນວຽກງານດັ່ງກ່າວ, ແຕ່ລະກະຊວງ, ອົງການ ແລະ ທ້ອງຖິ່ນ ຕ້ອງໄດ້ເປັນເຈົ້າການຜັນຂະຫຍາຍ ໂດຍຫັນເປັນວຽກງານຈຸດສຸມຂອງຕົນ ແທດກັບເງື່ອນໄຂ ແລະ ສະພາບຕົວຈິງ, ກຳນົດເປັນແຜນວຽກລະອຽດ ວ່າ ມີຈັກວຽກ, ຈາກນັ້ນ ຈັດລຽງບູລິມະສິດ ພ້ອມທັງມີມາດຕະການຈັດຕັ້ງປະຕິບັດຕົວຈິງ.

ຕົວຢ່າງ ໃນເວລາຈັດຕັ້ງປະຕິບັດຕົວຈິງ:

- ການລົງທຶນກໍ່ສ້າງຮາກຖານການເມືອງ (ໃນວຽກງານ ປກຊ-ປກສ) ຈະກຳນົດມີຈັກຈຸດສຸມ, ເນັ້ນແກ້ໄຂບັນຫາໃດເປັນຕົ້ນຕໍ....

- ການພັດທະນາບັນດາທ່າແຮງບົ່ມຊ້ອນ, ທຽບໃສ່ທ້ອງຖິ່ນຂອງຕົນ ມີດ້ານໃດທີ່ເຫັນວ່າ ເປັນທ່າແຮງທີ່ແທ້ຈິງ ແລະ ຈະຂຸດຄົ້ນພັດທະນາໃຫ້ເກີດປະໂຫຍດສູງສຸດ ຢ່າງຍືນຍົງຄືແນວໃດ. ນອກນັ້ນ ກໍຕ້ອງໄດ້ຄຳນຶງໃນການພັດທະນາ ບໍລິເວນເຂດແດວັນຢ່າງກົມກຽວ, ໂດຍມີການປະສານສົມທົບຢ່າງລົງຕົວ ລະຫວ່າງທ້ອງຖິ່ນ ກັບທ້ອງຖິ່ນໃກ້ຄຽງ, ລະຫວ່າງທ້ອງຖິ່ນ ກັບສູນກາງ....

- ກ່ຽວກັບ ການສືບຕໍ່ປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກເຄື່ອນໄຫວ ຂອງບັນດາອົງການອຳນາດລັດ, ໃຫ້ບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ຄົ້ນຄວ້າຢ່າງເລິກເຊິ່ງ ແລະ ຜັນຂະຫາຍແກ້ໄຂໃຫ້ຖືກຕ້ອງ, ສ້າງໃຫ້ມີການຫັນປ່ຽນໃໝ່ທີ່ຕັ້ງໜ້າ ແລະ ມີປະສິດທິຜົນຢ່າງແທ້ຈິງ.

- ວຽກງານພັກ-ພະນັກງານ, ບັນດາຄາດໝາຍໃຫຍ່ແມ່ນ: ເດັດດ່ຽວແກ້ໄຂ ຈຸດອ່ອນ-ຂໍ້ຄົງຄ້າງ ພາຍໃນພັກ, ຮັບປະກັນບົດບາດການເຄື່ອນໄຫວນຳພາຕົວຈິງ ທີ່ເຂັ້ມແຂງຂອງການຈັດຕັ້ງທຸກຂັ້ນ, ສ້າງການຫັນປ່ຽນຢ່າງແຂງແຮງ ແລະ ເລິກເຊິ່ງ ໃນວຽກງານພະນັກງານ. ວຽກງານນີ້ ໃຫ້ຄະນະພັກແຕ່ລະຂັ້ນ, ແຕ່ລະບ່ອນ ຕ້ອງເອົາໃຈໃສ່ປັບປຸງແກ້ໄຂບັນຫາ ວຽກງານພັກ-ພະນັກງານ ທີ່ຄຸມເຄືອໃນຫຼາຍສະໄໝຜ່ານມາ ຢ່າງເປັນລະບົບ, ເຂັ້ມງວດ ເພື່ອສ້າງພັກໃຫ້ປອດໃສ ເຂັ້ມແຂງ ແລະ ໜັກແໜ້ນ ຢ່າງແທ້ຈິງ.

ນອກນີ້, ແຕ່ລະເນື້ອໃນອື່ນໆ ກໍໃຫ້ພັນຂະຫຍາຍເປັນອັນລະອຽດ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນ ຕິດພັນກັບການພັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຂັ້ນຂອງຕົນ ໃຫ້ເປັນຮູບປະທຳ.

**III. ວິທີການຈັດຕັ້ງເຊື່ອມຊຶມ ຢູ່ບັນດາກະຊວງ, ອົງການອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ.**

ໃນການເຊື່ອມຊຶມ ແລະ ພັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ, ຢູ່ບັນດາກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຕ້ອງເອົາໃຈໃສ່ບາງບັນຫາ ດັ່ງນີ້:

1. ການເຊື່ອມຊຶມມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕ້ອງຮັບປະກັນໃຫ້ທຸກເປົ້າໝາຍ ໄດ້ເຂົ້າຮ່ວມຢ່າງທົ່ວເຖິງ, ທັງຮັບປະກັນການອະທິບາຍເນື້ອໃນຢ່າງຮັດກຸມ, ມີຈຸດສຸມ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ພາຍໃຕ້ການນຳພາໂດຍກົງ ຂອງສະຫາຍ ກຳມະການສູນກາງພັກ ແລະ ເລຂາຄະນະພັກ ຢູ່ແຕ່ລະຂັ້ນ.

2. ໃຫ້ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຈັດຕັ້ງການເຊື່ອມຊຶມເອກະສານໃຫ້ສະມາຊິກ, ພະນັກງານຫຼັກແຫຼ່ງ ໃນທົ່ວອົງຄະນະພັກຂອງຕົນ ນັບແຕ່ມື້ອອກຄຳສັ່ງ ເປັນຕົ້ນໄປ ແລະ ໃຫ້ສຳເລັດ ພາຍໃນທ້າຍເດືອນ ມີນາ 2026.

- ສຳລັບ ກະຊວງ, ອົງການ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂອງຕົນ, ຖ້າກະຊວງ, ອົງການໃດ ມີຈຳນວນພົນຫຼາຍກໍອາດຈະເຮັດເປັນ 2-3 ຊຸດ, ມອບໃຫ້ສະຫາຍເລຂາຄະນະພັກ ເປັນຜູ້ຮັບຜິດຊອບ; ຈາກນັ້ນ ມອບໃຫ້ແຕ່ລະຮາກຖານ ສືບຕໍ່ນຳໄປເຊື່ອມຊຶມ ແລະ ຄົ້ນຄວ້າ, ພັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສ່ວນຢູ່ຂັ້ນແຂວງ, ນະຄອນຫຼວງວຽງຈັນ ແມ່ນໃຫ້ຈັດຕັ້ງເຊື່ອມຊຶມໃຫ້ສະມາຊິກພັກ, ພະນັກງານຫຼັກແຫຼ່ງຂັ້ນແຂວງ, ນະຄອນຫຼວງວຽງຈັນ, ເລຂາພັກເມືອງ, ນະຄອນ, ຄະນະປະຈຳພັກເມືອງ, ນະຄອນຂອງຕົນ ໂດຍແມ່ນ ສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ ເປັນຜູ້ຮັບຜິດຊອບ. ຈາກນັ້ນ, ມອບໃຫ້ສະຫາຍເລຂາຄະນະພັກເມືອງ ນຳໄປຈັດຕັ້ງເຊື່ອມຊຶມ ຢູ່ຂັ້ນເມືອງ, ນະຄອນ ໂດຍເຕົ້າໂຮມພະນັກງານຫຼັກແຫຼ່ງຂັ້ນເມືອງ, ເລຂາຄະນະພັກຮາກຖານ ແລະ ເລຂາໜ່ວຍພັກຮາກຖານ ເຂົ້າຮ່ວມ ແລະ ສືບຕໍ່ຄົ້ນຄວ້າ, ພັນຂະຫຍາຍເຂົ້າສູ່ວຽກງານຕົວຈິງຂອງຕົນ.

- ສຳລັບການເຜີຍແຜ່, ເຊື່ອມຊຶມ ໃຫ້ແກ່ປະຊາຊົນຢູ່ຂັ້ນບ້ານ ແມ່ນມອບໃຫ້ສະຫາຍເລຂາຄະນະພັກແຂວງ, ນະຄອນຫຼວງວຽງຈັນ, ຄະນະພັກຮາກຖານຕາແສງ ຊີ້ນຳການຈັດຕັ້ງປະຕິບັດໃຫ້ແທດເໝາະ ກັບສະພາບຈຸດພິເສດ ແລະ ເງື່ອນໄຂຕົວຈິງ ຂອງແຕ່ລະບ່ອນ. (ມີເອກະສານສະເພາະຕ່າງຫາກ ເປັນຄຳຖາມ-ຄຳຕອບ)

3. ບັນດາສະຫາຍ ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ ແບ່ງກັນລົງຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດຕົວຈິງ (ລະອຽດຈະມີແຜນ ແລະ ແຈ້ງໃຫ້ຊາບຕາມພາຍຫຼັງ).

4. ໃຫ້ຄະນະພັກແຕ່ລະຂັ້ນ ນຳໃຊ້ສື່ມວນຊົນປະເພດຕ່າງໆ ເພື່ອເຜີຍແຜ່ບັນດາເນື້ອໃນຕົ້ນຕໍ ຂອງກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ກໍຄື ມະຕິກອງປະຊຸມໃຫຍ່ຂັ້ນຂອງຕົນ. ພ້ອມກັນນັ້ນ ກໍເຜີຍແຜ່ຜົນສຳເລັດຂອງການຈັດຕັ້ງພັນຂະຫຍາຍໃນແຕ່ລະໄລຍະ ຕິດພັນກັບ ນຳສະເໜີຜົນງານ, ຕົວແບບ ກໍຄື ບຸກຄົນດີເດັ່ນ ທີ່ເກີດຂຶ້ນໃນຂະບວນການຕົວຈິງ ໃນແຕ່ລະຂົງເຂດວຽກງານຢ່າງຕໍ່ເນື່ອງ ເພື່ອປຸກລະດົມຂະບວນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ໃຫ້ຟົດຟື້ນ, ແຂງແຮງ ແລະ ໄດ້ຮັບຜົນສຳເລັດ ຕາມຄາດໝາຍທີ່ວາງອອກ.

**IV.** ມາດຕະການຈັດຕັ້ງປະຕິບັດ.

①. ຄະນະພັກກະຊວງ, ອົງການ, ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ຕ້ອງນໍາພາຄົ້ນຄວ້າ, ເຊື່ອມຊຶມກໍາແໜ້ນເນື້ອໃນ ຄໍາສັ່ງຂອງຄະນະເລຂາທິການສູນກາງພັກ ວ່າດ້ວຍການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ແລະ ຄໍາແນະນໍາສະບັບນີ້ ໃຫ້ເລິກເຊິ່ງ ແລະ ຫັນເປັນແຜນງານ, ໂຄງການ, ຄາດໝາຍສູ້ຊົນຂອງຄະນະພັກ ພ້ອມທັງນໍາພາຈັດຕັ້ງປະຕິບັດ ໃຫ້ບັນລຸໝາກຜົນຕົວຈິງ.

②. ຄະນະພັກແຕ່ລະຂັ້ນ ຕ້ອງເປັນເຈົ້າການ ໃນການຄົ້ນຄວ້າກະກຽມເນື້ອໃນເອກະສານລະອຽດ ຊ່ວຍຄະນະພັກ, ເລຂາຄະນະພັກ ຂອງຕົນ ໃນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ; ທັງເປັນເຈົ້າການຕິດຕາມ, ຊຸກຍູ້ ແລະ ປະເມີນຜົນ, ມີການສະຫຼຸບຕີລາຄາເປັນປົກກະຕິ ແລະ ປະຕິບັດລະບອບລາຍງານຕໍ່ຄະນະພັກຂັ້ນເທິງ ຢ່າງເປັນລະບົບ.

③. ຫ້ອງວ່າການສູນກາງພັກ, ຄະນະໂຄສະນາອົບຮົມສູນກາງພັກ, ຄະນະກວດກາສູນກາງພັກ ແລະ ຄະນະຈັດຕັ້ງສູນກາງພັກ ເປັນເຈົ້າການແນະນໍາ, ຊຸກຍູ້, ຕິດຕາມ, ກວດກາການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຕາມພາລະບົດບາດຂອງຕົນ ເພື່ອເກັບກໍາສັງລວມລາຍງານຕໍ່ກົມການເມືອງ, ຄະນະເລຂາທິການສູນກາງພັກ ຮັບຊາບ ແລະ ໃຫ້ທິດຊີ້ນໍາເປັນປົກກະຕິ.

④. ໃຫ້ຄະນະພັກບັນດາກະຊວງ ອົງການ, ຄະນະພັກແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການ ສະຫຼຸບລາຍງານຜົນການຈັດຕັ້ງເຊື່ອມຊຶມ ແລະ ຜັນຂະຫຍາຍ ໃນແຕ່ລະໄລຍະ ໃຫ້ຄະນະໂຄສະນາອົບຮົມສູນກາງພັກ ແລະ ຫ້ອງວ່າການສູນກາງພັກ ຊາບ ເພື່ອສະຫຼຸບສັງລວມລາຍງານ ຕໍ່ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ຊາບ ແລະ ໃຫ້ທິດຊີ້ນໍາ ໃນຂັ້ນຕໍ່ໄປ.

ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ

ຄໍາພັນ ເຜີຍຍະວົງ

# ເອກະສານເຊື່ອມຊຶມມະຕິ
# ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ປະຊາຊົນປະຕິວັດລາວ ໄດ້ດຳເນີນມາແຕ່ວັນທີ 06 ຮອດວັນທີ 08 ມັງກອນ 2026 ທີ່ນະຄອນຫຼວງວຽງຈັນ ໂດຍມີຜູ້ແທນທັງໝົດ 835 ສະຫາຍ, ຍິງ 123 ສະຫາຍ ເຊິ່ງເປັນຕົວແທນໃຫ້ແກ່ສະມາຊິກພັກ ທັງໝົດ 421.865 ສະຫາຍ.

ກອງປະຊຸມໃຫຍ່ດຳເນີນພາຍໃຕ້ຄຳຂວັນ *"ຍົກສູງບົດບາດການນຳພາທີ່ເຂັ້ມແຂງຂອງພັກ, ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ, ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ ກ້າວຂຶ້ນສູ່ສັງຄົມນິຍົມ".*

ແມ່ນຫົວຂໍ້ກວມລວມ ທີ່ເປັນແນວຄິດຊີ້ນຳ ຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ເພື່ອເປັນພື້ນຖານໃຫ້ແກ່ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ໃຫ້ໄປຕາມທິດທາງ ແລະ ຈຸດໝາຍດັ່ງກ່າວ ເຊິ່ງສ່ອງແສງໃຫ້ເຫັນ ການຜັນຂະຫຍາຍໄລຍະທຳອິດ ໂຄງການການເມືອງຂອງພັກ ສະບັບທີ 3. ຄຳຂັວນດັ່ງກ່າວ ປະກອບດ້ວຍ 4 ເນື້ອໃນຕົ້ນຕໍ ຄື:

- ຍົກສູງບົດບາດການນຳພາທີ່ເຂັ້ມແຂງ ຂອງພັກ.
- ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ.
- ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ.
- ກ້າວຂຶ້ນສູ່ສັງຄົມນິຍົມ.

ແຕ່ລະເນື້ອໃນ ມີຄວາມໝາຍສຳຄັນ ດັ່ງນີ້:

**1. ຍົກສູງບົດບາດການນຳພາ ທີ່ເຂັ້ມແຂງ ຂອງພັກ.**

ແມ່ນການສືບຕໍ່ຢືນຢັນ ແລະ ຕໍ່ຍອດ, ຍົກລະດັບ ການເພີ່ມທະວີຄວາມສາມາດນຳພາ ແລະ ລັກສະນະນຳໜ້າ ຂອງພັກປະຊາຊົນປະຕິວັດລາວ ໃຫ້ເດັ່ນຊັດຂຶ້ນ ແລະ ເປັນຮູບປະທຳກວ່າເກົ່າ, ເຮັດໃຫ້ການນຳພາ ຂອງພັກ ທີ່ເປັນປັດໄຈຕັດສິນນັ້ນ ນັບມື້ນັບມີບົດບາດທີ່ເຂັ້ມແຂງ ຢ່າງຮອບດ້ານ ເຊິ່ງສະແດງອອກເຖິງຄວາມເຂັ້ມແຂງ 5 ດ້ານ:

- ບົດບາດການນຳພາທີ່ເຂັ້ມແຂງ ໃນການກຳອຳນາດ ຂອງພັກ. ພັກເຄົາລົບກົດເກນພາວະວິໄສ ແລະ ເຄື່ອນໄຫວກຳອຳນາດຕາມກົດໝາຍ, ໄປຄຽງຄູ່ກັບ ການຊຸກຍູ້ການຄຸ້ມຄອງ-ບໍລິຫານລັດ ໃຫ້ໄປຕາມກົດໝາຍ ຢ່າງແຂງແຮງ ແລະ ເຂັ້ມງວດ, ສາມາດປົກປັກຮັກສາໝາກຜົນ ຂອງການປະຕິວັດ ໄວ້ໄດ້ຢ່າງໝັ້ນຄົງ ແລະ ຍາວນານ.

- ບົດບາດການນຳພາທີ່ເຂັ້ມແຂງ ໃນການເປັນແກນນຳໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ. ຮາກຖານພັກ ໃນທົ່ວລະບົບການເມືອງ ແລະ ຫົວໜ່ວຍຕ່າງໆ ມີຄວາມປອດໃສ, ໜັກແໜ້ນ, ເຂັ້ມແຂງ ຢ່າງແທ້ຈິງ ຕາມທິດ "ສະມາຊິກພັກເຂັ້ມແຂງ, ຮາກຖານພັກ ກໍເຂັ້ມແຂງ, ແຕ່ລະອົງຄະນະພັກເຂັ້ມແຂງ, ທົ່ວພັກ ກໍເຂັ້ມແຂງ". ບົດບາດການນຳພາຂອງພັກ ໄດ້ຮັບການເຊີດຊູ

ສູງເດັ່ນຊັດຂຶ້ນ, ມີຄວາມສາມາດ ໃນການແກ້ໄຂບັນຫາທີ່ເກີດຂຶ້ນ ແລະ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ຂອງແຕ່ລະອົງຄະນະພັກ ແລະ ຮາກຖານພັກ.

- ບົດບາດການນໍາພາທີ່ເຂັ້ມແຂງ ໃນການນໍາພາທົ່ວສັງຄົມ, ໃນເງື່ອນໄຂໃໝ່ ຂອງການກໍາອໍານາດ. ພັກນໍາພາທົ່ວສັງຄົມ ປະຕິບັດ 2 ໜ້າທີ່ຍຸດທະສາດ, ສ້າງຄວາມເຂັ້ມແຂງໃຫ້ແກ່ການພັດທະນາ; ເອົາໃຈໃສ່ປັບປຸງການກໍາອໍານາດຂອງພັກ ບົນພື້ນຖານຈິດໃຈຮັບໃຊ້ປະຊາຊົນ ແລະ ເພື່ອການພັດທະນາ ຢ່າງແທ້ຈິງ. ພັກຍາມໃດ ກໍຍຶດໝັ້ນການຖືເອົາປະຊາຊົນເປັນກົກ ແລະ ເຮັດທຸກສິ່ງທຸກຢ່າງ ເພື່ອຄວາມຢູ່ເຢັນເປັນສຸກ ຂອງປະຊາຊົນ. ໃນການນໍາພາທົ່ວສັງຄົມນັ້ນ ທຸກໆແນວທາງ, ແຜນນະໂຍບາຍທຸກຢ່າງຂອງພັກ, ກົດໝາຍ, ນິຕິກໍາຕ່າງໆ ກໍຄື ການເຄື່ອນໄຫວນໍາພາຄຸ້ມຄອງ ຂອງພັກ-ລັດເຮົາ, ຂອງພະນັກງານ, ສະມາຊິກພັກ ຕ້ອງເລີ່ມຈາກ ແລະ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ, ຄວາມມຸ່ງມາດປາຖະໜາ ແລະ ສິດຜົນປະໂຫຍດອັນຊອບທໍາ ຂອງປະຊາຊົນ ແລະ ປະເທດຊາດ; ອັນໃດກີດຂວາງ, ບໍ່ສອດຄ່ອງກັບຜົນປະໂຫຍດ ຂອງປະຊາຊົນ ຕ້ອງໄດ້ສະກັດກັ້ນ, ກໍາຈັດປັດເປົ່າ ຢ່າງເດັດຂາດ.

- ບົດບາດການນໍາພາທີ່ເຂັ້ມແຂງ ໃນດ້ານລະບຽບວິໄນ ແລະ ຄວາມເປັນແບບຢ່າງນໍາໜ້າ ຂອງພັກ, ພັກປະຊາຊົນປະຕິວັດລາວ ເປັນພັກທີ່ມີການຈັດຕັ້ງເຂັ້ມແຂງ, ມີຄວາມສາມັກຄີ ເປັນເອກະພາບໜັກແໜ້ນ ດ້ານມານະຈິດປະຕິວັດ ແລະ ການກະທໍາ, ຮັກສາທາດແທ້ປະຕິວັດ, ຄວາມໜັກແໜ້ນທາງດ້ານອຸດົມການ, ສະຕິຕໍ່ການຈັດຕັ້ງ ແລະ ມີການຄຸ້ມຄອງທີ່ເຂັ້ມງວດ ດ້ວຍລະບຽບວິໄນ ທີ່ເຄັ່ງຄັດ, ມີຄວາມກ້າຫານຕໍ່ສູ້ຕ້ານປະກົດການຫຍໍ້ທໍ້, ອົດທົນຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກຕ່າງໆ: ຖັນແຖວສະມາຊິກພັກ ຕັ້ງໜ້າສະແຫວງຫາຄວາມກ້າວໜ້າ, ເປັນແບບຢ່າງນໍາໜ້າ ໃນການປະຕິບັດໜ້າທີ່ວຽກງານທີ່ຖືກມອບໝາຍດ້ວຍຜົນສໍາເລັດສູງ, ອຸທິດ ຕົນເພື່ອຜົນປະໂຫຍດ ຂອງຊາດ ແລະ ຄວາມສົມບູນພູນສຸກ ຂອງປະຊາຊົນ, ປອດໃສ ຂາວສະອາດ, ດຸໝັ່ນ, ປະຢັດ, ຊື່ສັດ-ທ່ຽງທໍາ, ບໍ່ສວຍໃຊ້ໜ້າທີ່ຕໍາແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ໂດຍບໍ່ຊອບທໍາ.

- ບົດບາດການນໍາພາທີ່ເຂັ້ມແຂງ ໃນພາລະກິດປະຕິວັດ ແນໃສ່ບັນລຸອຸດົມການ ກໍຄື ຈຸດໝາຍສັງຄົມນິຍົມ ທີ່ພັກ ແລະ ປະຊາຊົນເຮົາ ໄດ້ເລືອກເອົາໄວ້ແລ້ວ, ພັກມີພື້ນຖານອັນໜັກແໜ້ນ ດ້ານລະບົບແນວຄິດ, ທິດສະດີ-ພຶດຕິກໍາ ໃນການນໍາພາພາລະກິດປະຕິວັດ, ພັກປະຊາຊົນປະຕິວັດລາວ ບໍ່ລັ່ງເລ-ຄອນແຄນ, ບໍ່ຢຸດໆຢ່ອນໆ ໃນການສືບຕໍ່ນໍາພາ ພາລະກໍາປະຫວັດສາດອັນໃຫຍ່ຫຼວງ. ຮອບດ້ານ, ໜັກໜ່ວງ ແລະ ຍາວນານ ແນໃສ່ພາປະເທດຊາດ ກ້າວຂຶ້ນສູ່ສັງຄົມນິຍົມ.

**2. ຕັ້ງໜ້າສ້າງເສດຖະກິດ ເອກະລາດ ເປັນເຈົ້າຕົນເອງ.**

ນີ້ແມ່ນທິດທາງ, ເສັ້ນທາງການພັດທະນາຊາດລາວຍຸກໃໝ່, ການສືບຕໍ່ສ້າງພື້ນຖານເສດຖະກິດແຫ່ງຊາດ ໃຫ້ເຂັ້ມແຂງ ໂດຍສູ້ຊົນເອົາເສດຖະກິດຂອງລາວ ອອກຈາກລະບົບ, ລະບອບເສດຖະກິດທີ່ເຕັມໄປດ້ວຍການເພິ່ງພາ ແລະ ເອື່ອຍອີງ ໃຫ້ກາຍເປັນເຈົ້າຕົນເອງ ຢ່າງມີບາດກ້າວເດີນທີ່ໜັກແໜ້ນ (ໝາຍວ່າ: ເປັນເຈົ້າດ້ານຄວາມຮັບຮູ້ ໃນສິ່ງທີ່ເຮົາມີ, ໃນສິ່ງທີ່ເຮົາເຮັດໄດ້; ຮູ້ອີງໃສ່ທ່າແຮງບົ່ມຊ້ອນຂອງປະເທດ, ຮູ້ນໍາໃຊ້ຊັບພະຍາກອນທີ່ເຮົາມີຢ່າງກຸ້ມຄ່າ ແລະ ຮູ້ວາງແຜນ ໃນການຂຸດຄົ້ນຊັບພະຍາກອນຂອງຊາດ ໃຫ້ຄົນລາວເປັນເຈົ້າຫຼາຍຂຶ້ນ; ໄດ້ເງິນມາ ຕ້ອງຮູ້ປະຢັດ-ອົດອອມ, ຮູ້ໃຊ້ຈ່າຍຢ່າງຄຸ້ມ

ຄ່າ, ຮູ້ຕໍ່ຍອດ ແລະ ສ້າງມູນຄ່າເພີ່ມອອກມາເລື້ອຍໆ). ປັບປຸງ, ພັດທະນາ ແລະ ຍົກລະດັບ ກົນໄກເສດຖະກິດຕະຫຼາດຢູ່ປະເທດເຮົາ ໃຫ້ໄປຖືກຕາມທິດສັງຄົມນິຍົມ, ສາມາດເຊື່ອມໂຍງເຂົ້າກັບເສດຖະກິດພາກພື້ນ ແລະ ສາກົນ ບົນຈິດໃຈຂອງຄວາມເປັນເອກະລາດ ແລະ ຄວາມເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງ ທາງດ້ານເສດຖະກິດ ດ້ວຍຄວາມບຸກບືນສູ້ຊົນສູງສຸດ, ສາມາດຢືນໄດ້ດ້ວຍລໍາແຂ້ງຂອງຕົນເອງ, ຮັບເອົາສິ່ງຍອດຍິ່ງ ຂອງໂລກ ແລະ ສາມາດກ້າວອອກສູ່ສາກົນ ໄດ້ຢ່າງໜັກແໜ້ນ.

**3. ສືບຕໍ່ບູລະນະ ລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ.**

ແມ່ນການຢືນຢັນ ຫຼື ຢໍ້າຄືນ ກ່ຽວກັບການບູລະນະເສັ້ນທາງກ້າວເດີນ ກໍຄື ໄລຍະທາງ ຂອງການປະຕິວັດລາວ ພາຍໃຕ້ການນໍາພາຂອງພັກ; ແມ່ນການປັບປຸງ, ຍົກລະດັບການນໍາພາຂອງພັກ ຢ່າງຮອບດ້ານ ໂດຍເລັ່ງໃສ່ການສ້າງພື້ນຖານແຫ່ງຄວາມກົມກຽວ ແລະ ຄວາມເປັນລະບົບ ລະຫວ່າງໂຄງປົນ ແລະ ໂຄງລ່າງ ໃນສະໄໝຂ້າມຜ່ານ; ສ້າງ ແລະ ຍົກລະດັບບັນດາປະຖົມປັດໄຈໃຫ້ແກ່ການກ້າວຂຶ້ນສັງຄົມນິຍົມ ທີ່ມີໃນປັດຈຸບັນ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ, ສ້າງລັດທີ່ມາຈາກປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ໃຫ້ສົມບູນຍິ່ງຂຶ້ນ ເຊິ່ງປະກອບດ້ວຍ 11 ແຜນນະໂຍບາຍໃຫຍ່ ໃນການສືບຕໍ່ຍູ້ແຮງການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

**4. ກ້າວຂຶ້ນສູ່ສັງຄົມນິຍົມ.**

ແມ່ນເປັນການຢໍ້າຕື່ມອີກຢ່າງໜັກແໜ້ນ ແລະ ຊັດເຈນວ່າ ພາລະກິດປະຕິວັດ ຂອງພັກເຮົາຕາມເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມ; ແມ່ນຈຸດໝາຍ ທີ່ບໍ່ອາດຕ່າວປີ້ນ, ແມ່ນອຸດົມການທີ່ບໍ່ປ່ຽນແປງຂອງພັກເຮົາ. ເປົ້າໝາຍອັນຍາວນານ ທີ່ຕ້ອງໄດ້ສືບຕໍ່ຍຶດໝັ້ນໃນອຸດົມການ ແລະ ຈຸດໝາຍສັງຄົມນິຍົມແມ່ນຍຶດໝັ້ນໃນການສ້າງສັງຄົມນິຍົມ ທີ່ປະຊາຊົນເຮົາ ມີຄວາມຮັ່ງມີຜາສຸກ, ປະເທດຊາດຂອງພວກເຮົາ ມັ່ງຄັ່ງເຂັ້ມແຂງ ແລະ ສັງຄົມລາວ ມີຄວາມສາມັກຄີເປັນປຶກແຜ່ນ, ປະຊາທິປະໄຕ, ຍຸຕິທໍາ ແລະສີວິໄລ. ນີ້ແມ່ນວັດຖຸປະສົງ, ແມ່ນຈຸດໝາຍ ທີ່ພວກເຮົາ ຈະຕ້ອງໄປເຖິງ ແລະ ກໍເປັນທັງທິດນໍາ, ເປັນໄມ້ຫຼາວັດແທກ ໃນການນໍາພາ ພາລະກິດປະຕິວັດ ເຊິ່ງພັກເຮົາ ໄດ້ຢືນຢັນຢ່າງໜັກແໜ້ນ ໃນແຕ່ລະກອງປະຊຸມໃຫຍ່ ຂອງຕົນ.

## I. ຄວາມໝາຍສໍາຄັນ ຂອງກອງປະຊຸມໃຫຍ່.

ການເປີດຂຶ້ນ ແລະ ດໍາເນີນກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ຄັ້ງນີ້ ຖືໄດ້ວ່າ ເປັນເຫດການການເມືອງ ທີ່ມີຄວາມໝາຍສໍາຄັນອີກບັ້ນໜຶ່ງ ທີ່ບັນທຶກໄວ້ໃນໜ້າປະຫວັດສາດ ຂອງພັກ ແລະ ຂອງຊາດລາວ.

- ກອງປະຊຸມຄັ້ງນີ້ ໄດ້ທົບທວນຄືນຜົນຂອງການຜັນຂະຫຍາຍມະຕິ ຂອງກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ກໍານົດແນວທາງ, ນະໂຍບາຍ ແລະ ແຜນປະຕິບັດງານ ຂອງພັກ ແລະ ຂອງປະເທດ ໃນ 5 ປີຕໍ່ໜ້າ, ຍຸດທະສາດພັດທະນາ 10 ປີ, ກໍານົດວິໄສທັດ ຮອດປີ 2055 ເພື່ອສືບຕໍ່ຍູ້ແຮງ

ການຜັນຂະຫຍາຍແນວທາງການປ່ຽນແປງໃໝ່ຂອງພັກ ສູ່ລວງເລິກຕໍ່ໆໄປ, ສ້າງ ແລະ ຍົກລະດັບ ບັນດາປັດໄຈການບູລະນະ ລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

- ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ ປະຊາຊົນປະຕິວັດລາວ ຢືນຢັນໄດ້ຢ່າງໜັກແໜ້ນ ຕື່ມອີກ ວ່າ:

1. ແມ່ນກອງປະຊຸມໃຫຍ່ ທີ່ມີຄວາມສາມັກຄີເປັນເອກະພາບສູງ ຢູ່ພາຍໃນພັກ.

2. ແມ່ນກອງປະຊຸມໃຫຍ່ ແຫ່ງການສືບຕໍ່ຍູ້ແຮງພາລະກິດປ່ຽນແປງໃໝ່ ເຂົ້າສູ່ລວງເລິກ ແລະ ສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານ.

3. ແມ່ນກອງປະຊຸມໃຫຍ່ ແຫ່ງການເສີມຂະຫຍາຍມານະຈິດປະຕິວັດ ຂອງທົ່ວພັກ.

4. ແມ່ນກອງປະຊຸມໃຫຍ່ ທີ່ເຕັມປ່ຽມດ້ວຍຄວາມຮັບຜິດຊອບການເມືອງອັນສູງສົ່ງ ຂອງພັກ ໃນການຕົກລົງບັນຫາທີ່ສຳຄັນ ແລະ ເປັນພື້ນຖານ ຂອງພັກ, ຂອງການປະຕິວັດ ແລະ ຊາຕາກຳ ຂອງປະເທດຊາດ.

5. ແມ່ນກອງປະຊຸມໃຫຍ່ ແຫ່ງຄວາມເຊື່ອໝັ້ນ ຕໍ່ການນຳພາຂອງພັກ ໃນການສືບຕໍ່ກ້າວຂຶ້ນ ຂອງປະເທດຊາດ, ທົ່ວພັກ ແລະ ທົ່ວປວງຊົນລາວ ຕ່າງກໍຊື່ນຊົມຍິນດີ ດ້ວຍບັນຍາກາດອັນຟົດຟື້ນ ຕໍ່ຜົນສຳເລັດ ຂອງກອງປະຊຸມໃຫຍ່ ຄັ້ງນີ້.

**II. ຕີລາຄາໂດຍສັງເຂບ ໝາກຜົນ ຂອງການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ.**

ໃນໄລຍະ 5 ປີ ຜ່ານມາ, ເຖິງວ່າ ສະພາບແວດລ້ອມຂອງໂລກ ໄດ້ມີການຜັນແປໄປຢ່າງໄວວາ, ສັບສົນ ແລະ ເຕັມໄປດ້ວຍຄວາມສະຫຼັບສັບຊ້ອນ, ສິ່ງຜົນກະທົບຕໍ່ສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງຢູ່ໃນໂລກ. ສະພາບການຂອງສາກົນດັ່ງກ່າວ ຍ່ອມສົ່ງກະທົບຢ່າງຫຼີກລ່ຽງບໍ່ໄດ້ຕໍ່ພັກ ແລະ ຕໍ່ ສປປ ລາວ, ນອກນັ້ນ ຍັງໄດ້ປະເຊີນໜ້າກັບສະພາບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຢ່າງໜັກໜ່ວງຮອບດ້ານ ລວມທັງການກະທົບຢ່າງແຮງຈາກ Covid-19 ກະໜ່ຳເຂົ້າຢ່າງເນື່ອງນິດລຽນຕິດ, ໃນເວລາດຽວກັນ ຄວາມຫຍໍ້ທໍ້ໃນສັງຄົມ ກໍເກີດຂຶ້ນຕາມໆມາ... ແຕ່ພັກ ກໍໄດ້ເດັດດ່ຽວແກ້ໄຂທຸກໆຄວາມທ້າທາຍ ສາມາດເຮັດໃຫ້ທິດທາງ, ຄາດໝາຍສູ້ຊົນທີ່ວາງອອກ ໄດ້ຮັບການຈັດຕັ້ງປະຕິບັດ ທີ່ເປັນພື້ນຖານ ຄື:

**1. ດ້ານດີ:**

①. ປະເທດຊາດ ມີສະຖຽນລະພາບທາງການເມືອງອັນໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ.

②. ເສດຖະກິດ ເຖິງວ່າ ມີຄວາມຫຍຸ້ງຍາກ ແຕ່ກໍມີທ່າອ່ຽງຂະຫຍາຍຕົວຕໍ່ເນື່ອງ, ປະຊາຊົນບັນດາເຜົ່າ ມີຄວາມສາມັກຄີເປັນປຶກແຜ່ນ ທັງມີຄວາມເຊື່ອໝັ້ນ ຕໍ່ການນຳພາຂອງພັກ ແລະ ການຄຸ້ມຄອງບໍລິຫານຂອງລັດ.

+ ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ ສະເລ່ຍໃນລະດັບ 4,24% (ຄາດໝາຍວາງໄວ້ 4% ຂຶ້ນໄປ).

+ GDP ຕໍ່ຫົວຄົນ ບັນລຸໄດ້ 2.138 ໂດລາ (ແຜນການ 2.880 ໂດລາ) ແລະ GNI ຕໍ່ຄົນ ບັນລຸໄດ້ 1.985 ໂດລາສະຫະລັດ (ແຜນການ 2.280 ໂດລາ).

+ ຈັດເກັບລາຍຮັບງົບປະມານ ໄດ້ເກີນແຜນ 5 ປີຊ້ອນ, ໃນ 5 ປີ ມີລາຍຮັບງົບປະມານ ທັງໝົດ 251.910 ຕື້ກີບ, ເທົ່າກັບ 140% ຂອງແຜນ ຫຼື ເທົ່າກັບ 18,65% ຂອງ GDP (ແຜນການ 17%).

+ ອັດຕາເງິນເຟີ້ຫຼຸດລົງຈາກ 22,96% ໃນປີ 2022 ມາເປັນ 8,3% ໃນປີ 2025.

③. ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ ຂອງປະຊາຊົນ ໄດ້ຮັບການປັບປຸງ, ຍົກລະດັບດີຂຶ້ນເປັນກ້າວໆ.

+ ອັດຕາຄວາມທຸກຍາກ ໄດ້ຫຼຸດລົງຈາກ 18,3% ໃນປີ 2019 ມາເປັນ 15% ຂອງປະຊາກອນທັງໝົດ ໃນປີ 2025 (ແຜນການ ແມ່ນ 13,9%).

④. ອົງການຈັດຕັ້ງໃນລະບົບການເມືອງ ໄດ້ຮັບການປັບປຸງສູ່ຄຸນະພາບໃໝ່, ເຊິ່ງໄດ້ຕັ້ງໜ້າເສີມຂະຫຍາຍ ແລະ ປະຕິບັດພາລະບົດບາດຂອງຕົນ ໄດ້ຢ່າງເປັນເຈົ້າການ; ໄດ້ປັບປຸງກົນໄກການນຳພາ ຂອງພັກ ແລະ ການຄຸ້ມຄອງລັດ ຢູ່ຂັ້ນທ້ອງຖິ່ນ ສະຫາຍເລຂາພັກ ບໍ່ຄວບຕຳແໜ່ງປະທານຄະນະກຳມະການປົກຄອງ.

⑤. ປັບປຸງກົງຈັກການຈັດຕັ້ງ, ໃນນັ້ນ ໄດ້ສ້າງຕັ້ງການປົກຄອງຕາແສງ ເປັນຂັ້ນການປົກຄອງລຸ່ມສຸດ; ການເຄື່ອນໄຫວຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຂອງບັນດາອົງການລັດ ໄດ້ຮັບການຍົກລະດັບ ໃຫ້ມີປະສິດທິພາບກວ່າເກົ່າ.

+ ຫຼຸດຈຳນວນກະຊວງ, ອົງການ ຈາກ 19 ພາກສ່ວນ ຍັງເຫຼືອ 15 ພາກສ່ວນ, ຫຼຸດຂັ້ນກົມ ໄດ້ 43 ກົມ ແລະ ຫຼຸດຂັ້ນພະແນກ ຂັ້ນແຂວງ ໄດ້ 13 ພະແນກ.

⑥. ການພົວພັນຮ່ວມມື ກັບບັນດາປະເທດເພື່ອນມິດສາກົນ ໄດ້ຮັບການຍົກລະດັບ ແລະ ຂະຫຍາຍຕົວສູ່ລວງເລິກ, ນຳເອົາຜົນປະໂຫຍດມາສູ່ປະຊາຊົນ ແລະ ປະເທດຊາດ ເຮັດໃຫ້ບົດບາດອິດທິພົນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການເຊີດຊູ ໃຫ້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ; ປະເທດຊາດ ສືບຕໍ່ສ້າງໄດ້ພື້ນຖານອັນໜັກແໜ້ນ ເພື່ອກ້າວຂຶ້ນສູ່ຈຸດໝາຍ ທີ່ວາງໄວ້.

**2. ສາເຫດດ້ານດີ:**

①. ຍ້ອນການນຳພາ-ຊີ້ນຳ ຢ່າງເຂັ້ມແຂງ, ຖືກຕ້ອງ, ແທດເຖິງ ແລະ ທັນການ ຂອງຄະນະບໍລິຫານງານສູນກາງພັກ, ຄະນະພັກທຸກຂັ້ນ ບວກໃສ່ຄວາມບຸກບືນສູ້ຊົນ ຂອງລັດຖະບານ ໃນການບໍລິຫານຄຸ້ມຄອງ ໄປຕາມທິດເດັດຂາດ, ໂປ່ງໃສ ແລະ ມືອາຊີບ, ການສຸມໃສ່ປະຕິບັດພາລະບົດບາດຕິດຕາມ, ກວດກາ ແລະ ສະໜັບສະໜູນຢ່າງແຂງແຮງ ຂອງສະພາແຫ່ງຊາດ ເຊິ່ງໄດ້ສ່ອງແສງໃຫ້ເຫັນແບບແຜນ, ວິທີການນຳພາຊີ້ນຳທີ່ເຂັ້ມແຂງຂອງພັກ ແລະ ການຄຸ້ມຄອງທີ່ຮັດກຸມ, ມີປະສິດທິພາບຂອງລັດ ໃນສະພາບເງື່ອນໄຂໃໝ່.

②. ຍ້ອນພັກເຮົາ ປະຕິບັດຖືກຕ້ອງ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ພົວພັນກັບຕ່າງປະເທດ ຢ່າງມີໄຫວພິບ ແລະ ຄ່ອງແຄ່ວ, ມີຄວາມເຂົ້າໃຈ ຢ່າງເລິກເຊິ່ງກ່ຽວກັບບັນຫາ ທີ່ກຳລັງປະເຊີນຢູ່, ມີຄວາມຕັດ

ສິນໃຈສູງ ຊອກຫາທາງອອກ ແລະ ວາງມາດຕະການອັນຈຳເປັນ ໃນແຕ່ລະໄລຍະຢ່າງຖືກຕ້ອງ ແລະ ສອດຄ່ອງກັບສະພາບທີ່ເກີດຂຶ້ນ, ຈຶ່ງເຮັດໃຫ້ບັນຫາຕ່າງໆ ໄດ້ຮັບການແກ້ໄຂດີຂຶ້ນເທື່ອລະກ້າວ.

③. ໃນການນຳພາ-ຊີ້ນຳ ພວກເຮົາໄດ້ມີຄວາມເອກະພາບສູງ ທາງດ້ານການເມືອງ-ແນວຄິດ ສົມທົບແໜ້ນກັບກຳລັງແຮງສະໜັບສະໜູນ ແລະ ເຂົ້າຮ່ວມຢ່າງແຂງແຮງ ຂອງພະນັກງານ, ສະມາຊິກພັກ ແລະ ປະຊາຊົນບັນດາເຜົ່າ ໂດຍມີການໂຄສະນາ, ປຸກລະດົມ, ຊຸກຍູ້ສົ່ງເສີມ, ຈັດຕັ້ງນຳພາ-ບັນຊາ-ຊີ້ນຳ ເຮັດຕົວຈິງ ເຮັດໃຫ້ມີປັດໄຈ-ໜໍ່ແໜງໃໝ່ເກີດຂຶ້ນ. ຮູ້ນຳໃຊ້ ແລະ ເສີມຂະຫຍາຍກຳລັງແຮງ ຂອງຄວາມກ້າວໜ້າທາງດ້ານເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳ ໃຫ້ກາຍເປັນປັດໄຈສຳຄັນປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດຄາດໝາຍທີ່ກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ IX ວາງອອກ ກໍຄື ການແກ້ໄຂບັນຫາເຄັ່ງຮ້ອນຕ່າງໆ.

④. ປະຊາຊົນລາວບັນດາເຜົ່າ ໄດ້ເສີມຂະຫຍາຍນ້ຳໃຈຮັກຊາດ, ຈິດໃຈເອກະລາດ ເປັນເຈົ້າຕົນເອງ, ມູນເຊື້ອວັດທະນະທຳອັນດີງາມ ຂອງຊາດ, ຄວາມສາມັກຄີເປັນປຶກແຜ່ນ, ມີຄວາມເຊື່ອໝັ້ນຕໍ່ການນຳພາ ຂອງພັກ ແລະ ອະນາຄົດອັນສະຫວ່າງສະໄຫວ ຂອງປະເທດຊາດ, ຕື່ນຕົວເປັນເຈົ້າການທຳມາຫາກິນ ເພື່ອໃຫ້ພົ້ນຈາກຄວາມທຸກຍາກ ແລະ ຮັ່ງມີຂຶ້ນ.

⑤. ຍ້ອນຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ກໍຄື ທິດນຳການທູດປ້ອງກັນເທດ ແລະ ບຸກທະລຸ ເພື່ອປົກປັກຮັກສາ ແລະ ພັດທະນາປະເທດຊາດ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງແຂງແຮງ ຈຶ່ງສ້າງໄດ້ບັນຍາກາດການພົວພັນອັນດີ, ຍາດແຍ່ງໄດ້ການສະໜັບສະໜູນ, ຮ່ວມມື ແລະ ຊ່ວຍເຫຼືອຈາກປະເທດເພື່ອນມິດ, ຄູ່ຮ່ວມພັດທະນາ ແລະ ອົງການຈັດຕັ້ງສາກົນຕ່າງໆ.

**3. ບັນດາຈຸດອ່ອນ ແລະ ຂໍ້ຄົງຄ້າງຕົ້ນຕໍ.**

①. ປະກົດການເສື່ອມຖອຍດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມບໍ່ເປັນແບບຢ່າງ ດ້ານມານະຈິດປະຕິວັດ, ຄວາມບຸກບືນສູ້ຊົນ, ນ້ຳໃຈຮັບໃຊ້ປະຊາຊົນ ແລະ ຄວາມເສຍສະຫຼະເພື່ອສ່ວນລວມ ໃນຖັນແຖວການນຳຫຼັກແຫຼ່ງ, ສະມາຊິກພັກ-ພະນັກງານຈຳນວນໜຶ່ງ ຢູ່ແຕ່ລະຂັ້ນ ບໍ່ທັນໄດ້ຮັບການແກ້ໄຂຢ່າງຕັ້ງໜ້າ, ເດັດຂາດເຖິງກົກເຖິງຮາກ ຈຶ່ງບໍ່ທັນເກີດມີການຫັນປ່ຽນຢ່າງຕັ້ງໜ້າ, ຈະແຈ້ງ, ແຂງແຮງ; ຄະນະພັກ, ຮາກຖານພັກຈຳນວນໜຶ່ງ ບໍ່ໜັກແໜ້ນ, ເກີດມີພະຍາດອາຍາສິດ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ, ເກີດແນວຄິດຈຸ້ມເຈື້ອເຊື້ອສາຍ, ປະກົດການຫຼິ້ນກິນຟຸມເຟືອຍ ທີ່ມີລັກສະນະແຜ່ລາມໃນສັງຄົມ; ເຖິງວ່າ ໄດ້ມີຄວາມພະຍາຍາມປັບປຸງ, ປ່ຽນແປງວິທີການກໍ່ສ້າງ, ບຳລຸງພະນັກງານ ແຕ່ຍັງບໍ່ທັນສ້າງໄດ້ການຫັນປ່ຽນທີ່ແຂງແຮງ ແລະ ໜັກແໜ້ນໄດ້ເທື່ອ; ກົນໄກການຄຸ້ມຄອງ, ການບັນຈຸ, ສັບຊ້ອນພະນັກງານຂັ້ນສູນກາງຄຸ້ມຄອງ ບໍ່ທັນຮັດກຸມ, ແຜນກຳນົດພະນັກງານໄດ້ສ້າງຂຶ້ນ ແຕ່ຂອດການຊີ້ນຳຈັດຕັ້ງປະຕິບັດ ມີຫຼາຍດ້ານບໍ່ທັນເປັນເອກະພາບ. ວຽກງານຕິດຕາມ, ກວດກາ, ຕ້ານ, ສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງ ບໍ່ທັນແຂງແຮງ ແລະ ບໍ່ທັນທົ່ວເຖິງທຸກເປົ້າໝາຍ, ຄະນະພັກຈຳນວນໜຶ່ງ ບໍ່ທັນເປັນແບບຢ່າງນຳໜ້າ, ຍັງຖືເບົາຕໍ່ວຽກງານກວດກາ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

②. ການປຸກລະດົມປະຊາຊົນ ແລະ ສັງຄົມ ເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ບໍ່ທັນແຂງແຮງ, ກວ້າງຂວາງ ແລະ ທົ່ວເຖິງ, ການທັບມ້າງກົນອຸບາຍເລ່ຫຼ່ຽມ, ການຕ້ານ, ການສະກັດກັ້ນ, ການຕອບໂຕ້ຖ້ອຍທໍານອງບິດເບືອນຄວາມຈິງ ບໍ່ທັນແຂງແຮງ, ທັນເວລາ ແລະ ຍັງຂາດຄວາມແຫຼມຄົມ, ການຄຸ້ມຄອງສື່ສັງຄົມອອນລາຍ ຍັງມີຂີດຈໍາກັດ. ປະກົດການຫຍໍ້ທໍ້ໃນສັງຄົມ ມີທ່າອ່ຽງເພີ່ມຄວາມຮຸນແຮງ ແລະ ສ້າງຄວາມເສຍຫາຍ ໜັກໜ່ວງຂຶ້ນ; ການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃນຕົວຈິງຍັງບໍ່ທັນມີການປ່ຽນແປງດີຂຶ້ນ, ຄວາມທຸກຍາກ ແລະ ຄວາມແຕກໂຕນ ໃນສັງຄົມ ຍັງມີທ່າອ່ຽງເພີ່ມຂຶ້ນເລື້ອຍໆ ຈຶ່ງເປັນບັນຫາສໍາຄັນຕົ້ນຕໍ ແລະ ເປັນເປົ້າໝາຍສູ້ຊົນ ໃນການນໍາພາຂອງພັກເຮົາແກ້ໄຂ ໃນຊຸມປີຕໍ່ໜ້າ.

③. ເສດຖະກິດມະຫາພາກ ຍັງບອບບາງ; ການລົງທຶນຂອງລັດ ຍັງບໍ່ມີຈຸດສຸມເທົ່າທີ່ຄວນ, ບໍ່ທັນຈັດລຽງບູລິມະສິດ, ປະສິດທິຜົນການລົງທຶນຍັງຕໍ່າ; ການພັດທະນາເຂດແຄວ້ນ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາ; ການເຄື່ອນໄຫວດໍາເນີນທຸລະກິດ ຂອງລັດວິສາຫະກິດຈໍານວນໜຶ່ງ ຍັງສືບຕໍ່ຕົກຢູ່ສະພາບຄຸມເຄືອ, ຂາດປະສິດທິຜົນ; ການຜະລິດສິນຄ້າ ແລະ ການບໍລິການ ເພື່ອທົດແທນການນໍາເຂົ້າ ຍັງບໍ່ທັນແຂງແຮງ ແລະ ຄວາມສາມາດແຂ່ງຂັນຕໍ່າ; ສິນຄ້າສົ່ງອອກຕົ້ນຕໍ ຍັງແມ່ນວັດຖຸດິບ ຫຼື ຖ້າມີການປຸງແຕ່ງ ກໍເປັນພຽງຂັ້ນຕົ້ນເທົ່ານັ້ນ ແລະ ຄຸນນະພາບຍັງຕໍ່າ, ບໍ່ສ້າງໄດ້ມູນຄ່າສູງ; ການສົ່ງເສີມການຜະລິດຕ່າງໆ ຍັງບໍ່ທັນຄົບຊຸດ ແລະ ເຂັ້ມແຂງ; ການຫັນເປັນທັນສະໄໝ ໃນຂົງເຂດການເງິນ ແລະ ເງິນຕາ ຍັງມີຄວາມຊັກຊ້າ; ກົນໄກ, ລະບອບ, ລະບຽບການຄຸ້ມຄອງ, ບໍລິຫານວຽກງານ ຍັງບໍ່ໄດ້ຮັບການປັບປຸງຢ່າງເປັນລະບົບ, ຍັງມີຫຼາຍຂັ້ນຂອດ ແລະ ມີຄວາມຊັກຊ້າ ໂດຍສະເພາະ ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ໃຫ້ແກ່ການລົງທຶນ; ກົນໄກການປະສານງານ ລະຫວ່າງສູນກາງ ກັບທ້ອງຖິ່ນ ແລະ ຂະແໜງການດ້ວຍກັນ ຍັງບໍ່ໄດ້ຮັບການປັບປຸງຢ່າງຈິງຈັງ; ການຂຸດຄົ້ນແຮ່ທາດແບບທົດລອງ ບໍ່ໄປຕາມຂັ້ນຕອນຫຼັກວິທະຍາສາດ, ທັງບໍ່ມີປະສິດທິຜົນ, ມີສະພາບການຈັບຈອງ ແລະ ສໍາປະທານທີ່ດິນ ເກີນຄວາມສາມາດຕົວຈິງ ຂອງຫົວໜ່ວຍທຸລະກິດ, ການຂຸດຄົ້ນ, ຂົນສົ່ງແຮ່ທາດ-ສິນຄ້າ, ຈໍານວນໜຶ່ງໄດ້ສ້າງຜົນກະທົບຕໍ່ເນື້ອທີ່ການຜະລິດ, ການທໍາມາຫາກິນ ແລະ ຊີວິດການເປັນຢູ່ ຂອງປະຊາຊົນ, ສິ່ງຜົນກະທົບຕໍ່ເສັ້ນທາງຄົມມະນາຄົມ, ຕໍ່ສິ່ງແວດລ້ອມທາງທໍາມະຊາດ ແລະ ສັງຄົມ, ລວມທັງການຄຸ້ມຄອງ ຂອງລັດ ບໍ່ຮັດກຸມ, ເດັດຂາດ ແລະ ເຂັ້ມແຂງ ເຮັດໃຫ້ເກີດຄວາມເສຍຫາຍຕາມມາ, ຜົນໄດ້ຮັບບໍ່ສູງ ແລະ ສ້າງຂໍ້ຂັດແຍ່ງໃນສັງຄົມຂຶ້ນຕື່ມ; ອັດຕາການເຕີບໂຕ ຂອງເສດຖະກິດ (GDP) ເພີ່ມຂຶ້ນ ແຕ່ບໍ່ທັນຮັບປະກັນຄຸນນະພາບ; ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ຍັງບໍ່ທັນກາຍເປັນພາລະກິດ ຂອງທົ່ວປວງຊົນ ກໍຄື ທຸກຂະແໜງການ, ເຮັດໃຫ້ການຈັດຕັ້ງປະຕິບັດ ຍັງບໍ່ເປັນລະບົບຕໍ່ເນື່ອງ.

④. ການປົກປັກຮັກສາ ແລະ ການສົ່ງເສີມຄຸນຄ່າວັດທະນະທໍາ ຂອງຊາດ, ການປູກຈິດສໍານຶກຮັກຫອມວັດທະນະທໍາອັນດີງາມ ຂອງຊາດ, ການພັດທະນາເສດຖະກິດ ກັບການສ້າງຄວາມສີວິໄລດ້ານຈິດໃຈ ຍັງບໍ່ທັນສົມຄູ່ກັນ ລວມໄປເຖິງການກໍ່ສ້າງຄົນສັງຄົມນິຍົມ ກໍຍັງບໍ່ທັນບຸກທະລຸດ້ານຈິນຕະນາການ ໄດ້ຢ່າງແຂງແຮງ ແລະ ເລິກເຊິ່ງ, ຄ່ານິຍົມບໍ່ຖືກຕ້ອງ ຍັງບໍ່ທັນໄດ້ຮັບການແກ້ໄຂ; ການລົງ

ທຶນເຂົ້າໃນຂົງເຂດການພັດທະນາຊັບພະຍາກອນມະນຸດ ມີຈຳນວນຈຳກັດ, ປະສິດທິຜົນບໍ່ທັນສູງ; ເນື້ອໃນຫຼັກສູດ ແລະ ຄຸນນະພາບການຮຽນການສອນ ແລະ ການຝຶກສີມືແຮງງານ ຂອງສະຖາບັນການສຶກສາ ແລະ ສະຖານພັດທະນາສີມືແຮງງານ ບໍ່ທັນຫັນປ່ຽນສູ່ຄຸນນະພາບໃໝ່ພໍເທົ່າໃດ, ການປະລະການຮຽນ, ທັງການຂາດແຄນຄູສອນໄດ້ເພີ່ມຂຶ້ນ ບໍ່ທັນໄດ້ຮັບການແກ້ໄຂຢ່າງຂາດຕົວ. ການຄົ້ນຄວ້າວິທະຍາສາດ ຍັງມີຂອບເຂດຈຳກັດ, ການນຳໃຊ້ວິທະຍາສາດການກິລາ ເຂົ້າໃນການພັດທະນາກິລາ-ກາຍຍະກຳ ຍັງເຮັດບໍ່ທັນໄດ້ດີເທົ່າທີ່ຄວນ. ການປະຕິບັດນະໂຍບາຍ ແລະ ສະຫວັດດີການ ແກ່ຜູ້ມີຜົນງານ, ຄຸນງາມຄວາມດີຕໍ່ປະເທດຊາດ ຍັງບໍ່ໄດ້ຕາມແຜນ ແລະ ຂາດຕົວ; ການກໍ່ສ້າງກັບການນຳໃຊ້ແຮງງານຍັງບໍ່ທັນສົມຄູ່ກັນ ແລະ ບໍ່ທັນຕອບສະໜອງໄດ້ຄວາມຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຕ້ອງການຕົວຈິງ ຂອງຕະຫຼາດແຮງງານ, ສະພາບການຂາດແຄນແຮງງານ ຍ້ອນກຳລັງແຮງງານ ບໍ່ເຂົ້າສູ່ຕຳແໜ່ງງານຢ່າງເປັນລະບົບ ເຮັດໃຫ້ເກີດສະພາບເຫຼືອບໍ່ພໍ ເຊິ່ງຮຽກຮ້ອງໃຫ້ມີການແກ້ໄຂຢ່າງຈິງຈັງ; ການປະຕິບັດນະໂຍບາຍສົ່ງເສີມຜູ້ທີ່ມີຄວາມຮູ້, ຄວາມສາມາດຍັງບໍ່ທັນສອດຄ່ອງ ແລະ ແທດກັບຕົວຈິງ ຈຶ່ງພາໃຫ້ເກີດມີສະພາບສະໝອງໄຫຼ. ວຽກງານສາທາລະນະສຸກ ຍັງບໍ່ທັນສາມາດຕອບສະໜອງ ແລະ ຮັບໃຊ້ສັງຄົມໄດ້ດີເທົ່າທີ່ຄວນ, ຄວາມສາມາດໃນການປິ່ນປົວ ຂອງຖັນແຖວແພດໝໍ ຍັງຈຳກັດ, ລວມທັງຈັນຍາບັນ-ຈັນຍາທຳ ໃນການບໍລິການ ທີ່ຍັງຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ.

໕. ການວາງແຜນສ້າງ, ປັບປຸງ ແລະ ການຈັດຕັ້ງປະຕິບັດກົດໝາຍຕົວຈິງ ບໍ່ທັນຮັດກຸມ, ໜັກແໜ້ນ; ເນື້ອໃນ ຂອງກົດໝາຍຈຳນວນໜຶ່ງ ຍັງທັບຊ້ອນກັນ ບໍ່ສອດຄ່ອງກັບກົດໝາຍ ທີ່ກ່ຽວຂ້ອງອື່ນໆ; ການຜັນຂະຫຍາຍກົດໝາຍ ເປັນນິຕິກຳໃຕ້ກົດໝາຍ ແລະ ການເຜີຍແຜ່ ຍັງຊັກຊ້າ ເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງ ພົບຄວາມຫຍຸ້ງຍາກ ແລະ ເປັນຊ່ອງຫວ່າງໃຫ້ຄົນບໍ່ດີສວຍໃຊ້; ສະຕິເຄົາລົບກົດໝາຍ ຂອງສັງຄົມບໍ່ທັນສູງ ບວກໃສ່ການບັງຄັບໃຊ້ກົດໝາຍບໍ່ເດັດຂາດ ເຮັດໃຫ້ເກີດປະກົດການຫຍໍ້ທໍ້, ມີການລະເມີດກົດໝາຍຫຼາຍຂຶ້ນ; ການປະຕິບັດຄຳຕັດສິນຂອງສານ ຍັງຊັກຊ້າແກ່ຍາວ, ຫຼາຍກໍລະນີ ບໍ່ສາມາດຈັດຕັ້ງປະຕິບັດໄດ້ ຢ່າງເຂັ້ມງວດ, ສັກສິດ ແລະ ສິ້ນສຸດຕາມກົດໝາຍ.

໖. ການປຸກລະດົມກຳລັງແຮງສັງລວມຂອງສັງຄົມ, ການເສີມຂະຫຍາຍບົດບາດ, ສິດເປັນເຈົ້າຕົນເອງ, ຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງ ຂອງປະຊາຊົນ ເຂົ້າໃນການພັດທະນາ ເປັນຕົ້ນການນຳໃຊ້, ຄຸ້ມຄອງຊັບພະຍາກອນທຳມະຊາດ, ການຮັກສາ ແລະ ຟື້ນຟູສະພາບແວດລ້ອມ ແລະ ລະບົບນິເວດທຳມະຊາດ (ປ່າໄມ້, ແຫຼ່ງນ້ຳ, ສັດປ່າ,...) ຍັງບໍ່ທັນແຂງແຮງ ແລະ ຖືກທິດຍືນຍົງ; ການກຳສະພາບແນວຄິດ ຂອງປະຊາຊົນ ຍັງບໍ່ທັນທົ່ວເຖິງ ແລະ ເລິກເຊິ່ງ ຈຶ່ງມີສະພາບແກ້ໄຂບັນຫາບໍ່ທັນມີຈຸດສຸມ ແລະ ແທດກັບຕົວຈິງ; ການກຳສະພາບ ແລະ ຄຸ້ມຄອງກຳມະກອນ ກໍຄື ຊາວຜູ້ອອກແຮງງານຕາມສາຂາອາຊີບຕ່າງໆ ໃນຂອບເຂດທົ່ວປະເທດ ບໍ່ທັນເປັນລະບົບ ແລະ ບໍ່ສາມາດປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳ ຂອງຊາວຜູ້ອອກແຮງງານ ຕາມກົດໝາຍໄດ້ຢ່າງຄົບຖ້ວນ.

⑦. ການຜັນຂະຫຍາຍແນວທາງ, ນະໂຍບາຍຂອງພັກ ແລະ ລັດ ໃນຂົງເຂດວຽກງານຕ່າງປະເທດ ອອກເປັນອັນລະອຽດ ບາງດ້ານຍັງບໍ່ທັນຢູ່ໃນທ່າບຸກ, ບໍ່ມີຈຸດສຸມ ແລະ ການຈັດຕັ້ງປະຕິບັດ ບໍ່ທັນກົມກຽວ, ໂລ່ງລ່ຽນ ແລະ ລວມສູນ; ການຜັນຂະຫຍາຍການຕົກລົງຂອງການນຳ ບາງດ້ານຍັງຊັກຊ້າ; ການຄາດຄະເນ, ການຄົ້ນຄວ້າຍຸດທະສາດ ແລະ ການວິໄຈ ສະພາບການພາກພື້ນ ແລະ ສາກົນ ຍັງບໍ່ເລິກເຊິ່ງ ແລະ ບໍ່ທັນຕອບສະໜອງໄດ້ໜ້າທີ່ການເມືອງ ໃນໄລຍະໃໝ່ ເທົ່າທີ່ຄວນ.

**4. ສາເຫດທີ່ພາໃຫ້ມີຈຸດອ່ອນ ແລະ ຂໍ້ຄົງຄ້າງ.**

①. ການເຮັດວຽກງານການເມືອງ-ແນວຄິດ ຍັງບໍ່ທັນແທດເໝາະ ແລະ ທົ່ວເຖິງ, ບໍ່ທັນກັບການປ່ຽນແປງ ຂອງສະພາບການໃນໄລຍະໃໝ່; ການສ້າງການຫັນປ່ຽນທາງດ້ານແນວຄິດ ຍັງຊັກຊ້າ, ແນວຄິດຮັກສາເດີມ, ເອື່ອຍອີງ ບໍ່ທັນໄດ້ຮັບການແກ້ໄຂ, ຄວາມເປັນເຈົ້າການ, ຄວາມຮັບຜິດຊອບຕໍ່ວຽກງານບໍ່ທັນສູງ, ພະນັກງານຈຳນວນບໍ່ໜ້ອຍ ແລ່ນນຳແຕ່ຜົນປະໂຫຍດສ່ວນຕົວ, ຂາດສະຕິຊາດ, ເອກະລາດ, ເປັນເຈົ້າຕົນເອງ, ຕົກເຂົ້າກົນອຸບາຍຫັນປ່ຽນໂດຍສັນຕິ ແລະ ການຫັນປ່ຽນດ້ວຍຕົນເອງ, ສະຕິມິດ-ສັດຕູ ບໍ່ຈະແຈ້ງ ຈຶ່ງຖືກຄົນບໍ່ດີສວຍໃຊ້ ເປັນຕົ້ນແມ່ນ ດ້ານເສດຖະກິດ.

②. ການນຳພາ-ຊີ້ນຳ ທັນທິດທາງ, ໜ້າທີ່ລວມ ທີ່ກອງປະຊຸມໃຫຍ່ ຄັ້ງທີ XI ວາງອອກ ແລະ ການຈັດຕັ້ງຜັນຂະຫຍາຍ ບັນດາມະຕິ, ຄຳສັ່ງ ຂອງສູນກາງພັກ ຢູ່ຂະແໜງການ ແລະ ທ້ອງຖິ່ນ ຈຳນວນໜຶ່ງຍັງຊັກຊ້າ, ແກ່ຍາວ ບໍ່ທັນກາຍເປັນແຜນງານ, ເປັນໂຄງການທີ່ແທດຕົວຈິງ ແລະ ການວາງຄາດໝາຍສູ້ຊົນ ບໍ່ທັນແຈ້ງ, ບໍ່ຕິດພັນກັບການແກ້ໄຂບັນຫາຕົວຈິງ ແລະ ບໍ່ມີຈຸດສຸມ, ບໍ່ທັນມີການຈັດຕັ້ງຊີ້ນຳ-ບັນຊາ ຢ່າງແທດເຖິງ ແລະ ເກີດການຫັນປ່ຽນຕົວຈິງ ຈຶ່ງເຮັດໃຫ້ການປະຕິບັດ ບໍ່ທັນເປັນຂະບວນການອັນຟົດຟື້ນ, ກວ້າງຂວາງ. ຄວາມຮັບຜິດຊອບການເມືອງ ຂອງຄະນະພັກແຕ່ລະຂັ້ນ ຢູ່ຫຼາຍບ່ອນຍັງບໍ່ສູງ, ເກີດມີສະພາບ "ເວົ້າຫຼາຍກວ່າເຮັດ" ແລະ "ຂາດປັດໄຈຄວາມເດັດຂາດ", ບໍ່ສະດຸ້ງໄວ, ຄວາມກ້າຕັດສິນໃຈ ແລະ ຄວາມເປັນເອກະພາບບໍ່ທັນສູງ, ບໍ່ເອົາຈິງເອົາຈັງໃນການແກ້ໄຂບັນຫາ, ບໍ່ທັນສາມາດເຕົ້າໂຮມກຳລັງແຮງສັງລວມ ໃນທົ່ວລະບົບການເມືອງ ໄດ້ຢ່າງແທ້ຈິງ.

③. ຄວາມສາມາດນຳພາ ຂອງຄະນະພັກ, ການຄຸ້ມຄອງບໍລິຫານ ຂອງອົງການປົກຄອງແຕ່ລະຂັ້ນ ບໍ່ທັນສູງ, ກົງຈັກການຈັດຕັ້ງບາງຂະແໜງການ ແຕ່ຂັ້ນສູນກາງລົງເຖິງທ້ອງຖິ່ນຍັງໃຫຍ່ໂຕ, ຂາດປະສິດທິພາບ, ການນຳພາຄຸ້ມຄອງ ມີບາງດ້ານບໍ່ທັນຈະແຈ້ງ, ຮັດກຸມ ແລະ ເຂັ້ມງວດ; ກົນໄກບໍລິຫານຍັງມີລັກສະນະອາຍາສິດ, ຫຼາຍຂອດຂັ້ນ, ຄຸມເຄືອ ແລະ ບໍ່ວ່ອງໄວ; ການປະຕິບັດກົດໝາຍ, ລະບຽບການບໍ່ທັນເຂັ້ມງວດ, ການປະສານງານ ລະຫວ່າງຂັ້ນສູນກາງດ້ວຍກັນ, ຂັ້ນສູນກາງ ກັບທ້ອງຖິ່ນ ແລະ ຂັ້ນທ້ອງຖິ່ນ ກັບທ້ອງຖິ່ນດ້ວຍກັນ ຍັງບໍ່ທັນໂລ່ງລ່ຽນ ເຮັດໃຫ້ການປະຕິບັດວຽກງານ ຂອງພາກສ່ວນຕ່າງໆ ບໍ່ເປັນເອກະພາບກັນ ໂດຍສະເພາະ ເມື່ອກວດກາພົບເຫັນຈຸດອ່ອນແລ້ວ ແຕ່ບໍ່ໄດ້ຮັບການແກ້ໄຂ ຢ່າງທັນການ; ສະພາບຄວາມລະເຫຼີງ ແລະ ໂຍນຄວາມຮັບຜິດຊອບໃຫ້ກັນ ລະຫວ່າງພາກສ່ວນຕ່າງໆ ໄດ້ເປັນຊ່ອງຫວ່າງ ແລະ ເປັນອຸປະສັກໃນການຍົກສູງຄວາມເຂັ້ມແຂງ ຂອງວຽກງານທີ່ກ່ຽວຂ້ອງ.

④. ພວກຄົນບໍ່ຫວັງດີ ໄດ້ໃຊ້ຮູບການ, ວິທີການໃໝ່ເລິກແລບແນບນຽນກວ່າເກົ່າ ເພື່ອເຄື່ອນໄຫວມ້າງເພທຳລາຍປະເທດພວກເຮົາ, ໂຄສະນາບິດເບືອນຄວາມຈິງ ຢ່າງບໍ່ລົດລະ ໂດຍສວຍໃຊ້ຈຸດ

ບົກພ່ອງ ໃນການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ, ສະພາບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ປະກົດການຫຍໍ້ທໍ້ໃນສັງຄົມ ແລະ ປັດໄຈນອກຕົວອື່ນໆ ເພື່ອແບ່ງແຍກຄວາມສາມັກຄີພາຍໃນ ແລະ ບັ່ນທອນຄວາມເຊື່ອໝັ້ນ ຂອງທົ່ວປວງຊົນ ຕໍ່ພັກ, ຕໍ່ກຳລັງປະກອບອາວຸດ.

**5. ບົດຮຽນຕົ້ນຕໍ ໃນໄລຍະຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ.**

①. ການຍົກສູງຄວາມເປັນແບບຢ່າງນຳໜ້າ ໃນການນຳພາ-ຊີ້ນຳ ຢ່າງເຂັ້ມແຂງ ແລະ ທັນການ ຂອງຄະນະບໍລິຫານງານສູນກາງພັກ ແມ່ນປັດໄຈຕັດສິນການແກ້ໄຂບັນຫາ ທີ່ເກີດຂຶ້ນແຕ່ລະໄລຍະ. ສູນກາງພັກໄດ້ຍຶດໝັ້ນຫຼັກການນຳພາຂອງພັກ, ເສີມຂະຫຍາຍຫຼັກການລວມສູນປະຊາທິປະໄຕ ມີການຕິດຕາມປະເມີນຜົນການຈັດຕັ້ງປະຕິບັດ ຢ່າງເປັນລະບົບ ແລະ ເຂັ້ມງວດ ເພື່ອຮັບປະກັນໃຫ້ແນວທາງການເມືອງຂອງພັກ ທີ່ວາງອອກໃນແຕ່ລະໄລຍະ ໄດ້ຮັບການຈັດຕັ້ງຢ່າງເປັນຮູບປະທຳ, ທັງຮັບປະກັນເສີມຂະຫຍາຍກຳລັງແຮງສັງລວມ ຂອງທຸກການຈັດຕັ້ງພັກ, ລັດ ແລະ ສັງຄົມ ເຂົ້າໃນການແກ້ໄຂບັນຫາຕ່າງໆ ຂອງຊາດຢ່າງທັນການ; ເພີ່ມທະວີຄວາມເປັນແບບຢ່າງນຳໜ້າ ຂອງການນຳແຕ່ລະຂັ້ນ, ຂອງສະມາຊິກພັກແຕ່ລະສະຫາຍ ໃນດ້ານແບບແຜນເຮັດວຽກທີ່ມີວິທະຍາສາດ, ເອົາການເອົາງານ ແລະ ແບບແຜນດຳລົງຊີວິດທີ່ປອດໃສ ຕິດພັນກັບການແກ້ໄຂບັນຫາພະນັກງານ ຕາມທິດ ມີເຂົ້າ-ມີອອກ, ມີຂຶ້ນ-ມີລົງ ຢ່າງເຂັ້ມງວດ ແມ່ນເປັນປັດໄຈສຳຄັນ ໃນການຍົກສູງບົດບາດນຳພາຂອງພັກ.

②. ເພີ່ມທະວີວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ, ການເຄື່ອນໄຫວວຽກງານຕ່າງປະເທດ ຢ່າງແຂງແຮງ ບົນຈິດໃຈເອກະລາດ ເປັນເຈົ້າຕົນເອງ ແລະ ເປັນເຈົ້າການ, ຮັບປະກັນສະຖຽນລະພາບທາງດ້ານການເມືອງ, ຄວາມໝັ້ນຄົງ ເພື່ອສ້າງສະພາບແວດລ້ອມເອື້ອອຳນວຍ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

③. ການນຳພາພັດທະນາເສດຖະກິດ ແມ່ນໜ້າທີ່ໃຈກາງ ແລະ ຮີບດ່ວນຂອງພັກ. ຕັ້ງໜ້າສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການສ້າງການຫັນປ່ຽນທາງດ້ານຈິນຕະນາການ ແລະ ເພີ່ມທະວີການນຳພາ-ຊີ້ນຳ ຢ່າງຮອບດ້ານຂອງພັກ ໂດຍເລີ່ມຈາກການກຳນົດຂະແໜງ ທີ່ເປັນທ່າແຮງບົ່ມຊ້ອນ ຢູ່ແຕ່ລະທ້ອງຖິ່ນ, ສຸມທຶນຮອນ, ສະຕິປັນຍາ ຂອງປະຊາຊົນບັນດາເຜົ່າ ເຂົ້າໃສ່ການພັດທະນາເສດຖະກິດແຫ່ງຊາດ ໃຫ້ເຂັ້ມແຂງ, ປະຕິບັດນະໂຍບາຍສົ່ງເສີມການຜະລິດຢ່າງຄົບຊຸດ, ຖືສຳຄັນ ແລະ ເອົາໃຈໃສ່ຕໍ່ການພັດທະນາທີ່ຍືນຍົງ. ພ້ອມກັນນັ້ນ ກໍຮູ້ຍາດແຍ່ງກາລະໂອກາດ, ບົດຮຽນປະສົບການດ້ານການຜະລິດ, ການບໍລິຫານທຶນຮອນ, ການນຳໃຊ້ວິທະຍາສາດເຕັກໂນໂລຊີ ຂອງພາກພື້ນ ແລະ ສາກົນ ຢ່າງສອດຄ່ອງ ແລະ ເປັນເຈົ້າການ.

④. ພັດທະນາເສດຖະກິດ ຕ້ອງຕິດແໜ້ນກັບການພັດທະນາວັດທະນະທຳ, ຂຸດຄົ້ນກຳລັງແຮງດ້ານວັດທະນະທຳ ເຂົ້າໃນການພັດທະນາເສດຖະກິດ; ຢາກພັດທະນາເສດຖະກິດເອກະລາດ ເປັນເຈົ້າຕົນເອງ ຕ້ອງຖືການພັດທະນາສັງຄົມເປັນເປົ້າໝາຍ, ເປັນກຳລັງແຮງ ແລະ ສິ່ງຊຸກດັນ ໂດຍສະເພາະພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ, ສອດຄ່ອງກັບທ່າແຮງບົ່ມຊ້ອນຂອງແຕ່ລະທ້ອງຖິ່ນ, ຕອບສະໜອງຄວາມຕ້ອງການພັດທະນາເສດຖະກິດ-ສັງຄົມ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ (ການສ້າງແຮງງານທີ່ມີສີມື ແລະ ມີຄຸນນະພາບ) ໃນແຕ່ລະໄລຍະ. ສ້າງເສດຖະກິດເອກະ

ລາດ ເປັນເຈົ້າຕົນເອງ ໃຫ້ຕິດພັນກັບການຄຸ້ມຄອງ, ນຳໃຊ້ຊັບພະຍາກອນທຳມະຊາດ ຢ່າງສົມເຫດສົມຜົນ, ມີປະສິດທິຜົນ ແລະ ຍືນຍົງ.

⑤. ໃນການຜັນຂະຫຍາຍແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ນະໂຍບາຍ, ກົດໝາຍຂອງລັດ ຕ້ອງເຊີດຊູບົດບາດນຳພາ-ຊີ້ນຳ-ບັນຊາທີ່ເຂັ້ມແຂງ, ປະດິດສ້າງ ແລະ ເປັນເຈົ້າການ ຂອງຄະນະນຳ ເປັນຕົ້ນ ຜູ້ເປັນຫົວໜ້າຢູ່ແຕ່ລະບ່ອນ ໂດຍສະເພາະ ໃນໄລຍະທີ່ພົບຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ຄະນະພັກ-ຄະນະນຳ ແຕ່ສູນກາງຮອດທ້ອງຖິ່ນ ຕ້ອງຍົກສູງຄວາມຮັບຜິດຊອບບັນຊາ-ຊີ້ນຳ ຄືການບັນຊາສະໜາມຮົບໜຶ່ງໆ; ແກ້ໄຂສະພາບຊໍ້າຊ້ອນດ້ານພາລະບົດບາດ, ຄວາມຫຍຸ້ງເຫຍີງໃນຂອດການປະສານງານ, ຍົກສູງຄວາມຮັບຜິດຊອບ ຂອງແຕ່ລະພາກສ່ວນ, ເອົາໃຈໃສ່ປັບປຸງໃຫ້ຈະແຈ້ງ, ກະທັດຮັດ, ເປັນລະບົບ ແລະ ໂລ່ງລ່ຽນ. ເອົາໃຈໃສ່ກອດກາວິໄນ ຂອງພັກ ແລະ ຄວາມຍຸຕິທຳ ໃນສັງຄົມ.

⑥. ເສີມຂະຫຍາຍປະຊາທິປະໄຕ ຢູ່ພາຍໃນພັກຢ່າງແຂງແຮງ ດ້ວຍຮູບການເໝາະສົມ, ມີການຈັດຕັ້ງນຳພາທີ່ດີ, ຮັບປະກັນໃຫ້ພະນັກງານ-ສະມາຊິກພັກ ແລະ ມະຫາຊົນ ມີສ່ວນຮ່ວມຫຼາຍຂຶ້ນ ໃນການຕິດຕາມການເຄື່ອນໄຫວ ແລະ ນຳພາ-ຊີ້ນຳ ຂອງບຸກຄົນຜູ້ນຳພາ ເພື່ອສ້າງສະພາບແວດລ້ອມສັງຄົມອັນເອື້ອອຳນວຍ ໃຫ້ແກ່ການແກ້ໄຂບັນຫາຫຍໍ້ທໍ້ຕ່າງໆດີຂຶ້ນ.

**III. ເນື້ອໃນຕົ້ນຕໍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ.**

**1. ກອງປະຊຸມໃຫຍ່ ໄດ້ຮັບຮອງເອົາໂຄງການການເມືອງ ຂອງພັກ ສະບັບທີ 3** ເຊິ່ງເປັນເອກະສານສຳຄັນ ທີ່ຊີ້ທາງເດີນໃຫ້ພັກ ແລະ ປວງຊົນລາວບັນດາເຜົ່າ ສືບຕໍ່ບູລະນະລະບອບປະຊາທິປະໄຕປະຊາຊົນ, ເຊິ່ງເປັນລະບອບການເມືອງ ທີ່ໄດ້ມາຈາກປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນນັ້ນ ໃຫ້ໜັກແໜ້ນເຂັ້ມແຂງຍິ່ງໆຂຶ້ນ.

ເປັນການຢືນຢັນຕື່ມອີກ ກ່ຽວກັບຄວາມເດັດດ່ຽວໜຽວແໜ້ນ ຕໍ່ອຸດົມການອັນສູງສຸດຂອງພັກ ກໍຄື ຄວາມຕັດສິນໃຈ ຍຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ຕໍ່ທາດແທ້ປະຕິວັດ ແລະ ມູນເຊື້ອອັນສະຫງ່າງາມ ຂອງພັກປະຊາຊົນປະຕິວັດລາວ ໃນການນຳພາປະເທດຊາດ ສູ່ຄວາມວັດທະນະຖາວອນ.

ຖືເປັນຂີດໝາຍສຳຄັນປະຫວັດສາດ ທີ່ພັກ ກໍຄື ການນຳພັກປະຊາຊົນປະຕິວັດລາວ ຮຸ່ນນີ້ ໄດ້ມີຄວາມມຸ່ງໝັ້ນ ແລະ ສ້າງພື້ນຖານປະໄວ້ ໃຫ້ຮຸ່ນສືບທອດ ສືບຕໍ່ດຳເນີນພາລະກິດປະຕິວັດ ສູ່ຈຸດໝາຍທີ່ວາງໄວ້ ຢ່າງໜັກແໜ້ນ.

ການສ້າງໂຄງການການເມືອງ ສະບັບທີ 3 ແມ່ນການສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ ທີ່ປະທານ ໄກສອນ ພົມວິຫານ ເປັນຜູ້ລິເລີ່ມ ແລະ ເປັນສະຖາປະນິກຕົ້ນຕໍ ທີ່ປະໄວ້ໃຫ້ພວກເຮົາສືບທອດຕໍ່ໄປ ຢ່າງບໍລິສຸດ ແລະ ຈີງຮັກພັກດີ. ຕະຫຼອດໄລຍະ 70 ປີ ແຫ່ງການນຳພາ ຂອງພັກ ໃນພາລະກິດຕໍ່ສູ້ກູ້ຊາດ ກໍຄື ພາລະກິດແຫ່ງການປົກປັກຮັກສາ ແລະ ພັດທະນາປະເທດຊາດ, ສາມາດສະຫຼຸບສັງລວມໄດ້ 6 ບົດຮຽນ ທີ່ມີລັກສະນະກົດເກນ ຂອງການປະຕິວັດລາວ ຄື:

①. ການນໍາພາຂອງພັກ ແມ່ນປັດໃຈຕັດ ສິນທຸກໄຊຊະນະ ຂອງການປະຕິວັດລາວ; ພັກຕ້ອງ ຍຶດໝັ້ນອຸດົມການສັງຄົມນິຍົມ, ຍຶດຖືເອົາລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ມູນ ເຊື້ອອັນດີງາມຂອງພັກ ເພື່ອຊີ້ທິດເຍືອງທາງໃຫ້ແກ່ການເຄື່ອນໄຫວ ຂອງພັກ ໃນແຕ່ລະໄລຍະ.

②. ການສ້າງຄວາມສາມັກຄີເປັນເອກະພາບສູງ ພາຍໃນພັກ ເປັນໃຈກາງແຫ່ງການເຕົ້າໂຮມ ຄວາມສາມັກຄີເປັນປຶກແຜ່ນ ຂອງທົ່ວປວງຊົນລາວທັງຊາດ.

③. ຍຶດໝັ້ນແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ຕິດພັນ ກັບແນວທາງມະຫາຊົນ ຂອງພັກ, ການກໍ່ສ້າງຮາກຖານການເມືອງ ໃຫ້ໜັກແໜ້ນ, ເຂັ້ມແຂງ.

④. ການພັດທະນາເສດຖະກິດ ຕ້ອງໝູນໃຊ້ບັນດາກົດເກນພາວະວິໄສ ຢ່າງຖືກຕ້ອງ ແລະ ນໍາ ໃຊ້ໝາກຜົນ ຂອງການພັດທະນາວິທະຍາສາດ ທີ່ທັນສະໄໝ.

⑤. ປັບປຸງການບໍລິຫານລັດ ທີ່ປົກຄອງດ້ວຍກົດໝາຍ ໃຫ້ເຂັ້ມງວດ, ຮັບປະກັນໃຫ້ລັດເປັນ ລັດ ຂອງປະຊາຊົນ ໂດຍປະຊາຊົນ ເພື່ອປະຊາຊົນ ຢ່າງແທ້ຈິງ.

⑥. ຍົກສູງນໍ້າໃຈຮັກຊາດ, ເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຕິດພັນກັບ ການພົວພັນຮ່ວມມືກັບສາກົນ ຢ່າງຖືກຕ້ອງ.

ໂຄງການການເມືອງ ໄດ້ວາງຈຸດໝາຍ ເມື່ອຮອດປີ 2055 ທີ່ເປັນມື້ສ້າງຕັ້ງພັກ ປະຊາຊົນປະຕິ ວັດລາວ ຄົບຮອບ 100 ປີ ຈະສູ້ຊົນສ້າງ ສປປ ລາວ ໃຫ້ເປັນປະເທດກໍາລັງພັດທະນາ ທີ່ມີລາຍຮັບປານ ກາງສູງ ຫຍັບເຂົ້າໃກ້ປະເທດທີ່ມີລາຍຮັບສູງ, ມີລະບົບການເມືອງທີ່ເຂັ້ມແຂງ, ມີພື້ນຖານເສດຖະກິດ ທີ່ທັນສະໄໝ, ກໍາລັງການຜະລິດ ໄດ້ຮັບການພັດທະນາຢ່າງຮອບດ້ານ ໂດຍມີການພົວພັນການຜະລິດ ທີ່ສອດຄ່ອງ ແລະ ກ້າວໜ້າ, ຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ໄດ້ມີພື້ນຖານອັນໜັກແໜ້ນ ກ້າວສູ່ຄວາມອິ່ມໜໍາສໍາລານ.

**✱ ໂຄງການການເມືອງ ສະບັບທີ 3 ໄດ້ວາງ 11 ແຜນນະໂຍບາຍໃຫຍ່ ຂອງການບູລະນະລະ ບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ດັ່ງນີ້:**

①. ພັດທະນາເສດຖະກິດຕະຫຼາດ ຕາມທິດສັງຄົມນິຍົມ ໃຫ້ເປັນລະບົບ, ທັນສະໄໝ.

②. ຫັນເປັນອຸດສາຫະກໍາ, ຫັນເປັນທັນສະໄໝ, ຫັນເປັນດີຈີຕອນ.

③. ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ, ຮັບມືກັບການປ່ຽນແປງດິນຟ້າອາກາດ.

④. ພັດທະນາວັດທະນະທໍາ-ສັງຄົມ, ປະຕິບັດຢ່າງສະເໝີຕົ້ນສະເໝີປາຍ ແນວທາງປົກປັກ ຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

⑤. ພັດທະນາຄົນລາວຢ່າງຮອບດ້ານ, ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການ ຂອງການ ພັດທະນາປະເທດຊາດ ໃນໄລຍະໃໝ່.

⑥. ສ້າງເຫງື່ອພະລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ ທີ່ມີຄວາມ ໜັກແໜ້ນ, ເຂັ້ມແຂງ ແລະ ມີແບບແຜນທັນສະໄໝ.

⑦. ຍຶດໝັ້ນແນວທາງການຕ່າງປະເທດ ຂອງພັກ, ສ້າງເງື່ອນໄຂອຳນວຍ ໃຫ້ແກ່ພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.

⑧. ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຮັບປະກັນການກຳອຳນາດ ຂອງພັກ ໃຫ້ມີຄວາມໝັ້ນຄົງ.

⑨. ສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ.

⑩. ເສີມຂະຫຍາຍມະຫາສາມັກຄີທົ່ວປວງຊົນ, ປະຕິບັດແນວທາງມະຫາສາມັກຄີທົ່ວປວງຊົນຢ່າງໜັກແໜ້ນ.

⑪. ເສີມຂະຫຍາຍ ສິດເປັນເຈົ້າ ຂອງປະຊາຊົນຢ່າງບໍ່ຢຸດຢັ້ງ.

( ມີເອກະສານຕ່າງຫາກ)

**2. ເພື່ອເຮັດໃຫ້ໂຄງການການເມືອງ ຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍສູ່ລວງເລິກນັ້ນ,** ກອງປະຊຸມໃຫຍ່ຄັ້ງນີ້ ໄດ້ຮັບຮອງເອົາທັດສະນະ, ເນື້ອໃນການຕີລາຄາໝາກຜົນ ຂອງການປະຕິບັດແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ ໃນເກືອບ 40 ປີ ຜ່ານມາ, ພາຍໃຕ້ການນຳຂອງປະທານ ໄກສອນ ພົມວິຫານ ໄດ້ກຳນົດແນວທາງປ່ຽນແປງໃໝ່, ເຊິ່ງເປັນການສ້າງການຫັນປ່ຽນທາງດ້ານຈິນຕະນາການ ໃຫ້ຖືກຕ້ອງສອດຄ່ອງກັບຈຸດພິເສດ ຂອງປະເທດ ແລະ ການປ່ຽນແປງຂອງໂລກ, ໄດ້ກາຍເປັນທອນໄຟແຫ່ງແສງສະຫວ່າງດວງໃໝ່ ທີ່ເກີດຂຶ້ນໃນປະເທດລາວ ແລະ ທອນໄຟດວງນີ້ ໄດ້ເປັນເຂັມທິດເບີ່ງທາງໃຫ້ພັກ ເດີນຕາມ ໂດຍໃຊ້ເວລາ 40 ປີ ຜ່ານມາ ແລະ ແນວທາງປ່ຽນແປງໃໝ່ນີ້ ຍັງສືບຕໍ່ເປັນທິດນຳໃຫ້ພັກ ເດີນຕາມຕໍ່ໆໄປຢ່າງບໍ່ທໍ້ຖອຍ ເພາະວ່າ ແນວທາງປ່ຽນແປງໃໝ່ ເປັນແນວທາງທີ່ກຳນົດອອກມາຢ່າງເປັນລະບົບຄົບຊຸດ, ລວມທັງຈຸດເລີ່ມ ແລະ ການຕີກອບທີ່ຮັດກຸມ ແລະ ຈັດວາງບຸລິມະສິດ ໃນຂົງເຂດທີ່ຕ້ອງປ່ຽນແປງ, ສ້າງໄດ້ຄວາມຮັບຮູ້ໃໝ່ ດ້ານທິດສະດີ ກ່ຽວກັບສັງຄົມນິຍົມ ແລະ ເສັ້ນທາງກ້າວຂຶ້ນຂອງປະເທດ ຢ່າງແທດເໝາະກັບຄວາມສາມາດ ທີ່ອຳນວຍໃຫ້ໃນແຕ່ລະໄລຍະ ເຊິ່ງຖືໄດ້ວ່າ ແນວທາງປ່ຽນແປງໃໝ່ຮອບດ້ານ ມີຫຼັກການຂອງພັກ ທີ່ວາງອອກ ແລະ ການທີ່ພັກນຳພາເຂົ້າສູ່ການປະຕິບັດ ຜ່ານ 40 ປີ ມານີ້ ແມ່ນໄດ້ນຳພາປະເທດເຮົາ ສາມາດຜ່ານພົ້ນພະຍຸລົມແດງ ແລະ ສິ່ງທ້າທາຍທົດສອບ ອັນລະອຽດລະອ່ຽວ, ຂ້ຽວຂາດມາໄດ້, ລະບອບປະຊາທິປະໄຕປະຊາຊົນ ໄດ້ຮັບການບູລະນະໃຫ້ເປັນລະບົບ, ຕໍ່ເນື່ອງ ແລະ ນັບມື້ນັບສົມບູນ ຍິ່ງໆຂຶ້ນ.

ພັກເຮົາ ສືບຕໍ່ຍຶດໝັ້ນຢ່າງສະເໝີຕົ້ນສະເໝີປາຍ ບັນດາຫຼັກການ ແລະ ທັດສະນະພື້ນຖານໃນການຍູ້ແຮງການຈັດຕັ້ງປະຕິບັດແນວທາງປ່ຽນແປງໃໝ່ ຂອງພັກເຮົາ ດັ່ງນີ້:

①. ການປ່ຽນແປງໃໝ່, ການສະແຫວງຫາສັດຈະທຳ ໃນການນຳ ພາຂອງພັກ ແມ່ນພາລະກິດປະຕິວັດອັນເລິກເຊິ່ງເຖິງຖອງ ທີ່ຕ້ອງດຳເນີນການ ຢ່າງຮອບດ້ານ, ຕໍ່ເນື່ອງ ແລະ ຍາວນານ. ພວກເຮົາຕ້ອງຍຶດໝັ້ນໃນອັນທີ່ພັກເຮົາຍຶດຖືເປັນຫຼັກການ, ທັງຕ້ອງປະດິດສ້າງ, ຕໍ່ຍອດໃຫ້ສູງຂຶ້ນ ແລະ ຫັນເຂົ້າສູ່ລວງເລິກກວ່າເກົ່າ, ຕັດສິນໃຈປະຕິບັດຢ່າງເດັດດ່ຽວໜຽວແໜ້ນ.

②. ເຊີດຊູນ້ຳໃຈຮັກຊາດອັນດູດດື່ມ, ສະຕິຊາດເອກະພາບອັນສູງສົ່ງ ແລະ ຮັກລະບອບໃໝ່ຢ່າງສຸດຊຶ້ງ ໄປພ້ອມກັບການເສີມຂະຫຍາຍຈິດໃຈເອກະລາດ, ເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມ

ແຂງດ້ວຍຕົນເອງຢ່າງຮອບດ້ານ ຕິດພັນກັບການຍົກສູງຄວາມເປັນເຈົ້າ ໃນການເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ທັງເພີ່ມທະວີຄວາມສາມັກຄີພາຍໃນ, ມີຄວາມເປັນເອກະພາບລະດັບສູງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ການເຄື່ອນໄຫວ ໃນທົ່ວພັກ ແລະ ໃນສັງຄົມ.

③. ຕ້ອງຖືສຳຄັນພັດທະນາຊັບພະຍາກອນມະນຸດ, ພູມປັນຍາ ຂອງຄົນໃນຊາດ, ຮັບປະກັນຄວາມສົມສ່ວນ ລະຫວ່າງພັດທະນາເສດຖະກິດ ກັບການພັດທະນາວັດທະນະທຳ-ສັງຄົມ ແລະ ປົກປັກຮັກສາສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ, ລະຫວ່າງ ພັດທະນາເສດຖະກິດ ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ກຽມພ້ອມໃນການຮັບມື ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຜົນກະທົບຈາກໄພພິບັດທຳມະຊາດ.

④. ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ຕາມທິດສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ ທີ່ສັກສິດ ແລະ ສະເໝີພາບ ພາຍໃຕ້ການນຳພາ ຂອງພັກ; ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າ ໄດ້ເຂົ້າຮ່ວມການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍຄວາມຮັບຜິດຊອບສູງ ຕໍ່ພັນທະ, ໜ້າທີ່ ຂອງພົນລະເມືອງລາວ ຕາມລັດຖະທຳມະນູນ ແລະ ກົດໝາຍ.

⑤. ເພີ່ມຄວາມສາມາດນຳພາ ແລະ ກຳລັງແຮງສູ້ຮົບ ຂອງຄະນະພັກແຕ່ລະຂັ້ນ ໃນທຸກຂົງເຂດວຽກງານ, ສືບຕໍ່ສ້າງຮາກຖານພັກ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ເປັນກຳລັງແຮງໃຫ້ແກ່ການຂັບເຄື່ອນການນຳພາ-ຊີ້ນຳ ຂອງຄະນະພັກໃນລະບົບການເມືອງ ຢູ່ແຕ່ລະຂັ້ນ; ປັບປຸງລະບອບແບບແຜນ, ກົນໄກການນຳພາ ຂອງພັກ ແລະ ການຄຸ້ມຄອງ-ບໍລິຫານ ຂອງລັດ ໃຫ້ຖືກຕ້ອງ ຕາມຫຼັກວິທະຍາສາດ ແລະ ສອດຄ່ອງກັບຈຸດພິເສດ ຂອງປະເທດເຮົາ ເຂົ້າສູ່ກົດໝາຍ ແລະ ລະບຽບການ, ແຍກໃຫ້ຈະແຈ້ງ ແລະ ເຄົາລົບຢ່າງເຂັ້ມງວດກ່ຽວກັບທີ່ຕັ້ງ, ບົດບາດການນຳພາຂອງພັກ ກັບການຄຸ້ມຄອງ-ບໍລິຫານ ຂອງລັດ, ເລືອກເຟັ້ນ ໃຫ້ໄດ້ພະນັກງານນຳພາ, ຄຸ້ມຄອງທີ່ດີ ແລະ ມີຄວາມສາມາດ.

⑥. ເພີ່ມທະວີການນຳພາເດັດຂາດ, ໂດຍກົງ, ຮອບດ້ານຂອງພັກ ຕໍ່ກຳລັງປະກອບອາວຸດປະຕິວັດ, ການປະຕິບັດແນວທາງ, ນະໂຍບາຍ ການຕ່າງປະເທດທີ່ຄ່ອງແຄ້ວ, ມີໄຫວພິບ ເພື່ອຮັບປະກັນຄວາມໝັ້ນຄົງຂອງຊາດ, ສ້າງເງື່ອນໄຂສະພາບແວດລ້ອມທີ່ສະດວກ ໃຫ້ແກ່ການປົກປັກຮັກສາ ແລະ ສ້າງສາປະເທດຊາດ.

ບົນພື້ນຖານການຕີລາຄາການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ໄດ້ສະຫຼຸບຖອດຖອນບົດຮຽນ ແລະ ສືບຕໍ່ວາງຈຸດໝາຍ ເພື່ອນຳພາພາລະກິດປະຕິວັດ ຮອດປີ 2055, ໃນນັ້ນ ໄດ້ວາງຍຸດທະສາດພັດທະນາ ໄລຍະ 10 ປີ (2026-2035) ແລະ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໃຫ້ມີພື້ນຖານອັນໜັກແໜ້ນ ສຳລັບບາດກ້າວເດີນຕໍ່ໄປ ຂອງປະເທດຊາດ.

**1). ຮອດປີ 2035:**

- ສືບຕໍ່ດໍາເນີນການສ້າງ, ປັບປຸງ ແລະ ຍົກລະດັບ ບັນດາປະຖົມປັດໄຈຕົ້ນຕໍ ໃຫ້ແກ່ການບູລະນະລະບອບປະຊາທິປະໄຕປະຊາຊົນ ໃຫ້ໜັກແໜ້ນ, ຍົກສູງຄວາມເປັນເຈົ້າຕົນເອງ ສືບຕໍ່ສ້າງພື້ນຖານໃນການພັດທະນາ.

- ສູ້ຊົນເປັນປະເທດ ທີ່ມີລາຍຮັບປານກາງ ແລະ ຄ່ອຍໆຫຍັບເຂົ້າສູ່ການມີລາຍຮັບປານກາງສູງໃນລະດັບໜຶ່ງ.

- ລວມຍອດຜະລິດຕະພັນພາຍໃນ GDP ໄລຍະ ປີ 2031-2035 ໃຫ້ບັນລຸ 7% ຕໍ່ປີຂຶ້ນໄປ.

- ເກັບລາຍຮັບໃຫ້ບັນລຸ 23-24% ຂອງ GDP ໄລຍະ ປີ 2031-2035.

**2). ໃນ 5 ປີຕໍ່ໜ້າ (2026-2030):**

- ສືບຕໍ່ຮັບປະກັນ ສະຖຽນລະພາບດ້ານການເມືອງ ຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ, ມີຄວາມສາມັກຄີເປັນປຶກແຜ່ນ ໃນທົ່ວປວງຊົນ, ເອກະລາດ, ອຳນາດອະທິປະໄຕ ໄດ້ຮັບການປົກປັກຮັກສາໄວ້ໄດ້ ຢ່າງໝັ້ນຄົງ.

- ປະເທດຊາດ ຫຼຸດພົ້ນອອກຈາກສະຖານະພາບ ປະເທດດ້ອຍພັດທະນາ.

- ສູ້ຊົນໃຫ້ອັດຕາຄວາມທຸກຍາກຫຼຸດລົງ ຍັງເຫຼືອໜຶ່ງຕົວເລກ; ຍົກລະດັບການແກ້ໄຂບັນຫາຄວາມທຸກຍາກ ຂອງປະຊາຊົນ ເປັນວາລະແຫ່ງຊາດ.

- ສູ້ຊົນໃຫ້ອັດຕາການເຕີບໂຕ ຂອງລວມຍອດຜະລິດຕະພັນພາຍໃນ (GDP) ເພີ່ມຂຶ້ນ ສະເລ່ຍ 6% ຕໍ່ປີ ຂຶ້ນໄປ.

- ສປປ ລາວ ເຄື່ອນໄຫວການຕ່າງປະເທດ ຢ່າງເປັນເຈົ້າການ, ໄດ້ຮັບຄວາມເຊື່ອໝັ້ນຈາກເພື່ອນມິດສາກົນ ແລະ ສືບຕໍ່ເຮັດໃຫ້ ສປປ ລາວ ມີບົດບາດພົ້ນເດັ່ນຂຶ້ນ ໃນເວທີສາກົນ.

**3. 10 ທິດທາງວຽກງານຈຸດສຸມ ແຕ່ລະຂົງເຂດ ດັ່ງນີ້:**

**①. ເພີ່ມທະວີວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຮັບປະກັນສະຖຽນລະພາບດ້ານການເມືອງ ແລະ ຄວາມສະຫງົບສຸກ ຂອງສັງຄົມ.**

- ເພີ່ມທະວີຄວາມສາມາດນໍາພາເດັດຂາດ, ໂດຍກົງ, ຮອບດ້ານຂອງພັກ ຕໍ່ກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

- ສ້າງກໍາລັງໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນ ຕາມທິດທັນເປັນມືອາຊີບ ແລະ ທັນສະໄໝ.

- ຍົກສູງສະຕິຊາດ, ສະຕິລະວັງຕົວ, ກໍາແໜ້ນສະພາບການຜັນແປ ເພື່ອກຽມພ້ອມຮັບມືກັບທຸກສະຖານະການ. ສືບຕໍ່ເປັນຫຼັກແຫຼ່ງແກ່ນສານ ໃນການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ສະກັດກັ້ນ, ປ້ອງກັນ, ແກ້ໄຂບັນຫາອາຊະຍາກໍາທາງໄຊເບີ, ການຄ້າອາວຸດເຖື່ອນ, ການຄ້າມະນຸດ, ການພະນັນອອນລາຍ, ດ້ານການຟອກເງິນ, ການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ ແລະ ອື່ນໆ.

- ສ້າງ ແລະ ປັບປຸງ ພື້ນຖານອຸດສາຫະກໍາປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ຈໍາເປັນຈໍານວນໜຶ່ງ ເພື່ອຮັບປະກັນໃຫ້ແກ່ການປະກອບອາວຸດຍຸດໂທປະກອນ, ພາຫະນະເຕັກນິກ ທີ່ທັນສະ

ໄໝໃຫ້ແກ່ກົມກອງ, ເຫຼົ່າຮົບ ບົນພື້ນຖານເຊີດຊູນ້ຳໃຈເພິ່ງຕົນເອງ, ກູ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ. ຄົ້ນຄວ້າຍຸດທະສາດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ແທດເຖິງ ແລະ ກວ້າງຂວາງກວ່າເກົ່າ ແຕ່ສູນກາງລົງຮອດທ້ອງຖິ່ນ.

- ຍົກລະດັບຂອງສອງກຳລັງ ໃຫ້ມີຄວາມສາມາດຮອບດ້ານ ເພື່ອບັງຄັບບັນຊາກຳລັງຂອງຕົນ ໂດຍ ສົມທົບແໜ້ນກັບພາກສ່ວນຕ່າງໆ ໃນການປະຕິບັດໜ້າທີ່ການຊອກຄົ້ນ, ກູ້ໄພ ແລະ ຊ່ວຍເຫຼືອຜູ້ປະສົບໄພພິບັດ, ເອົາໃຈໃສ່ຊ່ວຍເຫຼືອປະຊາຊົນ ໃນກໍລະນີສຸກເສີນຕ່າງໆ. ສືບຕໍ່ຍົກລະດັບການພົວພັນຮ່ວມມືກັບກຳລັງປະກອບອາວຸດ ປະເທດເພື່ອນມິດຍຸດທະສາດ ໃຫ້ເຂົ້າສູ່ລວງເລິກກວ່າເກົ່າ.

**②. ສືບຕໍ່ສ້າງເສດຖະກິດເອກະລາດ, ເປັນເຈົ້າຕົນເອງ ແລະ ເຊື່ອມໂຍງ ກັບພາກພື້ນ ແລະ ສາກົນ ໃຫ້ເຂັ້ມແຂງ, ນຳພາປະເທດຊາດ ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ຢ່າງໂລ່ງລ່ຽນ ແລະ ຍືນຍົງ (ທີ່ ສປຊ ປະກາດເລີ່ມແຕ່ປີ 2026 ນີ້).**

- ເພີ່ມທະວີການນຳພາ ພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໂດຍເລີ່ມຈາກການສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃຫ້ນັບມື້ນັບເຂົ້າສູ່ລວງເລິກ ແລະ ເຂັ້ມແຂງ.

- ປັບປຸງ, ກໍ່ສ້າງ ແລະ ພັດທະນາ ບັນດາພາກສ່ວນເສດຖະກິດ ຂອງລັດ ໃຫ້ເຂັ້ມແຂງ, ສາມາດເປັນເຈົ້າພາທາງ, ເປັນເຈົ້າຕົນເອງ, ຖືເປັນພື້ນຖານເສດຖະກິດແຫ່ງຊາດ, ເປັນກຳລັງແຮງຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃນໄລຍະໃໝ່.

- ສືບຕໍ່ປະຕິຮູບ ແລະ ພັດທະນາລັດວິສາຫະກິດ ໃຫ້ເຂັ້ມແຂງປະກອບສ່ວນສຳຄັນ ເຂົ້າໃນຕ່ອງໂສ້ການຜະລິດໃນພາກພື້ນ ແລະ ສາກົນ ເທື່ອລະກ້າວ. ສ້າງຫົວໜ່ວຍທຸລະກິດຂອງລັດ ໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະ ຫົວໜ່ວຍທຸລະກິດ ທີ່ມີລັກສະນະຍຸດທະສາດ, ເປັນຄໍຫອຍ, ເປັນສາຍເລືອດຂະໜາດໃຫຍ່ ທີ່ຮັບປະກັນຄວາມໝັ້ນຄົງຂອງຊາດ, ຂອງລະບອບ ໃຫ້ເປັນຮູບປະທຳ.

- ປັບປຸງໂຄງປະກອບຂະແໜງການເສດຖະກິດແຫ່ງຊາດ ໃຫ້ໄປຕາມທິດ ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ນັບມື້ຈະແຈ້ງຂຶ້ນ.

- ກວດກາ ແລະ ກຳນົດຄືນ ຍຸດທະສາດພັດທະນາ ຂອງບັນດາຂະແໜງການຜະລິດ ແລະ ບໍລິການ ດ້ວຍການສົມທົບແໜ້ນ ລະຫວ່າງການສົ່ງເສີມ, ພັດທະນາ ແລະ ຂະຫຍາຍທຸກທ່າແຮງບົ່ມຊ້ອນ.

- ລົງທຶນຢ່າງມີຈຸດສຸມເຂົ້າໃສ່ການສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງ ດ້ານກະສິກຳ-ປ່າໄມ້ຢູ່ເຂດຊົນນະບົດ.

- ສົ່ງເສີມເສດຖະກິດຄອບຄົວ, ພັດທະນາບັນດາຮູບແບບຮ່ວມດຳເນີນທຸລະກິດ-ສະຫະກອນກະສິກຳ, ສ້າງສວນ ແລະ ຟາມຕົວແບບ ຕິດພັນກັບການທ່ອງທ່ຽວ ໃຫ້ນັບມື້ນັບຫຼາຍຂຶ້ນ.

- ສ້າງ ແລະ ຂະຫຍາຍພື້ນຖານອຸດສາຫະກຳ ຫຼື ໂຮງຈັກ-ໂຮງງານ ດ້ານອຸດສາຫະກຳຈຳນວນໜຶ່ງ ເປັນຕົ້ນໂຮງງານປຸງແຕ່ງຜະລິດຕະພັນກະສິກຳ, ໂຮງງານປຸງແຕ່ງແຮ່ທາດ, ເຄມີພັນ, ຝຸ່ນຊີວະພາບ, ຫົວອາຫານລ້ຽງສັດ, ການຜະລິດວັດສະດຸກໍ່ສ້າງ, ເຄື່ອງອຸປະໂພກ-ບໍລິໂພກ.

- ລັດຕ້ອງເປັນເຈົ້າການ ຄຸ້ມຄອງການຂຸດຄົ້ນບໍ່ແຮ່ ຢ່າງຮອບດ້ານ ແລະ ເຂັ້ມງວດກວ່າເກົ່າ ແລະ ສ້າງພະນັກງານຄຸ້ມຄອງ, ຜູ້ຊ່ຽວຊານ, ວິຊາການ ໃນຂະແໜງການກ່ຽວຂ້ອງ ແລະ ມີກົນໄກການ ຄຸ້ມຄອງ ໃຫ້ຄົບຖ້ວນ, ຮັດກຸມເປັນມືອາຊີບ. ລັດຕ້ອງຄຸ້ມຄອງຢ່າງຮັດກຸມ, ເຂັ້ມງວດ ແລະ ເປັນລະບົບ ຕໍ່ກັບແຮ່ທາດພິເສດ ເປັນຕົ້ນແມ່ນ: ແຮ່ຫາຍາກ, ຄຳ, ເພັດ, ພອຍ ແລະ ອື່ນໆ.

- ຕ້ອງພະຍາຍາມແກ້ບັນດາຈຸດອຸດຕັນຜ່ານມາ ໃຫ້ເດັດຂາດ-ຂາດຕົວ ໂດຍສະເພາະ ແມ່ນບັນຫາໜີ້ສິນຄຸມເຄືອ, ການບໍລິຫານການຜະລິດ-ທຸລະກິດ ຂາດປະສິດທິພາບ.

- ສ້າງລະບົບຄວາມໝັ້ນຄົງ ແລະ ຍືນຍົງ ຂອງພະລັງງານໃຫ້ປະກົດເປັນຈິງ ແລະ ຮັບປະກັນສະໜອງໄຟຟ້າພາຍໃນໃຫ້ພຽງພໍ ແລະ ທົ່ວເຖິງ. ພັດທະນາປະເພດສິນຄ້າ ທີ່ເປັນທ່າແຮງຂອງຊາດ (ຍີ່ຫໍ້ກາໝາຍລາວ) ໃຫ້ໄດ້ມາດຕະຖານພາກພື້ນ ແລະ ສາກົນ ເພື່ອຍູ້ແຮງການສົ່ງອອກ ແລະ ຊົມໃຊ້ພາຍໃນຫຼາຍຂຶ້ນ. ໂຄສະນາຜະລິດຕະພັນຂອງລາວທາງສື່ໃຫ້ແຂງແຮງ ດ້ວຍຫຼາຍຮູບຫຼາຍສີ ແລະ ມີຄວາມຍຸຕິທຳຕໍ່ຜູ້ຊົມໃຊ້ ໂດຍປະຕິບັດຕາມທິດ ລາວເຮັດ ລາວໃຊ້ ລາວໄດ້ ລາວຈະເລີນ.

- ພັດທະນາເສດຖະກິດເຂດແຄວ້ນ ໃຫ້ເປັນລະບົບຕໍ່ເນື່ອງ ແລະ ເປັນຮູບປະທຳ ເພື່ອຍູ້ແຮງເສດຖະກິດໃຫ້ເຕີບໂຕໄວ ແລະ ໝັ້ນຄົງ. ພັດທະນານະຄອນຫຼວງວຽງຈັນ ເປັນສູນກາງທີ່ໂດດເດັ່ນດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ຂອງປະເທດ, ເປັນເມືອງອະສະລິຍະດ້ານວັດທະນະທຳ, ສັງຄົມສີວິໄລ ແລະ ເສດຖະກິດທັນສະໄໝເທື່ອລະກ້າວ, ກາຍເປັນຈຸດເຊື່ອມຈອດ ແລະ ເຊື່ອມໂຍງ ດ້ານເສດຖະກິດ-ການຄ້າ ທີ່ສຳຄັນຂອງອະນຸພາກພື້ນອາຊີອາຄະເນ ແລະ ສ້າງແຮງຊ່ວຍໝູນດຶງດູດການພັດທະນາຂອງປະເທດຊາດ ໃຫ້ສູງຂຶ້ນອີກບາດກ້າວໜຶ່ງ.

- ສ້າງແຜນກວມລວມການພັດທະນາເຂດແຄວ້ນ ຂອງແຕ່ລະພາກ ໂດຍສະເພາະ ບັນດານະຄອນ, ເມືອງໃຫຍ່, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ, ແລວເສດຖະກິດຕ່າງໆ. ສ້າງພື້ນຖານໂຄງລ່າງຄົມມະນາຄົມແຕ່ລະພາກ ໃຫ້ນັບມື້ສະດວກ ແລະ ໃຫ້ໄດ້ມາດຕະຖານ.

- ປັບປຸງ ແລະ ຂະຫຍາຍເຄືອຂ່າຍໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃຫ້ທົ່ວເຖິງ, ມີຄຸນນະພາບ ແລະ ທັນສະໄໝ. ບັນດາໂຄງການລະດັບຊາດນັ້ນ ຕ້ອງມີການຊີ້ນຳຕິກລິງຢ່າງລວມສູນ, ມີມາດຕະຖານ, ກົນໄກຄຸ້ມຄອງຢ່າງຮັດກຸມ, ເປັນໂຄງການຕົວແບບ, ມີຜູ້ຮັບຜິດຊອບ ແລະ ກຳນົດເວລາທຶນຮອນລົງທຶນ ແລະ ມາດຕະຖານຜູ້ຈະດຳເນີນການກໍ່ສ້າງໃຫ້ສຳເລັດ ຢ່າງຈະແຈ້ງ.

- ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ແລະ ຄວາມມີວິໄນ ໃນການດຶງດູດການລົງທຶນ ທັງພາຍໃນ ແລະ ຕ່າງປະເທດ, ຄຸ້ມຄອງການລົງທຶນ ຕາມລະບຽບກົດໝາຍ, ຕາມລະບົບທັນສະໄໝ, ຮັບປະກັນຄວາມໂປ່ງໃສ, ວ່ອງໄວ, ຍຸຕິທຳ ແລະ ສາມາດກວດສອບໄດ້.

- ຫັນການຄຸ້ມຄອງການເງິນ, ງົບປະມານ ແລະ ເງິນຕາ ເຂົ້າສູ່ວິໄນເຂັ້ມງວດ ແລະ ມີຄວາມທັນສະໄໝ. ປັບປຸງໂຄງສ້າງ ແລະ ກົນໄກການເກັບລາຍຮັບ ແລະ ການໃຊ້ຈ່າຍງົບປະມານແຫ່ງລັດຄືນໃໝ່.

- ເພີ່ມທະວີການຄຸ້ມຄອງໜີ້ສາທາລະນະ, ຮັບປະກັນຄວາມໝັ້ນຄົງ ແລະ ຄວາມຍືນຍົງ ຂອງລະບົບການເງິນແຫ່ງຊາດ. ຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດ (ປ່າໄມ້, ດິນ, ນໍ້າ, ອາກາດ ແລະ ແຮ່ທາດ) ຢ່າງຍືນຍົງ.

- ສົ່ງເສີມການນຳໃຊ້ເຕັກໂນໂລຊີທີ່ສະອາດ ຕາມມາດຕະຖານສາກົນ ແລະ ຈຳກັດສິ່ງເສດເຫຼືອຂອງໂຮງງານ ແລະ ການຊົມໃຊ້ໃນສັງຄົມຢ່າງຖືກວິທີ. ເພີ່ມທະວີການແກ້ໄຂບັນຫາມົນລະພິດຕ່າງໆ (ດິນ, ນ້ຳ, ອາກາດ) ຢ່າງມີປະສິດທິຜົນ, ຊຸກຍູ້ໃຫ້ທຸກຄົນເຂົ້າໃຈ ແລະ ເຂົ້າຮ່ວມປົກປັກຮັກສາຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

- ປັບປຸງກົນໄກ, ຂັ້ນຕອນ ແລະ ກວດກາການຄຸ້ມຄອງ ແລະ ນຳໃຊ້ທີ່ດິນຂອງລັດໃຫ້ເຂັ້ມງວດ. ເພີ່ມທະວີການຄຸ້ມຄອງ, ປ້ອງກັນ ແລະ ແກ້ໄຂຢ່າງເປັນລະບົບການຈັບຈອງທີ່ດິນຊະຊາຍ, ຫັນການຄຸ້ມຄອງທີ່ດິນສູ່ລະບົບທັນສະໄໝ, ສູ້ຊົນສ້າງຖານລາຍຮັບຈາກທີ່ດິນ ດ້ວຍການອອກໃບຕາດິນໃຫ້ສຳເລັດ ຕາມແຜນການທີ່ວາງໄວ້.

- ຄຸ້ມຄອງ ແລະ ຈັດສັນການນຳໃຊ້ນ້ຳໃຫ້ມີຄວາມສົມດຸນ ແລະ ພຽງພໍກັບ ຄວາມຕ້ອງການຂອງການຜະລິດ ແລະ ດຳລົງຊີວິດ.

- ກຽມຄວາມພ້ອມໃນການປັບຕົວ ຕໍ່ການປ່ຽນແປງດິນຟ້າອາກາດ ແລະ ເສີມຂະຫຍາຍທ່າແຮງການຊື້-ຂາຍສິນເຊື່ອກາກບອນ; ຫັນວຽກງານອຸຕຸນິຍົມ-ອຸທົກກະສາດ ໃຫ້ທັນສະໄໝ ແລະ ໄດ້ມາດຕະຖານສາກົນ. ພັດທະນາວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ ແລະ ຫັນເປັນດີຈີຕອນເປັນຂອດບຸກທະລຸທີ່ສຳຄັນ, ເປັນກຳລັງແຮງຕົ້ນຕໍ ເພື່ອພັດທະນາກຳລັງການຜະລິດທັນສະໄໝ.

- ການຫັນເປັນດີຈີຕອນ ຕ້ອງດຳເນີນຢ່າງເລິກເຊິ່ງ 3 ດ້ານ ທີ່ກ່ຽວພັນເຊິ່ງກັນ ແລະ ກັນ ແບບກາຍອິນຊີ ຄື: ສ້າງເສດຖະກິດດີຈີຕອນ, ສ້າງສັງຄົມດີຈີຕອນ ແລະ ການບໍລິຫານລັດແບບດີຈີຕອນ.

**③. ກໍ່ສ້າງຮາກຖານການເມືອງ ໃຫ້ມີຄວາມເຂັ້ມແຂງ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ, ປັບປຸງອົງການປົກຄອງຂັ້ນທ້ອງຖິ່ນ ໃຫ້ມີຄວາມເປັນເຈົ້າຕົນເອງຮອບດ້ານ.**

**1. ວຽກງານກໍ່ສ້າງຮາກຖານການເມືອງ ຍັງສືບຕໍ່ເປັນມູນເຊື້ອ ແລະ ມາດຕະການຍຸດທະສາດສຳຄັນຂອງພັກເຮົາ.**

- ການກໍ່ສ້າງຮາກຖານການເມືອງ ຂອງພັກເຮົາ ຍາມໃດກໍຕິດພັນກັບຄວາມໝັ້ນຄົງ ຂອງຊາດ, ຂອງລະບອບໃໝ່ ໂດຍຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານເປັນໃຈກາງ ເພື່ອຮັບປະກັນໃຫ້ແກ່ການພັດທະນາ ໄດ້ດຳເນີນໄປຢ່າງເປັນປົກກະຕິ ແລະ ມີຄວາມຕໍ່ເນື່ອງ.

- ຄະນະພັກແຕ່ລະຂັ້ນ ທັງຢູ່ຮາກຖານບ້ານ, ສຳນັກງານ, ອົງການ, ສະຖາບັນການສຶກສາ, ໂຮງຮຽນ, ໂຮງໝໍ, ລັດວິສາຫະກິດ, ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງມີຄວາມຮັບຜິດຊອບການເມືອງໂດຍກົງ ໃນການນຳພາ-ຊີ້ນຳວຽກງານຍຸດທະສາດສຳຄັນນີ້ ໂດຍແມ່ນ ສະຫາຍເລຂາຄະນະພັກ ເປັນຜູ້ຊີ້ນຳໂດຍກົງ, ບໍ່ອາດປ່ອຍໃຫ້ເປັນຕາມມີຕາມເກີດໄດ້.

- ສືບຕໍ່ຫັນລົງກໍ່ສ້າງຮາກຖານການເມືອງ, ສ້າງທ່າສະໜາມປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ຢ່າງແຂງແຮງ ແລະ ໜັກແໜ້ນ; ປັບປຸງເນື້ອໃນ, ຮູບການ ແລະ ວິທີການກໍ່ສ້າງຮາກຖານການເມືອງໃຫ້ໜັກແໜ້ນ, ສົມທົບແໜ້ນ 4 ເນື້ອໃນ ແລະ 4 ຄາດໝາຍ ກັບການພັດທະນາຊົນນະບົດ, ແກ້ໄຂຄວາມທຸກຍາກຂອງປະຊາຊົນ ໃຫ້ປະກົດຜົນເປັນຈິງ; ເປັນເຈົ້າການສະກັດ

ກັ້ນ, ຕ້ານ ແລະ ແກ້ໄຂໜໍ່ແໜງຄວາມບໍ່ສະຫງົບ ທີ່ຈະພາໃຫ້ກະທົບຕໍ່ຄວາມໝັ້ນຄົງທາງດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ, ຄວາມບໍ່ເປັນລະບຽບຮຽບຮ້ອຍທາງສັງຄົມ ເປັນຕົ້ນບັນຫາຢາເສບຕິດ, ອາຊະຍາກຳທຸກຮູບແບບ, ການຄ້າມະນຸດ ແລະ ອື່ນໆ.

**2. ຍູ້ແຮງການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ ໃຫ້ເຂົ້າສູ່ລວງເລິກ.**

- ພັກເຮົາຍາມໃດກໍຖືວຽກງານດັ່ງກ່າວ ແມ່ນໜ້າທີ່ຂອງທົ່ວລະບົບການເມືອງ, ປວງຊົນທັງຊາດ ກໍຄື ການມີສ່ວນຮ່ວມ ຂອງທົ່ວສັງຄົມ, ແມ່ນພື້ນຖານຂອງສະຖຽນລະພາບດ້ານສັງຄົມ-ການເມືອງ ກໍຄື ການຮັບປະກັນການພັດທະນາ ຕາມທິດສີຂຽວ ແລະ ຍືນຍົງ. ຕັ້ງໜ້າຊຸກຍູ້, ສົ່ງເສີມທຸກພາກສ່ວນໃນສັງຄົມ ໃຫ້ປະກອບສ່ວນເຂົ້າໃນການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.

- ຮອດປີ 2030 ອັດຕາສ່ວນຄວາມທຸກຍາກຕາມມາດຕະຖານ ໃຫ້ຫຼຸດລົງຍັງເຫຼືອໜຶ່ງຕົວເລກ, ບົນພື້ນຖານນັ້ນ ກຳນົດວາລະແຫ່ງຊາດ ເພື່ອແກ້ໄຂຄວາມທຸກຍາກ ດ້ວຍການສືບຕໍ່ປະຕິບັດນະໂຍບາຍພິເສດ ແລະ ສະເພາະຕໍ່ເຂດທີ່ມີຄວາມຫຍຸ້ງຍາກ, ຫ່າງໄກສອກຫຼີກ, ຈຸດສຸມຊາຍແດນ, ເຂດທີ່ໝັ້ນເກົ່າ ຂອງການປະຕິວັດ ເພື່ອບຸກທະລຸເຂົ້າໃສ່ການພັດທະນາ ໂຄງລ່າງພື້ນຖານຮັບໃຊ້ການຜະລິດ ແລະ ການດຳລົງຊີວິດ ຂອງປະຊາຊົນ.

- ຍູ້ແຮງຕົວແບບການພັດທະນາ ແບບມີສ່ວນຮ່ວມ ແລະ ເປັນເຈົ້າການຂອງຊຸມຊົນ ໃນການກໍ່ສ້າງ, ສ້ອມແປງເສັ້ນທາງ, ໄຟຟ້າ, ນໍ້າປະປາ, ຊົນລະປະທານ, ໂຮງຮຽນ, ສຸກສາລາ ແລະ ອື່ນໆ ໃຫ້ຫຼາຍຂຶ້ນ, ໃນນີ້ ກໍານົດໃຫ້ຈະແຈ້ງ ອັນໃດແມ່ນລັດເຮັດ, ອັນໃດລັດຮ່ວມກັບປະຊາຊົນ, ອັນໃດໃຫ້ຊຸມຊົນເຮັດ ໂດຍມີການມອບໃຫ້ຊຸມຊົນປຸກລະດົມ, ຂົນຂວາຍ ສ້າງຄວາມເປັນເຈົ້າຕົນ.

**3. ສືບຕໍ່ສ້າງຄວາມເຂັ້ມແຂງ, ເສີມຂະຫຍາຍສິດເປັນເຈົ້າ ໃຫ້ແກ່ທ້ອງຖິ່ນຮາກຖານຫຼາຍຂຶ້ນ.**

- ສ້າງຄວາມເຂັ້ມແຂງ, ເສີມຂະຫຍາຍສິດເປັນເຈົ້າ ໃຫ້ແກ່ທ້ອງຖິ່ນຮາກຖານຫຼາຍຂຶ້ນ ໂດຍສະເພາະ ແກ້ໄຂຂາດຕົວການແບ່ງຂັ້ນຄຸ້ມຄອງ ດ້ານການບໍລິຫານລັດ, ການຄຸ້ມຄອງເສດຖະກິດ-ສັງຄົມ, ການເງິນ, ການລົງທຶນ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ກໍຄື ການແບ່ງຄວາມຮັບຜິດຊອບ, ແບ່ງວຽກ, ພາລະບົດບາດ ລະຫວ່າງຂະແໜງການສູນກາງດ້ວຍກັນ ໃຫ້ຖືກຕ້ອງ, ຈະແຈ້ງ, ມີຄວາມກົມກຽວ ແລະ ບໍ່ກົດໜ່ວງຖ່ວງດຶງກັນ ເຮັດໃຫ້ອົງການປົກຄອງທ້ອງຖິ່ນ ມີຄວາມເປັນເຈົ້າການເພີ່ມຂຶ້ນ, ຍົກສູງຄວາມສາມາດ ໃນການຄຸ້ມຄອງ-ບໍລິຫານລັດ, ຫຼຸດຜ່ອນການເອື່ອຍອີງແຕ່ຂັ້ນສູນກາງ ລົງເປັນກ້າວໆ. ຄົ້ນຄວ້າກົນໄກຕິດຕາມ, ກວດກາ ແລະ ຊຸກຍູ້ເຊິ່ງກັນ ແລະ ກັນ ລະຫວ່າງກະຊວງ, ອົງການ ແລະ ທ້ອງຖິ່ນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ແກ້ໄຂການລ່ວງລະເມີດສິດອຳນາດ, ການລະເຫຼີງຂາດຄວາມຮັບຜິດຊອບ ໃນການປະຕິບັດໜ້າທີ່ວຽກງານ ຢ່າງເດັດຂາດ.

- ປັບປຸງການບໍລິຫານ-ຄຸ້ມຄອງລັດ ຢູ່ຂັ້ນທ້ອງຖິ່ນ ໂດຍສະເພາະ ແມ່ນການສ້າງຕັ້ງຕາແສງໃຫ້ສອດຄ່ອງກັບສະພາບການໃໝ່, ປັບປຸງຮູບແບບການຈັດຕັ້ງ ຂອງບ້ານໃຫ້ເຂັ້ມແຂງ, ປ່ຽນລະບົບຜູ້ບໍລິຫານການປົກຄອງທ້ອງຖິ່ນ ໃນປັດຈຸບັນ ໄປສູ່ຮູບແບບຄະນະກຳມະການປົກຄອງ ແຕ່ລະຂັ້ນ;

ປັບປຸງເນື້ອໃນ, ຮູບການ ແລະ ວິທີການ ສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ຕາແສງ ແລະ ບ້ານເປັນຫົວໜ່ວຍພັດທະນາ.

**④. ຍົກລະດັບການພັດທະນາ ຂົງເຂດວັດທະນະທຳ-ສັງຄົມ ໄລຍະໃໝ່.**

- ສົ່ງເສີມການສຶກສາກ່ອນໄວຮຽນ, ການພັດທະນາການສຶກສາສາມັນ, ອະຊີວະສຶກສາ, ການສຶກສາຊັ້ນສູງ ຕ້ອງເນັ້ນໃສ່ທ່າແຮງ ແລະ ຄວາມໄດ້ປຽບຂອງປະເທດ.

- ປັບປຸງໂຄງການຫຼັກສູດ, ລະບຽບການຄຸ້ມຄອງ, ສຸມໃສ່ສ້າງຖັນແຖວຄູ-ອາຈານ ໃຫ້ໄດ້ມາດຕະຖານດ້ານວິຊາການ ແລະ ຈັມຍາບັນ ການປະລະການຮຽນ-ການສອນ ແລະ ແກ້ໄຂສະພາບຂາດຄູຢູ່ໃນເຂດຊົນນະບົດຫ່າງໄກສອກຫຼີກ.

- ຫັນປ່ຽນລະບົບການສຶກສາສາມັນ ໃນປັດຈຸບັນ ເປັນລະບົບ 6+3+3 ທີ່ເນັ້ນການສ້າງພູມຄຸ້ມກັນດ້ານການຮຽນຮູ້ຂັ້ນພື້ນຖານ ຂອງເດັກນ້ອຍຊັ້ນປະຖົມໃຫ້ສູງຂຶ້ນ.

- ຂະຫຍາຍໂຮງຮຽນສາມັນວິຊາຊີບ ທີ່ມີຄຸນນະພາບທົ່ວປະເທດໃຫ້ຫຼາຍຂຶ້ນ. ກຳນົດການຂະຫຍາຍໂຮງຮຽນສາມັນ ຢູ່ແຂວງ, ເມືອງ, ຕາແສງ ແລະ ຊຸມຊົນບ້ານໃຫ້ສອດຄ່ອງ. ສ້າງການຫັນປ່ຽນຢ່າງແຂງແຮງ ດ້ານການສຶກສາ, ຫັນວຽກງານການສຶກສາຊັ້ນສູງ ເພື່ອສ້າງນະວັດຕະກຳ, ສ້າງຄົນໃຫ້ເປັນມືອາຊີບ, ເນັ້ນໃສ່ການສ້າງຄົນໃນສາຂາວິທະຍາສາດ, ເຕັກໂນໂລຊີຂໍ້ມູນຂ່າວສານ, ວິສະວະກຳ. ເລັ່ງລັດການສ້າງຄູອາຊີວະສຶກສາ ໃຫ້ມີຈຳນວນເພີ່ມຂຶ້ນ ແລະ ຮັບປະກັນດ້ານຄຸນນະພາບ.

- ສົມທົບກັບພາກວິສາຫະກິດ ສ້າງລະບົບຮຽນຄວບຄູ່ (ຮຽນທິດສະດີ 30% ແລະ ພຶດຕິກຳ 70%) ເປັນຕົ້ນໃນຂະແໜງໄຟຟ້າ, ການກະເສດ, ບໍ່ແຮ່, ທາງລົດໄຟ, ການແພດ, ກໍ່ສ້າງ, ກົນຈັກ, ການທ່ອງທ່ຽວ ແລະ ອື່ນໆ ທີ່ເປັນທ່າແຮງຂອງປະເທດ, ເຂດແຄວ້ນ ແລະ ທ້ອງຖິ່ນ.

- ພັດທະນາວຽກງານສາທາລະນະສຸກ ໃຫ້ທັນສະໄໝ ແລະ ມີຄຸນນະພາບສູງຂຶ້ນ.

- ພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມ ສູ່ຄຸນນະພາບໃໝ່.

- ເສີມຂະຫຍາຍຄຸນຄ່າວັດທະນະທຳອັນດີງາມ ຂອງຊາດ, ສ້າງຄວາມສີວິໄລທາງດ້ານວັດຖຸໄປຄຽງຄູ່ກັບ ຄວາມສີວິໄລດ້ານຈິດໃຈ ແລະ ພັດທະນາວຽກງານທ່ອງທ່ຽວ ໃຫ້ມີຄວາມຍືນຍົງ.

**⑤. ອົງການລັດ, ສືບຕໍ່ຍົກສູງປະສິດທິພາບ ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ຕາມທິດສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ.**

- ປັບປຸງການຄຸ້ມຄອງ-ບໍລິຫານລັດຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄຸນນະພາບໃໝ່, ຕ້ອງຮັບປະກັນການບໍລິການຮັບໃຊ້ປະຊາຊົນ, ສັງຄົມ ຢ່າງວ່ອງໄວ, ສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ມີປະສິດທິຜົນ. ອົງການຄຸ້ມຄອງຂອງລັດແຕ່ລະຂັ້ນ, ຕ້ອງຫັນປ່ຽນຂອດປະສານງານໃຫ້ມີຄຸນນະພາບ. ກຳນົດກົນໄກການຫັນແນວທາງຂອງພັກ ເປັນແຜນປະຕິບັດງານ ຂອງລັດຖະບານ ແລະ ທ້ອງຖິ່ນ, ມີການສະຫຼຸບປະເມີນຜົນ ຢ່າງມີວິທະຍາສາດ.

- ປັບປຸງ ແລະ ບູລະນະກົງຈັກ-ການຈັດຕັ້ງ, ກົນໄກ, ລະບຽບການເຄື່ອນໄຫວຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນທ້ອງຖິ່ນ ໃຫ້ສອດຄ່ອງກັບໜ້າທີ່ການເມືອງໃນໄລຍະໃໝ່ ຕາມທິດສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍຂອງປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະ

ຊາຊົນ ພາຍໃຕ້ການນຳພາຂອງພັກ, ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ. ຕ້ອງສ້າງ ແລະ ປັບປຸງກົດໝາຍ ໃຫ້ສອດຄ່ອງກັບສະພາບເງື່ອນໄຂຕົວຈິງ ຂອງປະເທດເຮົາ ແລະ ໃຫ້ປະຊາຊົນໄດ້ມີສ່ວນຮ່ວມໃນການຕິດຕາມ, ກວດກາ ການປະຕິບັດກົດໝາຍ ແລະ ຮັບປະກັນການເຂົ້າເຖິງລະບົບກົດໝາຍ ແລະ ຂະບວນຍຸຕິທຳ, ເພີ່ມຈຳນວນບຸກຄະລາກອນການນຳຂັ້ນສູງຂອງພັກ-ລັດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ອອກສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃຫ້ຫຼາຍຂຶ້ນ, ປັບປຸງກົນໄກການປະສານງານລະຫວ່າງສະພາແຫ່ງຊາດ, ອົງການບໍລິຫານລັດ ແລະ ອົງການໄອຍະການປະຊາຊົນ, ສານປະຊາຊົນ ໃຫ້ມີຄວາມກົມກຽວ ໃນການຈັດຕັ້ງປະຕິບັດ ແລະ ບັງຄັບໃຊ້ກົດໝາຍ ໃຫ້ເຂັ້ມງວດ ແລະ ມີຜົນສັກສິດ.

- ສ້າງຄວາມເຂັ້ມແຂງໃຫ້ລະບົບສານປະຊາຊົນທຸກຂັ້ນ ແນໃສ່ສ້າງຄວາມຍຸຕິທຳ, ທ່ຽງທຳ, ໂປ່ງໃສ, ກວດສອບໄດ້ໃນການພິຈາລະນາຕັດສິນ ແລະ ພິພາກສາຄະດີ ເຮັດໃຫ້ປະຊາຊົນເຊື່ອໝັ້ນ ແລະ ໄວ້ວາງໃຈ ຕໍ່ລະບົບອຳນາດລັດ ກໍຄື ລະບົບການດຳເນີນຄະດີຕາມຂະບວນຍຸຕິທຳ ຢູ່ປະເທດເຮົາ, ສ້າງເງື່ອນໄຂສະດວກໃຫ້ປະຊາຊົນ ເຂົ້າເຖິງຂະບວນການຍຸຕິທຳ ຢ່າງທົ່ວເຖິງ, ບຳລຸງສ້າງພະນັກງານໃນຂົງເຂດການດຳເນີນຄະດີຕາມຂະບວນຍຸຕິທຳ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຈັນຍາບັນ-ຈັນຍາທຳ ທີ່ຜ່ອງໃສ, ມີຄວາມຊຳນິຊຳນານດ້ານວິຊາສະເພາະ. ປັບປຸງລະບົບກົງຈັກການຈັດຕັ້ງອົງການໄອຍະການປະຊາຊົນ ຢູ່ເຂດ, ເມືອງ, ນະຄອນ ໃຫ້ສອດຄ່ອງກັບສະພາບການ ແລະ ເງື່ອນໄຂໃໝ່. ສາມາດປະຕິບັດພາລະບົດບາດຂອງຕົນຢ່າງເຕັມສ່ວນ ເຂົ້າໃນການດຳເນີນການຕິດຕາມ, ກວດກາ ການປະຕິບັດກົດໝາຍ ໃນການສືບສວນ, ສອບສວນ ແລະ ການແກ້ໄຂຄະດີຕາມຂະບວນຍຸຕິທຳຢ່າງຄົບຖ້ວນພາວະວິໄສ, ຖືກຕ້ອງຕາມກົດໝາຍ.

- ປັບປຸງກົນໄກ, ການປະສານງານ, ການປະສານສົມທົບ ຂອງບັນດາອົງການ ໃນການດຳເນີນຂະບວນຍຸຕິທຳ: ເຈົ້າໜ້າທີ່ສືບສວນ-ສອບສວນ, ຕຳຫຼວດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ຂະແໜງຍຸຕິທຳ ແລະ ອົງການກວດກາລັດ ໃຫ້ກົມກຽວ, ໂລ່ງລ່ຽນ ແລະ ເຄື່ອນໄຫວຢ່າງມີປະສິດທິພາບ ບົນພື້ນຖານແນວທາງ, ແຜນນະໂຍບາຍຂອງພັກ, ລັດຖະທຳມະນູນ ແລະ ກົດໝາຍ, ເປັນໃຈກາງ ໃນການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ສິ້ນສຸດຕາມກົດໝາຍ; ຮີບຮ້ອນຈັດຕັ້ງຜັນຂະຫຍາຍລັດຖະທຳມະນູນ ສະບັບປັບປຸງໃໝ່ ແລະ ບັນດາກົດໝາຍທີ່ໄດ້ຮັບຮອງແລ້ວໃຫ້ມີປະສິດທິຜົນ.

**໖. ເສີມຂະຫຍາຍບົດບາດ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມ ໃນພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ.**

- ວຽກງານແນວໂຮມ, ສະຫະພັນນັກຮົບເກົ່າ ແລະ ວຽກງານມະຫາຊົນ ແມ່ນຄວາມຮັບຜິດຊອບໂດຍກົງ ຂອງພັກ, ຄະນະພັກແຕ່ລະຂັ້ນ ເປັນຜູ້ນຳພາຊີ້ນຳຢ່າງເລິກເຊິ່ງຮອບດ້ານ ເຮັດໃຫ້ບັນດາອົງການ ທີ່ເຮັດໜ້າທີ່ດັ່ງກ່າວ ສືບຕໍ່ປະຕິບັດພາລະບົດບາດຕົ້ນຕໍ ໃນການເຕົ້າໂຮມຄວາມສາມັກຄີ, ໂຄສະນາ, ສຶກສາອົບຮົມ, ປຸກລະດົມ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າ, ເພດໄວປະຕິບັດແນວທາງ, ແຜນນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-

ສັງຄົມ ດ້ວຍຄວາມຕື່ນຕົວດ້ານການເມືອງສູງ ປະກອບສ່ວນປົກປັກຮັກສາ ແລະ ສ້າງສາປະເທດຊາດ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ.

- ແນວລາວສ້າງຊາດ ສືບຕໍ່ເປັນໃຈກາງ ໃນການເຕົ້າໂຮມຄວາມສາມັກຄີ ປະຊາຊົນບັນດາເຜົ່າ, ບັນດາເພດໄວ, ສາສະໜາ, ຄົນລາວທີ່ອາໄສຢູ່ຕ່າງປະເທດ ໃຫ້ຫັນໜ້າຄືນສູ່ປິຕຸພູມ ເພື່ອປະກອບສ່ວນສ້າງສາພັດທະນາປະເທດຊາດ, ສືບຕໍ່ສ້າງບ້ານສາມັກຄີປອງດອງ ເພື່ອຮັບປະກັນຄວາມສາມັກຄີເປັນປຶກແຜ່ນ ຢ່າງໜັກແໜ້ນ, ສຶກສາອົບຮົມ, ປຸກລະດົມປະຊາຊົນລາວບັນດາເຜົ່າ ຈັດຕັ້ງການຜະລິດ, ປ່ຽນແປງຊີວິດການເປັນຢູ່ຂອງຕົນໃຫ້ດີຂຶ້ນ, ປົກປ້ອງ ແລະ ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນທີ່ຊອບທຳດ້ວຍກົດໝາຍ; ຕັ້ງໜ້າປະຕິບັດພາລະບົດບາດຕິດຕາມ, ກວດກາສຽງສະທ້ອນ ຂອງສັງຄົມກ່ຽວກັບແນວທາງ, ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກໍຄື ຕໍ່ການເຄື່ອນໄຫວປະຕິບັດພາລະບົດບາດ, ໜ້າທີ່ຂອບເຂດສິດ ຂອງອົງການພັກ-ລັດ ແລະ ສະມາຊິກພັກ, ເຈົ້າໜ້າທີ່, ພະນັກງານ-ລັດຖະກອນ ຢູ່ຂັ້ນຕ່າງໆ.

- ສະຫະພັນກຳມະບານລາວ, ສະຫະພັນແມ່ຍິງລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນເຈົ້າການປັບປຸງການຈັດຕັ້ງຂອງຕົນ ໃຫ້ມີຄວາມກະທັດຮັດ, ໜັກແໜ້ນ, ສາມາດປະຕິບັດໜ້າທີ່ການເມືອງ ໃຫ້ມີປະສິດທິຜົນ, ການເຄື່ອນໄຫວຂອງອົງການຈັດຕັ້ງມະຫາຊົນ ຕ້ອງມີຫຼາຍຮູບ, ຫຼາຍສີ, ຫຼາຍລະດັບ ແລະ ແທດເໝາະກັບເປົ້າໝາຍ ເພື່ອດຶງດູດເອົາມະຫາຊົນ ເຂົ້າໃນການຈັດຕັ້ງ, ເຄື່ອນໄຫວ ປົກປ້ອງຜົນປະໂຫຍດອັນຊອບທຳ ຂອງສະມາຊິກ ແລະ ມະຫາຊົນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

- ສ້າງເງື່ອນໄຂໃຫ້ເຂົາເຈົ້າ ໄດ້ຮັບການພັດທະນາ, ຍົກລະດັບໃນທຸກດ້ານ, ເປັນເຈົ້າການຕິຖອຍ ແລະ ແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນອົງການຈັດຕັ້ງ, ພາຍໃນສະມາຊິກ ກໍຄື ມະຫາຊົນ ທີ່ນອນໃນເປົ້າໝາຍການຄຸ້ມຄອງຂອງຕົນ, ສ້າງຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ຄວາມຈົງຮັກພັກດີ ຕໍ່ປະເທດຊາດ, ຕໍ່ປະຊາຊົນ, ຊຸກຍູ້ວຽກຂະບວນການຢູ່ສູນກາງ ແລະ ທ້ອງຖິ່ນ, ສ້າງແຫຼ່ງບຸກຄະລາກອນທີ່ມີຄຸນນະພາບ, ໂດຍຜ່ານຂະບວນການປະຕິບັດຕົວຈິງຢູ່ຮາກຖານ.

- ອົງການຈັດຕັ້ງສັງຄົມ ສ້າງຕັ້ງຂຶ້ນບົນພື້ນຖານຄວາມຕື່ນຕົວ, ສະໝັກໃຈ, ມີຜົນປະໂຫຍດຮ່ວມກັນ, ຈັດຕັ້ງ ແລະ ເຄື່ອນໄຫວກິດຈະການ, ກິດຈະກຳທາງສັງຄົມ, ສາທາລະນະປະໂຫຍດ ບົນພື້ນຖານແນວທາງ, ແຜນນະໂຍບາຍຂອງພັກ ແລະ ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ, ລະບຽບການ ທີ່ກຳນົດອອກ, ການເຄື່ອນໄຫວຂອງອົງການຈັດຕັ້ງສັງຄົມ ຕ້ອງບົນພື້ນຖານຮັບປະກັນຄວາມສາມັກຄີເປັນປຶກແຜ່ນໃນສັງຄົມ, ມີຫຼາຍຮູບແບບ, ຫຼາຍວິທີການ, ມີເປົ້າໝາຍ ແລະ ຜົນປະໂຫຍດລວມ ໂດຍຖືເອົາຜົນປະໂຫຍດ ຂອງປະເທດຊາດ ແລະ ຂອງປະຊາຊົນ ເປັນກົກ.

**໗. ຕັ້ງໜ້າປະຕິບັດແນວທາງການພົວພັນຮ່ວມມື ກັບຕ່າງປະເທດ ຕາມທິດການທູດປ້ອງກັນເຫດ, ການທູດເສດຖະກິດ ແລະ ບຸກທະລຸ, ເປີດກວ້າງການພົວພັນຮ່ວມມື ດ້ວຍຫຼາຍທິດ, ຫຼາຍຝ່າຍ, ຫຼາຍຮູບແບບ ແລະ ຫຼາຍລະດັບ ຢ່າງຕັ້ງໜ້າ.**

- ສືບຕໍ່ຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ ຕາມທິດນຳຖືການທູດປ້ອງກັນເຫດ, ການທູດເສດຖະກິດ ແລະ ສືບຕໍ່ດຳ

ເນີນການພົວພັນຮ່ວມມືແບບຫຼາຍທິດ ຫຼາຍຝ່າຍ, ຫຼາຍຮູບແບບ ແລະ ຫຼາຍລະດັບ ລະຫວ່າງລັດ ກັບລັດ, ລະຫວ່າງພັກເຮົາ ກັບພັກການເມືອງຂອງປະເທດຕ່າງໆ ແລະ ວຽກງານການທູດປະຊາຊົນ ບົນພື້ນຖານການເຄົາລົບເອກະລາດ, ອຳນາດອະທິປະໄຕເຊິ່ງກັນ ແລະ ກັນ, ຕ່າງຝ່າຍຕ່າງມີຜົນປະໂຫຍດ.

- ສືບຕໍ່ຜັນຂະຫຍາຍ ແນວຄິດຊີ້ນຳ ແລະ ພຶດຕິກຳຕົວຈິງ ຂອງພັກເຮົາ ໃນການເຄື່ອນໄຫວວຽກງານຕ່າງປະເທດ ເພື່ອສ້າງສະພາບແວດລ້ອມສາກົນ ທີ່ເອື້ອອຳນວຍໃຫ້ແກ່ການປະຕິບັດສອງໜ້າທີ່ຍຸດທະສາດ ໂດຍຖືເອົາການສ້າງຄວາມເຂັ້ມແຂງ, ຄວາມເປັນເຈົ້າຕົນເອງ ສົມທົບການຍາດແຍ່ງກຳລັງແຮງຂອງຍຸກສະໄໝ ໃຫ້ກາຍເປັນກຳແຮງສັງລວມເຂົ້າໃນການພັດທະນາ ແລະ ຍົກລະດັບຂີດຄວາມສາມາດແຂ່ງຂັນ ແລະ ການເຊື່ອມໂຍງກັບສາກົນ ຢ່າງເປັນເຈົ້າການ ໂດຍເລີ່ມຈາກຜົນປະໂຫຍດແຫ່ງຊາດຕິດພັນກັບຜົນປະໂຫຍດລວມ ຂອງພາກພື້ນ, ສາກົນ ແລະ ທ່າອ່ຽງຂອງຍຸກສະໄໝ, ຕັ້ງໜ້າຂຸດຄົ້ນທ່າແຮງບົ່ມຊ້ອນ ແລະ ກໍ່ສ້າງບຸກຄະລາກອນ ຮັບປະກັນການເຄື່ອນໄຫວວຽກງານການຕ່າງປະເທດໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ສາມາດປະກອບສ່ວນເຂົ້າໃນການປະຕິບັດພາລະກິດຈຳນວນໜຶ່ງ ໃນພາກພື້ນ ແລະ ສາກົນ.

- ຕັ້ງໜ້າປະຕິບັດພັນທະສາກົນ, ບັນດາສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ. ສືບຕໍ່ເສີມຂະຫຍາຍສາຍພົວພັນມິດພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ, ການເປັນຮຸ້ນສ່ວນຍຸດທະສາດ ກັບ ສສ ຫວຽດນາມ ໃຫ້ເຂົ້າສູ່ລວງເລິກ ໂດຍສະເພາະ ສືບຕໍ່ສູ້ຊົນເຮັດໃຫ້ການພົວພັນຮ່ວມມື ດ້ານເສດຖະກິດ-ການຄ້າ ມີການຂະຫຍາຍຕົວ ຢ່າງຕັ້ງໜ້າຕາມທິດເຊື່ອມໂຍງ-ເຊື່ອມຈອດ ໃຫ້ເປັນຮູບປະທຳ ແລະ ມີປະສິດທິຜົນສູງ; ສືບຕໍ່ເສີມຂະຫຍາຍສາຍພົວພັນ ແລະ ຄູ່ຮ່ວມຍຸດທະສາດຮອບດ້ານ, ໝັ້ນຄົງ, ຍາວນານຕາມທິດ 4 ດີ ກັບ ສປ ຈີນ ຕິດພັນກັບການຈັດຕັ້ງປະຕິບັດແຜນແມ່ບົດ ວ່າດ້ວຍຄູ່ຮ່ວມຊະຕາກຳ ລາວ-ຈີນ ໃຫ້ມີມາດຕະຖານສູງ, ລະດັບສູງ ແລະ ຄຸນນະພາບສູງ; ສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍສາຍພົວພັນມິດຕະພາບ ທີ່ເປັນມູນເຊື້ອ ກັບລາຊະອານາຈັກກຳປູເຈຍ ໃນຖານະທີ່ເປັນປະເທດໃກ້ຄຽງ ທີ່ເປັນຄູ່ຮ່ວມຍຸດທະສາດໝັ້ນຄົງຍາວນານ; ສືບຕໍ່ຮັດແໜ້ນແລະເສີມຂະຫຍາຍສາຍພົວພັນ ທີ່ເປັນມູນເຊື້ອອັນດີງາມ ກັບບັນດາປະເທດສັງຄົມນິຍົມ, ໃຫ້ຄວາມສຳຄັນຕໍ່ຄວາມສຳພັນໃກ້ຊິດ, ສ້າງຄວາມໄວ້ເນື້ອເຊື່ອໃຈ ກັບປະເທດບ້ານໃກ້ເຮືອນຄຽງ ແລະ ປະເທດເພື່ອນມິດອື່ນໆ ຢ່າງສະເໝີຕົ້ນສະເໝີປາຍ; ສືບຕໍ່ຮັດແໜ້ນ ແລະ ເສີມຂະຫຍາຍຄວາມສຳພັນທີ່ເປັນມູນເຊື້ອ ແລະ ຄູ່ຮ່ວມຍຸດທະສາດ ເພື່ອຄວາມໝັ້ນຄົງໃນອາຊີ-ປາຊີຟິກ ກັບສະຫະພັນຣັດເຊຍ; ສືບຕໍ່ຍຶດໝັ້ນ ແລະ ສະໜັບສະໜູນການຮ່ວມມືຫຼາຍຝ່າຍ, ເຄົາລົບກົດບັດສະຫະປະຊາຊາດ ແລະ ສະໜັບສະໜູນການແກ້ໄຂຂໍ້ຂັດແຍ່ງ ໂດຍສັນຕິວິທີ, ລວມທັງການເຄື່ອນໄຫວຢ່າງຕັ້ງໜ້າ ໃນຂອບອາຊຽນ ແລະ ຂອບການຮ່ວມມືອະນຸພາກພື້ນຕ່າງໆ; ຕັ້ງໜ້າເຄື່ອນໄຫວວຽກງານການທູດເສດຖະກິດ ໃຫ້ເປັນຮູບປະທຳ ຕິດພັນກັບການຜັນຂະຫຍາຍທິດນຳ ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ເພື່ອຮັບປະກັນການຫຼຸດພົ້ນອອກຈາກສະຖານະພາບ ປະເທດດ້ອຍພັດທະນາຢ່າງໂລ່ງລ່ຽນ ແລະ ຍືນຍົງ.

- ສືບຕໍ່ເສີມຂະຫຍາຍສາຍພົວພັນ ກັບບັນດາພັກອ້າຍນ້ອງຮ່ວມອຸດົມການສັງຄົມນິຍົມ ໃຫ້ເຂົ້າສູ່ລວງເລິກ, ເປີດກວ້າງການພົວພັນກັບບັນດາພັກການເມືອງ ແລະ ຂະບວນການກ້າວໜ້າ ໃນພາກພື້ນຕ່າງໆຂອງໂລກ ໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ເພື່ອຍົກສູງບົດບາດຂອງພັກປະຊາຊົນປະຕິວັດລາວ ໃນເວທີພາກພື້ນ ແລະ ສາກົນ ໃຫ້ສູງຂຶ້ນກວ່າເກົ່າ; ເພີ່ມທະວີຄວາມເປັນເຈົ້າການ ໃນການເຄື່ອນໄຫວການທູດປະຊາຊົນ ຕິດພັນກັບການທູດການເມືອງ, ການທູດເສດຖະກິດ, ວັດທະນະທຳ-ສັງຄົມ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**໘. ເພີ່ມທະວີບົດບາດ, ຍົກສູງຄວາມສາມາດນຳພາຂອງພັກ, ກໍ່ສ້າງ, ປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ.**

**1. ສ້າງພັກທາງດ້ານການເມືອງ-ແນວຄິດ, ການຈັດຕັ້ງ, ແບບແຜນນຳພາ ແລະ ວຽກງານທິດສະດີ ຂອງພັກ:**

- ເພີ່ມທະວີວຽກງານຄົ້ນຄວ້າທິດສະດີ, ສະຫຼຸບພຶດຕິກຳ ຂອງພັກ, ຄົ້ນຄວ້າທິດສະດີການເມືອງ, ແນວຄິດທິດສະດີ ຂອງພັກ ໃຫ້ເລິ່ງເຊິ່ງຫຼາຍຂຶ້ນ ເພື່ອສະໜອງຂໍ້ມູນໃຫ້ແກ່ການປັບປຸງ ແລະ ບູລະນະແນວທາງຂອງພັກ ໃຫ້ສອດຄ່ອງ ໃນແຕ່ລະໄລຍະຂອງການປະຕິວັດ; ສ້າງຖັນແຖວນັກຄົ້ນຄວ້າທິດສະດີ ແລະ ພຶດຕິກຳຂອງພັກ ໃຫ້ນັບມື້ເພີ່ມຂຶ້ນ ດ້ານປະລິມານ ແລະ ມີຄຸນນະພາບສູງຂຶ້ນ.

ປັບປຸງ, ສ້າງຫຼັກສູດ ແລະ ການສ້າງຖັນແຖວນັກທິດສະດີ, ນັກຄົ້ນຄວ້າ, ນັກວິເຄາະ, ວິໄຈການເມືອງ-ການປົກຄອງ ຕອບສະໜອງຄວາມຕ້ອງການໃໝ່ຂອງພັກ ໃນໄລຍະໃໝ່.

ປະຕິບັດລະບອບການຮໍ່າຮຽນທິດສະດີການເມືອງ-ການປົກຄອງ, ທິດສະດີ-ພຶດຕິກຳ ຂອງພະນັກງານການນຳ ຢ່າງເຂັ້ມງວດ, ປັບປຸງຮູບແບບ, ວິທີການ ໃນການຄົ້ນຄວ້າ, ສິດສອນ ຢູ່ບັນດາສະຖາບັນຄົ້ນຄວ້າ, ສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ, ໂຮງຮຽນການເມືອງ ແລະ ການປົກຄອງ ຢູ່ທ້ອງຖິ່ນ. ເພີ່ມທະວີການພັດທະນາວຽກງານຖະແຫຼງຂ່າວ-ສື່ມວນຊົນ ໃຫ້ເຂັ້ມແຂງ, ໃຫ້ມີຄວາມທັນສະໄໝ, ວ່ອງໄວ, ທັນການ ກາຍເປັນກະບອກສຽງທີ່ຄົມແຫຼມຂອງພັກ ຕິດພັນກັບການຍົກລະດັບວຽກງານໂຄສະນາປະຊາສຳພັນ ດ້ວຍຫຼາຍຮູບຫຼາຍສີ, ມີຄວາມຈັບອົກຈັບໃຈ ແລະ ອຸດົມສົມບູນກວ່າເກົ່າ, ສົ່ງເສີມວຽກຈິງຄົນແທ້, ຜູ້ເຮັດແທ້ທຳຈິງ, ຕົວແບບການພັດທະນາ, ຜົນສຳເລັດການຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກຳ ໃຫ້ສັງຄົມຮັບຊາບ ແລະ ຮຽນຮູ້ຢ່າງກວ້າງຂວາງ. ພ້ອມກັນນັ້ນ ກໍຕອບຕ້ານພວກທີ່ໃສ່ຮ້າຍປ້າຍສີ, ໂຄສະນາບິດເບືອນຄວາມຈິງ ທຳລາຍມ້າງເພ ພັກ, ລັດ ແລະ ປະຊາຊົນ.

- ຍົກສູງປະສິດຜົນ ຂອງວຽກງານແນວຄິດ, ສ້າງຄວາມເປັນເອກະພາບພາຍໃນພັກ, ຄວາມເຫັນດີເປັນເອກະພາບທົ່ວສັງຄົມ; ເດັດດ່ຽວຕໍ່ສູ້ປ້ອງກັນ ແລະ ຕ້ານການເສື່ອມຖອຍທາງດ້ານການເມືອງ-ແນວຄິດ, ຄຸນສົມບັດ, ແບບແຜນດຳລົງຊີວິດ, ບັນດາປະກົດການຫັນປ່ຽນດ້ວຍຕົນເອງ ແລະ ການເຊື່ອມຄຸນປ່ຽນທາດ ຢູ່ພາຍໃນພັກ, ເອົາໃຈໃສ່ຕ້ານ ແລະ ສະກັດກັ້ນທຸກຮູບການສໍ້ລາດບັງຫຼວງ, ສິ່ງຫຍໍ້ທໍ້ອື່ນໆ ແລະ ການລະເມີດລະບຽບວິໄນ.

- ກໍ່ສ້າງ-ບໍາລຸງ ຖັນແຖວພະນັກງານໃນທຸກຂັ້ນ ໂດຍສະເພາະ ແມ່ນພະນັກງານຂັ້ນຍຸດທະສາດ ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ, ມີຄວາມສາມາດ ມີຄວາມເປັນແບບຢ່າງທີ່ດີງາມ ແລະ ໄດ້ຮັບຄວາມເຊື່ອໝັ້ນ ສົມຄູ່ກັບໜ້າທີ່ວຽກງານ. ປັບປຸງນະໂຍບາຍສົ່ງເສີມ, ດຶງດູດຜູ້ທີ່ມີຄວາມຮູ້ຄວາມສາມາດ, ປັບປຸງກົນໄກປ້ອງກັນພະນັກງານ ຜູ້ທີ່ມີຄວາມຮູ້ຄວາມສາມາດ, ມີຄວາມຫ້າວຫັນ, ມີຫົວຄິດປະດິດສ້າງ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຊອບ ເພື່ອຜົນປະໂຫຍດລວມຂອງພັກ, ຂອງຊາດ ແລະ ຂອງປະຊາຊົນ, ພ້ອມດຽວກັນນັ້ນ ກໍປະຕິບັດວິໄນຢ່າງເຂັ້ມງວດ ຕໍ່ຜູ້ລະເມີດກົດລະບຽບພັກ, ສ້າງຄວາມເສື່ອມເສຍໃຫ້ແກ່ກຽດສັກສີ ຂອງພັກ.

- ຍົກສູງບົດບາດການນໍາພາຂອງພັກ, ປັບປຸງແປງໃໝ່ ກົນໄກການນໍາພາ ຂອງພັກຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ໃນນີ້ ເລຂາຄະນະບໍລິຫານງານພັກນະຄອນຫຼວງວຽງຈັນ, ແຂວງ, ນະຄອນ ແລະ ເມືອງ ເປັນການນໍາສູງສຸດ ຂອງທ້ອງຖິ່ນ, ບໍ່ຄວບຕໍາແໜ່ງປະທານຄະນະກໍາມະການປົກຄອງ, ແຕ່ຄວບຕໍາແໜ່ງປະທານສະພາປະຊາຊົນ ໃນດ້ານຫຼັກການ; ກໍານົດກົນໄກ, ລະບອບການສັບຊ້ອນ, ຈັດວາງ, ສັບປ່ຽນບ່ອນປະຈໍາການ ຂອງພະນັກງານການນໍາຫຼັກແຫຼ່ງຢູ່ທ້ອງຖິ່ນ ເປັນຕົ້ນ ຕໍາແໜ່ງເລຂາຄະນະບໍລິຫານງານພັກ, ປະທານຄະນະກໍາມະການປົກຄອງ ແລະ ຫົວໜ້າຂະແໜງການຈໍານວນໜຶ່ງ ເຊັ່ນ: ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ສານປະຊາຊົນ, ໄອຍະການປະຊາຊົນ, ພາສີ, ອາກອນ, ຂົງເຂດກວດສອບ-ກວດກາ ແລະ ອື່ນໆ. ເອົາໃຈໃສ່ນໍາພາຊີ້ນໍາ ກົງຈັກການຈັດຕັ້ງພັກ, ລັດ ທີ່ຖືກປັບປຸງໃຫ້ມີການຜັນຂະຫຍາຍແນວທາງ ຂອງພັກ ແລະ ນະໂຍບາຍຂອງລັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນໂດຍໄວ.

**2. ຍົກສູງກໍາລັງຄວາມສາມາດນໍາພາ ຂອງພັກ, ຄວາມສາມາດກໍາອໍານາດ, ກໍາລັງແຮງສູ້ຮົບຂອງຮາກຖານພັກ:**

ປັບປຸງວຽກງານຮາກຖານພັກ, ອົງການຈັດຕັ້ງພັກແຕ່ລະຂັ້ນ, ຍົກສູງບົດບາດການນໍາພາ ຂອງພັກ ຢູ່ທ້ອງຖິ່ນຮາກຖານ ແລະ ກະຊວງອົງການ, ຫົວໜ່ວຍການຜະລິດທຸລະກິດ ຂອງລັດ; ປັບປຸງບົດບາດການນໍາພາຂອງພັກ ຢູ່ຕາແສງ ແລະ ຊຸມຊົນ ໃຫ້ເຂັ້ມແຂງ ສາມາດຜັນຂະຫຍາຍແນວທາງ, ມະຕິ, ຄໍາສັ່ງຂອງພັກ ຢ່າງມີປະສິດທິຜົນ, ສາມາດຕອບສະໜອງກັບໜ້າທີ່ການເມືອງຂອງພັກ ໃນໄລຍະໃໝ່; ເອົາໃຈໃສ່ຫຼາຍຂຶ້ນຕໍ່ຖັນແຖວຜູ້ເຮັດວຽກງານພັກ-ພະນັກງານ, ນັກຄົ້ນຄວ້າ, ນັກວາງນະໂຍບາຍຂອງພັກ ໃນອົງການຈັດຕັ້ງພັກ, ລັດ ແຕ່ລະຂັ້ນ.

**3. ເພີ່ມທະວີບົດບາດການນໍາພາ ຂອງພັກ ໃນທຸກວຽກງານ, ລວມທັງວຽກງານເສດຖະກິດທີ່ເປັນຄໍາຫອຍ ຂອງຊາດ:**

ເພີ່ມທະວີບົດບາດການນໍາພາ ຂອງພັກ ໃນທຸກວຽກງານ, ລວມທັງວຽກງານເສດຖະກິດທີ່ເປັນຄໍາຫອຍຂອງຊາດ, ຍົກສູງຄວາມສາມາດໃນການຫັນແນວທາງ, ແຜນນະໂຍບາຍຂອງພັກ ເປັນແຜນກວມລວມ, ແຜນດໍາເນີນງານ ແລະ ນໍາພາຊີ້ນໍາການຈັດຕັ້ງປະຕິບັດ, ມີການປະເມີນຜົນຢ່າງເປັນລະບົບ, ມີລະບົບສັບປ່ຽນບ່ອນປະຈໍາການ, ເອົາໃຈໃສ່ປະສິດທິພາບ ແລະ ປະສິດທິຜົນ ຂອງວຽກງານຫຼາຍກວ່າລະບົບອຸປະຖໍາ. ເພີ່ມພະນັກງານຍຸດທະສາດ ເປັນສະມາຊິກສະພາແຫ່ງຊາດ, ຄວບຕໍາແໜ່ງໃນ

ສະພາທ້ອງຖິ່ນ; ແຕ່ງຕັ້ງພະນັກງານຍຸດທະສາດຮັບຜິດຊອບ ຄຸ້ມຄອງ-ບໍລິຫານ ການດຳເນີນທຸລະກິດ, ເປັນປະທານສະພາບໍລິຫານ ໃນລັດວິສາຫະກິດທີ່ເປັນຄໍຫອຍຂອງຊາດ ພ້ອມທັງສ້າງກົນໄກ, ລະບອບ ລະບຽບການນຳພາຂອງພັກ ໃນຫົວໜ່ວຍທຸລະກິດຂອງລັດ ໃຫ້ເຂັ້ມແຂງ ແລະ ເປັນລະບົບ.

**໙. ເພີ່ມທະວີບົດບາດການນຳພາຂອງພັກ ຕໍ່ວຽກງານພະນັກງານ, ສ້າງການຫັນປ່ຽນວຽກງານ ຄຸ້ມຄອງພະນັກງານໃຫ້ມີຄຸນະພາບ.**

- ສ້າງແຜນກຳນົດ, ກໍ່ສ້າງ ແລະ ບຳລຸງພະນັກງານ ໃຫ້ເປັນລະບົບ.
- ທຸກການຈັດຕັ້ງໃນລະບົບການເມືອງ ຂອງລະບອບປະຊາທິປະໄຕປະຊາຊົນ ຕ້ອງສ້າງແຜນ ກຳນົດໃຫ້ຖືກຕ້ອງ.
- ແຜນກຳນົດພະນັກງານ ຕ້ອງຮັບປະກັນໂຄງປະກອບ ດ້ານເພດ, ເຜົ່າ ຢ່າງເໝາະສົມ.
- ປັບປຸງລະບອບການຕີລາຄາ, ເລືອກເຟັ້ນ ແລະ ສັບຊ້ອນ, ຈັດວາງພະນັກງານ ໃຫ້ສອດຄອງ ກັບສະພາບຕົວຈິງ ໃນໄລຍະໃໝ່.
- ປັບປຸງວຽກງານນະໂຍບາຍ ຕໍ່ພະນັກງານ ໃຫ້ສອດຄ່ອງກັບເງື່ອນໄຂໃໝ່.

**໑໐. ເພີ່ມທະວີວຽກງານຕິດຕາມ, ກວດກາ, ການປ້ອງກັນ, ຕ້ານ, ສະກັດກັ້ນ ແລະ ແກ້ໄຂພະຍາດອາຍາສິດ, ການສໍ້ລາດບັງຫຼວງ ໃຫ້ເຂັ້ມແຂງ ແລະ ເຂັ້ມງວດ, ເດັດຂາດ.**

- ຄະນະພັກ, ຄະນະກວດກາ ແຕ່ລະຂັ້ນ ຕ້ອງເພີ່ມທະວີການນຳພາທີ່ເຂັ້ມແຂງ, ແທດເຖິງ ການຕິດຕາມ, ກວດກາ ການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ ຕິດພັນກັບການຕີລາຄາຄວາມຮັບຜິດຊອບການເມືອງ ແລະ ປະເມີນຜົນການປະຕິບັດ ໜ້າທີ່, ວຽກງານຕົວຈິງຂອງພະນັກງານ-ສະມາຊິກພັກ ເປັນໜ້າທີ່ໃຈກາງ ໃນການນຳພາຊີ້ນຳ.
- ຍົກສູງປະສິດທິພາບ ການກວດກາ ແລະ ການຄຸ້ມຄອງລະບຽບວິໄນຂອງພັກ, ເດັດດ່ຽວຕໍ່ສູ້, ຕີຖອຍການລະເມີດລະບຽບວິໄນ ແລະ ປະກົດການອາດຍາສິດ, ເຮັດວຽກແບບຜິວເຜີນ, ບໍ່ຕິດພັນກັບ ການແກ້ໄຂບັນຫາຕົວຈິງ, ແກ້ໄຂຢ່າງທັນການ ປະກົດການສ້າງກຸ່ມກ້ອນເຊື້ອສາຍພາຍໃນພັກ, ການ ສວຍໃຊ້ໜ້າທີ່, ກິດໜ່ວງຖ່ວງດຶງ ເພື່ອຫາຜົນປະໂຫຍດສ່ວນຕົວ, ການຍັກຍອກ ແລະ ການຟຸມເຟືອຍ ງົບປະມານ, ທຶນຮອນ, ຊັບສິນຂອງລັດ, ສ້າງຄວາມເສຍຫາຍໜັກໜ່ວງ ໃຫ້ພັກ, ລັດ ແລະ ປະຊາຊົນ.
- ຄະນະພັກ ແລະ ຄະນະກວດກາ ແຕ່ລະຂັ້ນ ຕ້ອງກຳແໜ້ນການເຄື່ອນໄຫວປະຕິບັດໜ້າທີ່ ກໍຄື ການດຳລົງຊີວິດ ຂອງພະນັກງານແຕ່ລະຂັ້ນ ເພື່ອຫຼີກເວັ້ນປະກົດການຫຍໍ້ທໍ້ ທີ່ສ້າງຜົນສະທ້ອນ ຕໍ່ພະນັກງານ ແລະ ສ້າງຄວາມເສື່ອມເສຍຕໍ່ພັກ, ສ້າງຄວາມເສຍຫາຍດ້ານຊັບສິນ, ທຶນຮອນຂອງການຈັດຕັ້ງ, ຂອງປະເທດຊາດ ແລະ ປະຊາຊົນ. ເດັດຂາດ, ເຂັ້ມງວດ ແລະ ຄວາມຈິງຈັງ ໃນການແກ້ໄຂທຸກການລະເມີດລະບຽບວິໄນ ຂອງພັກ, ກົດໝາຍ ຂອງລັດ ໃນຖັນແຖວພະນັກງານ-ລັດຖະກອນ ທຸກລະດັບ.
- ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສາມາດ ໃນການເຄື່ອນໄຫວປະຕິບັດໜ້າທີ່ຂອງ ຄະນະວິໄນຂອງພັກ. ປັບປຸງຮູບການ, ວິທີການກວດກາ ສືບຕໍ່ກວດກາບັນດາເປົ້າໝາຍທີ່ພວມປະຕິບັດ ໃຫ້ສຳເລັດໂດຍໄວ ແລະ ດຳເນີນການກວດກາເປົ້າໝາຍໃໝ່ ທີ່ສັງຄົມ, ການຈັດຕັ້ງພວມເລັ່ງຫວງ ໂດຍຖືເອົາການກວດກາປົກກະຕິດ້ານພັກ-ດ້ານລັດ ເລີ່ມແຕ່ຫົວທີ ເປັນຕົ້ນຕໍ ແລະ ໃຫ້ແຂງແຮງ, ເອົາ

ການກວດກາຕາມ ຄຳສັ່ງ ແລະ ກວດກາຕາມເຫດການເກີດຂຶ້ນ ຫຼື ເມື່ອມີປະກົດການລະເມີດວິໄນ, ຝ່າຝືນກົດໝາຍເປັນສຳຄັນ, ສົມທົບການກວດກາລະບຽບວິໄນຂອງພັກ ກັບການກວດກາວຽກງານບໍລິຫານລັດ, ຕ້ານການສໍ້ລາດບັງຫຼວງ.

- ສ້າງ ແລະ ປັບປຸງ ບັນດານິຕິກຳ ໃຕ້ກົດໝາຍກ່ຽວກັບການກວດກາ, ນັບທັງການປັບປຸງ ແລະ ສ້າງນິຕິກຳທີ່ຈຳເປັນ ທີ່ກຳນົດໃຫ້ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ ເຂົ້າຮ່ວມໃນການຕິດຕາມ, ກວດກາ ການປະຕິໜ້າທີ່ ຂອງຄະນະພັກ, ບັນດາອົງການອຳນາດລັດ, ສະມາຊິກພັກ, ພະນັກງານ-ລັດຖະກອນ ໃນການປະຕິບັດແນວທາງ, ແຜນນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

- ການແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງ ທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງຂອງພັກ-ລັດຂັ້ນຕ່າງໆ. ເພີ່ມທະວີການນຳພາຊີ້ນຳ ແລະ ຍົກສູງບົດບາດ ຂອງສື່ມວນຊົນ ເຜີຍແຜ່ຜົນຂອງການກວດກາ ແລະ ການແກ້ໄຂຜົນຂອງການກວດກາ ໃຫ້ທົ່ວສັງຄົມ ໄດ້ຮັບຮູ້.ຍົກລະດັບຄວາມຮູ້, ຄວາມສາມາດ, ທັກສະດ້ານວິຊາສະເພາະວຽກງານ ຕິດຕາມກວດກາ, ຕ້ານ, ສະກັດກັ້ນ ການສໍ້ລາດບັງຫຼວງ ໃຫ້ແກ່ພະນັກງານທີ່ເຮັດວຽກງານກວດກາ ຢູ່ແຕ່ລະຂັ້ນ ໂດຍສົມທົບແໜ້ນ ລະຫວ່າງການບຳລຸງຍົກລະດັບດ້ານທິດສະດີ, ຫຼັກວິຊາການ ກັບການປະຕິບັດຕົວຈິງຢູ່ທ້ອງຖິ່ນ, ຮາກຖານ ກໍຄື ການສົ່ງໄປບຳລຸງສ້າງ ນຳພັກອ້າຍນ້ອງ ແລະ ປະເທດເພື່ອນມິດຕ່າງໆ.

**4. ກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ: ໄດ້ຮັບຮອງເອົາແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ X (2026-2030) ໂດຍກຳນົດ 6 ເປົ້າໝາຍໃຫຍ່ ຄື:**

**①. ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ດ້ວຍການນຳໃຊ້ທ່າແຮງ ເພື່ອເຮັດໃຫ້ເສດຖະກິດ ມີສະຖຽນລະພາບ ແລະ ຂະຫຍາຍຕົວ ຢ່າງຕໍ່ເນື່ອງ, ມີຄຸນະພາບ, ໝັ້ນທ່ຽງ ແລະ ຍືນຍົງ (ມີ 6 ແຜນວຽກຈຸດສຸມ):**

- ແຜນວຽກຈຸດສຸມທີ 1: ນຳໃຊ້ທ່າແຮງ ເພື່ອຍູ້ແຮງເສດຖະກິດໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ, ມີຄວາມເຂັ້ມແຂງ ແລະ ມີຄຸນນະພາບສູງຂຶ້ນ.

- ແຜນວຽກຈຸດສຸມທີ 2: ພັດທະນາເສດຖະກິດມະຫາພາກໃຫ້ມີຄວາມເຂັ້ມແຂງ ແລະ ໝັ້ນທ່ຽງ.

- ແຜນວຽກຈຸດສຸມທີ 3: ຍົກສູງປະສິດທິພາບການລົງທຶນ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ.

- ແຜນວຽກຈຸດສຸມທີ 4: ພັດທະນາຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໄປສູ່ຄຸນນະພາບ ໃໝ່ໃຫ້ມີຄວາມເຂັ້ມແຂງ ແລະ ສາມາດແຂ່ງຂັນກັບພາກພື້ນ ແລະ ສາກົນ.

- ແຜນວຽກຈຸດສຸມທີ 5: ພັດທະນາລັດວິສາຫະກິດ ແລະ ເສດຖະກິດລວມໝູ່ຂອງປະຊາຊົນ ໃຫ້ມີຄຸນນະພາບ ແລະ ມີຄວາມເຂັ້ມແຂງ.

- ແຜນວຽກຈຸດສຸມທີ 6: ພັດທະນາເສດຖະກິດດີຈິຕອນໃຫ້ມີຄວາມເຂັ້ມແຂງ ເພື່ອຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວທີ່ຍືນຍົງ.

**②. ພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບສູງຂຶ້ນ, ສາມາດຄົ້ນຄວ້າ ແລະ ນຳໃຊ້ວິທະຍາສາດ-ເຕັກໂນໂລຊີ ທີ່ທັນສະໄໝ (ມີ 4 ແຜນວຽກຈຸດສຸມ):**

- ແຜນວຽກຈຸດສຸມທີ 1: ພັດທະນາການສຶກສາໃຫ້ມີຄຸນນະພາບ ເພື່ອຮອງຮັບການພັດທະນາຂອງປະເທດຊາດ.

- ແຜນວຽກຈຸດສຸມທີ 2: ພັດທະນາວຽກງານສາທາລະນະສຸກ ແລະ ການບໍລິການດ້ານສາທາລະນະສຸກ ໃຫ້ມີຄຸນນະພາບ ແລະ ທົ່ວເຖິງ.

- ແຜນວຽກຈຸດສຸມທີ 3: ພັດທະນາສີມືແຮງງານ ໃຫ້ໄດ້ປະລິມານ ແລະ ຄຸນນະພາບ ເພື່ອຕອບສະໜອງ ຄວາມຕ້ອງການພັດທະນາ.

- ແຜນວຽກຈຸດສຸມທີ 4: ພັດທະນາບຸກຄະລາກອນຂອງພາກລັດ ໃຫ້ມີຄຸນນະພາບສູງຂຶ້ນ.

**③. ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນ ໃຫ້ດີຂຶ້ນ, ຕົວເມືອງ ແລະ ເຂດຊົນນະບົດ ໄດ້ຮັບການພັດທະນາ ຢ່າງສົມດູ່ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ໃຫ້ຫຼຸດລົງເທື່ອລະກ້າວ (ມີ 6 ແຜນວຽກຈຸດສຸມ):**

- ແຜນວຽກຈຸດສຸມທີ 1: ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ມີຄຸນນະພາບດີຂຶ້ນ.

- ແຜນວຽກຈຸດສຸມທີ 2 ປັບປຸງວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ໃຫ້ທົ່ວເຖິງ ແລະ ມີຄຸນນະພາບສູງຂຶ້ນ.

- ແຜນວຽກຈຸດສຸມທີ 3: ສົ່ງເສີມ ແລະ ພັດທະນາໄວໜຸ່ມ, ແມ່ຍິງ, ເດັກ ແລະ ຄວາມສະເໝີພາບຍິງ-ຊາຍ ໃຫ້ມີຄຸນນະພາບດີຂຶ້ນ.

- ແຜນວຽກຈຸດສຸມທີ 4: ພັດທະນາວຽກງານຖະແຫຼງຂ່າວ ໃຫ້ທັນສະໄໝ ແລະ ວ່ອງໄວ, ສົ່ງເສີມວັດທະນະທຳ ທີ່ເປັນເອກະລັກຂອງຊາດ, ກ້າວໜ້າ ແລະ ສ້າງໃຫ້ສັງຄົມມີຄວາມສາມັກຄີເປັນປຶກແຜ່ນ ແລະ ສີວິໄລ.

- ແຜນວຽກຈຸດສຸມທີ 5: ປັບປຸງລະບົບປະກັນສັງຄົມ-ປົກປ້ອງສັງຄົມ ໃຫ້ກວ້າງຂວາງ ແລະ ມີຄຸນນະພາບ.

- ແຜນວຽກຈຸດສຸມທີ 6: ແກ້ໄຂບັນຫາລະເບີດບໍ່ທັນແຕກ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບຜົນກະທົບຈາກລະເບີດບໍ່ທັນແຕກ ໃຫ້ດີຂຶ້ນເທື່ອລະກ້າວ.

**④. ປົກປັກຮັກສາ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃຫ້ມີຄວາມຍືນຍົງ ແລະ ສາມາດກຽມພ້ອມຮັບມື ກັບການປ່ຽນແປງດິນຟ້າອາກາດ ແລະ ໄພພິບັດຕ່າງໆ (ມີ 3 ແຜນວຽກຈຸດສຸມ):**

- ແຜນວຽກຈຸດສຸມທີ 1: ຄຸ້ມຄອງ ແລະ ນຳໃຊ້ຊັບພະຍາກອນທຳມະຊາດປ່າໄມ້, ທີ່ດິນ, ນໍ້າ ແລະ ແຮ່ທາດ ຢ່າງມີແຜນການ, ປະຢັດ, ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ມີຄວາມຍືນຍົງ.

- ແຜນວຽກຈຸດສຸມທີ 2: ສົ່ງເສີມວຽກງານການເຕີບໂຕສີຂຽວ ແລະ ວຽກງານການແກ້ໄຂບັນຫາປ່ຽນແປງດິນຟ້າອາກາດ ເພື່ອຫຼຸດຜ່ອນ ແລະ ເພີ່ມການດູດຊັບທາດອາຍເຮືອນແກ້ວ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ແລະ ກວ້າງຂວາງ.

- ແຜນວຽກຈຸດສຸມທີ 3: ເພີ່ມທະວີການປ້ອງກັນ, ການຄວບຄຸມ ແລະ ການຟື້ນຟູຫຼັງໄພພິບັດຕ່າງໆ.

**⑤. ການເຊື່ອມໂຍງ-ເຊື່ອມຈອດ ພາກພື້ນ ແລະ ສາກົນ ຢ່າງກວ້າງຂວາງ ແລະ ມີປະສິດທິຜົນ (ມີ 4 ແຜນວຽກຈຸດສຸມ):**

- ແຜນວຽກຈຸດສຸມທີ 1: ພັດທະນາໂຄງລ່າງພື້ນຖານທີ່ສາມາດເຊື່ອມຈອດ-ເຊື່ອມໂຍງພາຍໃນ, ພາກພື້ນ ແລະ ສາກົນ ເພື່ອເອື້ອອຳນວຍໃຫ້ແກ່ການຜະລິດ, ການບໍລິການ, ການຄ້າ ແລະ ການລົງທຶນ.

- ແຜນວຽກຈຸດສຸມທີ 2: ເສີມຂະຫຍາຍການພົວພັນຮ່ວມມື, ການເຊື່ອມໂຍງການຄ້າ ແລະ ການລົງທຶນ ກັບພາກພື້ນ ແລະ ສາກົນ ຢ່າງຕັ້ງໜ້າ ແລະ ກວ້າງຂວາງຂຶ້ນກວ່າເກົ່າ.

- ແຜນວຽກຈຸດສຸມທີ 3: ພັດທະນາເຂດແຄວ້ນ ແລະ ທ້ອງຖິ່ນ ໃຫ້ມີຄວາມສົມດຸນ, ເຂັ້ມແຂງ ແລະ ສອດຄ່ອງກັບທ່າແຮງບົ່ມຊ້ອນ.

- ແຜນວຽກຈຸດສຸມທີ 4: ພັດທະນາຕົວເມືອງ ແລະ ເຂດເສດຖະກິດພິເສດ ໃຫ້ກາຍເປັນຖານການຜະລິດ ການລົງທຶນ, ການຄ້າ ແລະ ການທ່ອງທ່ຽວ ເພື່ອເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**⑥. ການຄຸ້ມຄອງ-ບໍລິຫານລັດ ໃຫ້ມີປະສິດທິພາບ, ການເມືອງມີສະຖຽນລະພາບ, ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ຍຸຕິທຳ ແລະ ສີວິໄລ (ມີ 3 ແຜນວຽກຈຸດສຸມ):**

- ແຜນວຽກຈຸດສຸມທີ 1: ຍົກສູງປະສິດທິພາບການປົກຄອງ-ການຄຸ້ມຄອງບໍລິຫານລັດ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ເຂັ້ມງວດຕາມກົດໝາຍ ແລະ ແລະ ວຽກງານ 3 ສ້າງ ໃຫ້ເຂົ້າສູ່ລວງເລິກ ແລະ ປະຕິບັດຕົວຈິງຢ່າງມີປະສິດທິຜົນສູງ.

- ແຜນວຽກຈຸດສຸມທີ 2: ປັບປຸງກົນໄກ, ລະບຽບການປະສານງານລະຫວ່າງ ພາກລັດດ້ວຍກັນ ໃຫ້ມີຄວາມເປັນເອກະພາບ ແລະ ວ່ອງໄວຂຶ້ນ.

- ແຜນວຽກຈຸດສຸມທີ 3: ຮັບປະກັນໃຫ້ມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ, ສັງຄົມມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

**(ລະອຽດມີເອກະສານຕ່າງຫາກ).**

**IV.** ກອງປະຊຸມໃຫຍ່ ໄດ້ເປັນເອກະພາບໃນລະດັບສູງ ຮັບຮອງເອົາກົດລະບຽບຂອງພັກ ສະບັບປັບປຸງ ເຊິ່ງເປັນທຳມະນູນ, ແມ່ນແນວທາງການຈັດຕັ້ງ ແລະ ການເຄື່ອນໄຫວຂອງພັກ ທີ່ໄດ້ຮັບການບູລະນະ ໃຫ້ສອດຄ່ອງກັບໂຄງການການເມືອງ, ແນວທາງການເມືອງ ທີ່ກອງປະຊຸມໃຫຍ່ຄັ້ງນີ້ ວາງອອກ ໂດຍສະເພາະ ການສ້າງພັກໃຫ້ເປັນພັກທີ່ມີການຈັດຕັ້ງເຂັ້ມແຂງ, ມີຄວາມສາມັກຄີເປັນເອກະພາບໜັກ ແໜ້ນທາງດ້ານມານະຈິດ ແລະ ການກະທຳ, ມີການຄຸ້ມຄອງທີ່ເຂັ້ມງວດ ດ້ວຍລະບຽບວິໄນ

ຢ່າງເຄັ່ງຄັດ. ສ້າງພັກໃຫ້ປອດໃສຂາວສະອາດ ໂດຍມີຄວາມເດັດຂາດ, ເຂັ້ມງວດ ໃນການປ້ອງກັນ, ຕ້ານ, ສະກັດກັ້ນ, ແກ້ໄຂ ແລະ ກຳຈັດປັດເປົ່າ ພະຍາດອາຍາສິດ, ປະກົດການຫຍໍ້ທໍ້ ແລະ ການສໍ້ລາດບັງຫຼວງ.

**(ລະອຽດມີເອກະສານຕ່າງຫາກ).**

**V.** ກອງປະຊຸມໃຫຍ່ ໄດ້ເລືອກຕັ້ງເອົາຄະນະບໍລິຫານງານສູນກາງພັກ ຊຸດໃໝ່ (ສະໄໝທີ XII) ທີ່ມີການສົມທົບຢ່າງກົມກຽວ ຂອງໂຄງປະກອບບຸກຄະລາກອນ ທີ່ເໝາະສົມ ລະຫວ່າງຮຸ່ນຄົນ, ອາຍຸກະສຽນ, ເພດ, ເຜົ່າ, ບັນລຸໄດ້ຕາມມາດຕະຖານ ແລະ ເງື່ອນໄຂ ທີ່ວາງອອກ, ເຊິ່ງປະກອບດ້ວຍ ກຳມະການສົມບູນ 73 ສະຫາຍ ແລະ ກຳມະການສຳຮອງ 15 ສະຫາຍ ເພື່ອສືບຕໍ່ແບກຫາບພາລະກິດປະຕິວັດ ໃນອີກ 5 ປີຕໍ່ໜ້າ, ທັງເປັນຫຼັກແຫຼ່ງແກ່ນສານ ແຫ່ງຄວາມສາມັກຄີເປັນເອກະພາບ ພາຍໃນພັກ ແລະ ໃນສັງຄົມ, ນຳພາຊີ້ນຳການຈັດຕັ້ງປະຕິບັດ ມະຕິ XII ຂອງພັກ ໃຫ້ບັນລຸຄາດໝາຍ ທີ່ວາງໄວ້.

ກອງປະຊຸມຄົບຄະນະ ຄັ້ງປະຖົມມະລຶກ ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XII ຍັງໄດ້ເປັນເອກະພາບ ເລືອກຕັ້ງກຳມະການກົມການເມືອງສູນກາງພັກ, ຈຳນວນ 13 ສະຫາຍ; ເລືອກເອົາກຳມະການຄະນະເລຂາທິການສູນກາງພັກ ຈຳນວນ 11 ສະຫາຍ. ກອງປະຊຸມໄດ້ມອບໝາຍໃຫ້ **ສະຫາຍ ທອງລຸນ ສີສຸລິດ** ເປັນເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ ຕື່ມອີກວາລະໜຶ່ງ; ເລືອກເອົາ **ສະຫາຍ ວິໄລ ຫຼ້າຄຳຟອງ** ເປັນຜູ້ປະຈຳການ ຄະນະເລຂາທິການສູນກາງພັກ ແລະ ເລືອກເອົາ **ສະຫາຍ ວັນໄຊ ພອງສະຫວັນ** ເປັນປະທານຄະນະກວດກາສູນກາງພັກ.

**VI. ບາງມາດຕະການຍູ້ແຮງການປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ**

- ແຕ່ນີ້ຮອດປີ 2030 ຕ້ອງເດັດດ່ຽວຍຶດໝັ້ນ ແລະ ຜັນຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານມີຫຼັກການ ຂອງພັກ ດ້ວຍການສືບຕໍ່ບຸກທະລຸທັງສີ່ດ້ານ ໃຫ້ແຂງແຮງ, ເລິກເຊິ່ງ ແລະ ເປັນຮູບປະທຳ.

- ສືບຕໍ່ເຊື່ອມສານ ແລະ ຜັນຂະຫຍາຍ-ຕໍ່ຍອດ ວຽກງານຈຸດສຸມ ໃນວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກ ດ້ານເສດຖະກິດ-ການເງິນ (2022-2025) ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ X ໃຫ້ກາຍເປັນແຜນປົກກະຕິ ເພື່ອຊີ້ນຳການຈັດຕັ້ງປະຕິບັດໃຫ້ເຂົ້າສູ່ລວງເລິກ, ມີປະສິດທິຜົນ ແລະ ໃຫ້ຂາດຕົວ ໃນບາງດ້ານ.

- ປະຕິບັດຢ່າງເດັດດ່ຽວ 3 ມາດຕະການສຳຄັນ, ເລັ່ງດ່ວນ ດັ່ງນີ້:

**1. ປະຕິຮູບລະບອບ-ລະບຽບການຕ່າງໆ ໃຫ້ໂປ່ງໃສ, ຫຼຸດຜ່ອນຂອດຂັ້ນ.**

- ຍົກສູງປະສິດທິພາບ ແລະ ຄວາມສາມາດ ໃນການບໍລິຫານປະເທດ ຕິດພັນກັບການຊຸກຍູ້ການຫັນເປັນທັນສະໄໝ, ຫັນເປັນດີຈີຕອນ.

- ການແບ່ງຂັ້ນຄຸ້ມຄອງ, ແບ່ງສິດ ໃຫ້ຈະແຈ້ງ, ຂາດຕົວ.

- ສ້າງສະພາບແວດລ້ອມການລົງທຶນ, ການດຳເນີນການຜະລິດ-ທຸລະກິດ ໃຫ້ມີຄວາມສະດວກ, ວ່ອງໄວ.

- ສ້າງໃຫ້ມີຄວາມສາມາດສູງຂຶ້ນ ໃນການແຂ່ງຂັນ.

**2. ປຸກລະດົມ ແລະ ຍູ້ແຮງ ຂະບວນການພັດທະນາປະເທດຊາດ ໃຫ້ຂຶ້ນສູ່ລະດັບສູງ.**

- ຍົກສູງຈິດໃຈເອກະລາດ, ຄວາມເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ.
- ບຸກບືນສູ້ຊົນ ເຮັດໃຫ້ປະຊາຊົນຮູ້ຫາມາຫາກິນແບບໃໝ່, ມີວິຖີຊີວິດແບບໃໝ່ກ້າວຂຶ້ນ.
- ສ້າງໃຫ້ວິສາຫະກິດ ຂອງລັດ ແລະ ເອກະຊົນເຂັ້ມແຂງ, ຮັ່ງມີຂຶ້ນ.
- ຍົກສູງຄຸນນະພາບ ຂອງແຫຼ່ງຊັບພະຍາກອນມະນຸດ.
- ນໍາພາຊຸກຍູ້ການປະຕິບັດແນວທາງ ການກໍ່ສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ ຢ່າງແຂງແຮງ.
- ສ້າງທ່ວງທ່າການພັດທະນາທີ່ຍືນຍົງ ແລະ ເຊື່ອມໂຍງກັບສາກົນ.
- ຫັນປ່ຽນຈາກສັງຄົມຊົມໃຊ້ ໄປສູ່ສັງຄົມແຫ່ງການຜະລິດ ໃຫ້ໄດ້ເປັນຮູບປະທໍາ.

**3. ປ່ຽນແປງໃໝ່ຢ່າງຮອບດ້ານ ວຽກງານຄຸ້ມຄອງ.**

- ຍົກສູງປະສິດທິຜົນ ການຂຸດຄົ້ນ ແລະ ນໍາໃຊ້ແຫຼ່ງຊັບພະຍາກອນທໍາມະຊາດ ເປັນຕົ້ນແມ່ນໃນຂົງເຂດບໍ່ແຮ່, ຊັບພະຍາກອນນໍ້າ, ທີ່ດິນ ໃຫ້ກາຍເປັນການຜະລິດ ທີ່ຍືນຍົງ.
- ຕັ້ງໜ້າຜະລິດພະລັງງານໄຟຟ້າ ດ້ວຍຫຼາຍທາງເລືອກ ລວມທັງພະລັງງານນໍ້າ, ແສງຕາເວັນ, ລົມ ແລະ ພະລັງງານນິວເຄຼຍ ເພື່ອຊົມໃຊ້ພາຍໃນ ແລະ ສົ່ງອອກ.
- ເພີ່ມທະວີການບໍລິຫານທີ່ດີ, ສ້າງຄວາມໂປ່ງໃສ, ຕ້ານ ແລະ ສະກັດກັ້ນ ການສໍ້ລາດບັງຫຼວງ.
- ອັດຊ່ອງຫວ່າງການຮົ່ວໄຫຼ, ເພີ່ມແຫຼ່ງລາຍຮັບງົບປະມານ ເພື່ອສ້າງກໍາລັງແຮງ ໃຫ້ແກ່ການຊຸກຍູ້ ການພັດທະນາເສດຖະກິດ-ສັງຄົມ ໃຫ້ໄວຂຶ້ນ, ໝັ້ນທ່ຽງ ແລະ ມີຄວາມຍືນຍົງ.

# ຫົວຂໍ້ວຽກງານບຸລິມະສິດ
# ທີ່ຈະຄົ້ນຄວ້າສຳມະນາ ເພື່ອອອກເປັນມະຕິ
# ຄົບຄະນະບໍລິຫານງານສູນກາງພັກ ສະໄໝທີ XII ຂອງພັກ

1. ການສ້າງຍຸດທະສາດແນວຫຼັງ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການພັດທະນາ ຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຂອງປະຊາຊົນ.

2. ບຸກທະລຸການພັດທະນາວິທະຍາສາດ, ເຕັກໂນໂລຊີ, ປະດິດສ້າງ ແລະ ຫັນເປັນດີຈີຕອນ.

3. ການພັດທະນາຊັບພະຍາກອນມະນຸດ ທີ່ມີຄຸນນະພາບ ຕອບສະໜອງການພັດທະນາ ໃນເງື່ອນໄຂໃໝ່.

4. ນະໂຍບາຍກໍ່ສ້າງ, ຄຸ້ມຄອງ, ນຳໃຊ້ປັນຍາຊົນ, ນັກຄົ້ນຄວ້າ, ນັກວິທະຍາສາດ, ຄູອາຈານ, ແພດໝໍ ຕອບສະໜອງການພັດທະນາ ໃນເງື່ອນໄຂໃໝ່.

5. ຍົກລະດັບການແກ້ໄຂຄວາມທຸກຍາກ ຂອງປະຊາຊົນ ເປັນວາລະແຫ່ງຊາດ.

6. ການຕ້ານ, ສະກັດກັ້ນ, ປ້ອງກັນ ແລະ ແກ້ໄຂພະຍາດອາດຍາສິດ, ການສໍ້ລາດບັງຫຼວງ, ປະກົດການຫຍໍ້ທໍ້ ແລະ ການຟຸມເຟືອຍ ໃນກົງຈັກການຈັດຕັ້ງ.

7. ການແບ່ງຂັ້ນຄຸ້ມຄອງ ລະຫວ່າງສູນກາງ ກັບທ້ອງຖິ່ນ ໃນຂົງເຂດການເງິນ, ການລົງທຶນ, ທີ່ດິນ.

8. ການຊຸກຍູ້, ສົ່ງເສີມ ແລະ ພັດທະນາເສດຖະກິດເອກະຊົນ ໃນເງື່ອນໄຂໃໝ່.

9. ການປະຕິຮູບລະບອບເງິນເດືອນ, ເງິນບໍານານ, ເງິນອຸດໜູນຄ່າຄອງຊີບ ຕໍ່ພະນັກງານ.

10. ເພີ່ມທະວີວຽກງານການທູດເສດຖະກິດ ໃຫ້ແຂງແຮງ, ຕິດພັນກັບການຍົກສູງຄວາມເປັນເຈົ້າຕົນເອງ.